ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2016

ແຜນຈັດປະສົບການ ໜ່ວຍຄອບຄົວຂອງຂ້ອຍ ຊັ້ນອະນຸບານສຶກສາປີທີ 3 2016

ແຜນຈັດປະສົບການ

# ໜ່ວຍຄອບຄົວຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 3



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

# ແຜນຈັດປະສົບການ
# ໜ່ວຍຄອບຄົວຂອງຂ້ອຍ
# ຊັ້ນອະນຸບານສຶກສາ ປີທີ 3


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ຈຸນລາ ເຂັມທອງ
ຂັນກາບ ພົງອຸດົມ
ສະຫວຽນ ສີຍະວັນນຸວົງ
ອ່າງຄຳ ບຸດສະດີ

ກວດແກ້ໂດຍ: ດຣ ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ວຽງແກ້ວ ພົມມະຈັກ

ເຂົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ
ຈັນທະໄລ ເກີດຫຼ້າ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---====000====----

07498- -

ກະຊວງສຶກສາທິການ ແລະ ກິລາ

ເລກທີ ສສກ.ສວສ

ນະຄອນຫຼວງວຽງຈັນ, ວັນທີ 09 DEC 2015

**ຂໍ້ຕົກລົງຂອງລັດຖະມົນຕີ**

**ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ**

**ສຳລັບຊັ້ນອະນຸບານສຶກສາ ປີທີ 3**

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ຈຶ່ງຕົກລົງ**

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 3 ສະບັບປະຕິຮູບ ໃນໂຮງຮຽນອະນຸບານທົ່ວປະເທດ ນັບແຕ່ສົກຮຽນ 2016-2017 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານ ແລະ ປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກົມຄຸ້ມຄອງການສຶກສາພາກເອກະຊົນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ ໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ກະຊວງສຶກສາທິການ ແລະ ກິລາ
ລັດຖະມົນຕີ

ລິຕູ ບົວປາວ

# ຄຳນຳ

ແຜນການຈັດປະສົບການສະບັບນີ້ຮຽບຮຽງຂຶ້ນ ເພື່ອເປັນບ່ອນອີງນຳໃຊ້ເຂົ້າໃນການວາງແຜນການສອນ ແລະ ໃຫ້ຄູສອນນຳໃຊ້ໃນການແຕ່ງບົດສອນຄວບຄູ່ກັບປື້ມແນະນຳກິດຈະກຳການຮຽນ-ການສອນ ໂດຍໃຫ້ແທດເໝາະກັບພັດທະນາການຂອງເດັກອະນຸບານອາຍຸ 5 ປີ ຕາມຄວາມຕ້ອງການຮຽນຮູ້ຂອງເຂົາເຈົ້າ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ.

ເນື້ອໃນຄວາມຮູ້ທີ່ກຳນົດໃນກິດຈະກຳການຫຼິ້ນ ແລະ ຮຽນຮູ້ແຕ່ລະວັນມີລັກສະນະບູລະນາການຄວາມຮູ້ທາງດ້ານພາສາລາວ, ຄະນິດສາດ ແລະ ວິທະຍາສາດທົ່ວໄປ.

ກິດຈະກຳການຫຼິ້ນ ແລະ ຮຽນຮູ້ໃນແຕ່ລະວັນປະກອບມີກິດຈະກຳເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ຫຼິ້ນກາງແຈ້ງ, ຫຼິ້ນຕາມມຸມ ແລະ ເກມການສຶກສາ; ທັງນີ້ກໍເພື່ອໃຫ້ເດັກໄດ້ຮັບການພັດທະນາຕາມສະມັດຖະພາບດ້ານການຮຽນຂອງເດັກອະນຸບານປີທີ 3 (ອາຍຸ 5 ປີ) ໃນການກຽມຄວາມພ້ອມທາງດ້ານຮ່າງກາຍ, ດ້ານອາລົມ, ຈິດໃຈ, ດ້ານສັງຄົມ, ດ້ານພາສາ ແລະ ດ້ານສະຕິປັນຍາກ່ອນເຂົ້າຮຽນໃນຊັ້ນປະຖົມ.

ແຜນການຈັດປະສົບການສະບັບນີ້ເນັ້ນໜັກການສອນແບບເອົາເດັກເປັນໃຈກາງ ໂດຍໃຫ້ເດັກໄດ້ປະຕິບັດຕົວຈິງຜ່ານການຫຼິ້ນ ແລະ ຮຽນໂດຍຍຶດຫຼັກການສຳຄັນດັ່ງນີ້:

1. ເດັກໄດ້ຮັບການກຽມຄວາມພ້ອມໃນທຸກດ້ານຕາມຄວາມສາມາດ ແລະ ທຳມະຊາດຂອງເດັກ.
2. ເດັກໄດ້ຮຽນຮູ້ຕາມຄວາມສົນໃຈ, ຄວາມຕ້ອງການຢ່າງອິດສະຫຼະຈາກສິ່ງໃກ້ຕົວ, ຈາກທັກສະທີ່ງ່າຍໄປສູ່ທັກສະທີ່ຍາກຕາມລຳດັບໂດຍໄດ້ຮຽນຮູ້ເປັນລາຍບຸກຄົນ ແລະ ກຸ່ມຕາມຄວາມສົນໃຈ.
3. ການຈັດກິດຈະກຳການຮຽນຮູ້ ແມ່ນໃຫ້ເດັກໄດ້ປະຕິບັດຕົວຈິງໃນລັກສະນະຂອງການຮຽນແບບຕັ້ງໜ້າ ຫຼື ເອົາເດັກເປັນໃຈກາງ, ເພື່ອເປີດໂອກາດໃຫ້ເດັກໄດ້ທົດລອງ, ປະດິດສ້າງຢ່າງສ້າງສັນ, ຄິດແກ້ໄຂບັນຫາ ແລະ ຄົ້ນພົບສິ່ງໃໝ່ດ້ວຍຕົນເອງໂດຍຜ່ານການຫຼິ້ນທີ່ເບີກບານມ່ວນຊື່ນ ສອດຄ່ອງກັບທຳມະຊາດຂອງເດັກແຕ່ລະຄົນທີ່ມີຄວາມແຕກຕ່າງກັນໃນການຫຼິ້ນ ແລະ ການຮຽນຮູ້ໃນແຕ່ລະກິດຈະກຳຄື: ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ຫຼິ້ນກາງແຈ້ງ, ຫຼິ້ນຕາມມຸມ ແລະ ເກມການ ສຶກສາ.
4. ການຈັດປະສົບການໄດ້ເນັ້ນໜັກເນື້ອໃນທີ່ເດັກຄວນຮຽນຮູ້ຈາກສັງຄົມ, ວັດທະນະທຳ ແລະ ສະພາບແວດລ້ອມທີ່ເດັກອາໄສຢູ່ໂດຍຄຳນຶງເຖິງຄວາມແຕກຕ່າງຂອງເດັກແຕ່ລະຄົນ.

ນອກນັ້ນໃນແຜນການຈັດປະສົບການສະບັບນີ້ຍັງໄດ້ແນະນຳການຈັດຫ້ອງ, ທັກສະທີ່ຄວນພັດທະນາເພື່ອໃຫ້ສອດຄ່ອງກັບພັດທະນາການຂອງເດັກອາຍຸ 5 ປີ ແລະ ການຈັດປະສົບການໃນໜ່ວຍການສອນໃຫ້ຄູໄດ້ນຳໄປໃຊ້ໃນການຈັດການຮຽນ-ການສອນຂອງຕົນ. ເປັນທີ່ແນ່ນອນວ່າເອກະສານສະບັບນີ້ປາສະຈາກຄວາມຂາດຕົກບົກຜ່ອງບໍ່ໄດ້ ຄະນະຮຽບຮຽງ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາມີຄວາມຍິນດີຕ້ອນຮັບທຸກຄຳຄິດເຫັນທີ່ສ້າງສັນຈາກຜູ້ຊົມໃຊ້ ເພື່ອປັບປຸງໃຫ້ນັບມື້ດີຂຶ້ນໃນອະນາຄົດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

ໜ້າ


**ຈຸດປະສົງລວມ** ........ 1-5

**ຈຸດປະສົງສຳລັບອາທິດທີ 1** ........ 6-10

**1. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 1: ມື້ທີ 1**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມການສັນຍານ ຍົກຮູບພາບ ........ 11

ກິດຈະກຳວົງມົນ: ສະມາຊິກໃນຄອບຄົວ ........ 12

ກິດຈະກຳສິລະປະສ້າງສັນ: ທາສີຮູບພາບຄົນ ........ 13

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ງູກິນຂຽດ ........ 14

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບສະມາຊິກໃນຄອບຄົວ ........ 15

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມອ່ານ ........ 16

**2. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 1: ມື້ທີ 2**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບການນັບ ........ 17

ກິດຈະກຳວົງມົນ: ວຽກຂອງແຕ່ລະຄົນໃນຄອບຄົວ ........ 18

ກິດຈະກຳ ສິລະປະສ້າງສັນ: ຂີດຂຽນສະຫຼະ xີ ຕາມຄຳສັບ ........ 19

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນແຂ່ງຂັນ ຍ່າງສາມຂາ ........ 20

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບວຽກຂອງແຕ່ລະຄົນໃນຄອບຄົວ. ........ 21

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ ........ 22

**3. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 1: ມື້ທີ 3**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ........ 23

ກິດຈະກຳວົງມົນ: ການຊ່ວຍເຫຼືອກັນໃນຄອບຄົວ ແລະ ການປະຢັດ ........ 24

ກິດຈະກຳ ສິລະປະສ້າງສັນ: ປັ້ນດິນ ........ 25

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ນ້ຳຂຶ້ນ-ນ້ຳລົງ ........ 26

ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບແມ່ຂົ້ວຜັກກາດ. ........ 27

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມສິລະປະສ້າງສັນ ........ 28

**4. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 1: ມື້ທີ 4**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາປະກອບເລື່ອງ ການຊ່ວຍເຫຼືອກັນ ........ 29

ກິດຈະກຳວົງມົນ: ຍາດພີ່ນ້ອງຂອງພໍ່ ແລະ ແມ່ ........ 30

ກິດຈະກຳ ສິລະປະສ້າງສັນ: ພິມສີດ້ວຍກ້ານກ້ວຍເປັນຮູບພາບຕ່າງໆຕາມຈິນຕະນະການ ........ 31

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈ ........ 32

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບຍາດຕິພີ່ນ້ອງທາງພໍ່. ........ 33

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ ........ 34

**5. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 1: ມື້ທີ 5**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ:ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ຄອບຄົວຂອງຂ້ອຍ. 35

ກິດຈະກຳວົງມົນ: ຄວາມອົບອຸ່ນໃນຄອບຄົວ ........ 36

ກິດຈະກຳ ສິລະປະສ້າງສັນ: ຂີດຂຽນສະຫຼະ xີ, ວັນນະຍຸດ x່, x້ ຕາມຄຳສັບ ........ 37

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນແຂ່ງຂັນແລ່ນເຂົ້າເຮືອນນ້ອຍ. ........ 38

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບຄອບຄົວອົບອຸ່ນ ........ 39

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມບົດບາດສົມມຸດ ........ 40

**6. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 2: ມື້ທີ 1**
**ຈຸດປະສົງສຳລັບອາທິດທີ 2 .......... 41-42**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ສັ່ນກະແຊັກ .......... 43
ກິດຈະກຳວົງມົນ: ການກິນ ແລະ ການດື່ມ .......... 44
ກິດຈະກຳ ສິລະປະສ້າງສັນ: ຂີດຂຽນສະຫຼະ x, ຕົວສະກົດຕາມຄຳສັບ .......... 45
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນກິນບ້ວງ .......... 46
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບເດັກນ້ອຍກິນອາຫານ ແລະ ດື່ມນ້ຳ .......... 47
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ .......... 48
**7. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 2: ມື້ທີ 2**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ .......... 49
ກິດຈະກຳວົງມົນ: ການນັ່ງ, ການຍ່າງ ແລະ ການນອນ .......... 50
ກິດຈະກຳ ສິລະປະສ້າງສັນ: ແຕ້ມ ແລະ ທາສີຮູບພາບ .......... 51
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນແມວຈັບໜູ .......... 52
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບຍາດຕິພີ່ນ້ອງທາງແມ່ .......... 53
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.......... 54
**8. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 2: ມື້ທີ 3**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ເຄາະໄມ້ .......... 55
ກິດຈະກຳວົງມົນ: ການຂໍອະນຸຍາດ ແລະ ການຮັບສິ່ງຂອງ .......... 56
ກິດຈະກຳ ສິລະປະສ້າງສັນ: ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ .......... 57
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ຕັ່ງວິເສດ .......... 58
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ .......... 59
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ .......... 60
**9. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 2: ມື້ທີ 4**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງ ເດັກດີ .......... 61
ກິດຈະກຳວົງມົນ: ການນົບ .......... 62
ກິດຈະກຳ ສິລະປະສ້າງສັນ: ຂີດຂຽນຕົວເລກ 5-7 ຕາມຮອຍຈ້ຳ ແລະ ຕາມໃຈ .......... 63
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ .......... 64
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ .......... 65
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ .......... 66
**10. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 2: ມື້ທີ 5**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ .......... 67
ກິດຈະກຳວົງມົນ: ການປະຢັດ .......... 68
ກິດຈະກຳ ສິລະປະສ້າງສັນ: ແຕ້ມຮູບພາບສໍດຳ ແລະ ບັນທັດ .......... 69
ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນກິນໝາກກ້ຽງ .......... 70
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ .......... 71
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ .......... 72

**11. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 3: ມື້ທີ 1**

**ຈຸດປະສົງສຳລັບອາທິດທີ 3 ........ 73-74**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ປະຢັດ ........ 75

ກິດຈະກຳວົງມົນ: ເຮືອນ ........ 76

ກິດຈະກຳ ສິລະປະສ້າງສັນ: ປັ້ນດິນເປັນຮູບເຮືອນ ........ 77

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ຍາດຫາງ ........ 78

ກິດຈະກຳເກມການສຶກສາ: ເກມຈັດໝວດໝູ່ຮູບພາບເຮືອນຕາມປະເພດ ........ 79

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ ........ 80

**12. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 3: ມື້ທີ 2**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳຄ່ອງ ເຮືອນນ້ອຍຫຼັງງາມ ........ 81

ກິດຈະກຳວົງມົນ: ເຮືອນໄມ້ ........ 82

ກິດຈະກຳ ສິລະປະສ້າງສັນ: ຂີດຂຽນຕົວເລກ 8-9 ຕາມຮອຍຈ້ຳ ແລະ ຕາມໃຈ ........ 83

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງຂັນສິ່ງປື້ມນິທານ ........ 84

ກິດຈະກຳເກມການສຶກສາ: ເກມສຶກສາລາຍລະອຽດຮູບພາບສ່ວນປະກອບຂອງເຮືອນ ........ 85

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ ........ 86

**13. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 3: ມື້ທີ 3**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງ ກັບບ້ານ ........ 87

ກິດຈະກຳວົງມົນ: ເຮືອນກໍ່ປະສົມໄມ້ ........ 88

ກິດຈະກຳ ສິລະປະສ້າງສັນ: ພັບສີ ........ 89

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນມັດຕາຈັບປຸມເປົ້າ ........ 90

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບທີ່ແຍກສ່ວນ ........ 91

ກິດຈະກຳການຫຼິ້ນຕາມມຸມ: ມຸມວິທະຍາສາດທຳມະຊາດ ແລະ ມຸມເຄື່ອງຫຼິ້ນສຳຜັດ ........ 92

**14. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 3: ມື້ທີ 4**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມການສັນຍານ ຕົບມື ........ 93

ກິດຈະກຳວົງມົນ: ເຮືອນກໍ່ ........ 94

ກິດຈະກຳ ສິລະປະສ້າງສັນ: ໂຮຍຊາຍ ........ 95

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈ ........ 96

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນເຮືອນ ........ 97

ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ ........ 98

**15. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 3: ມື້ທີ 5**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ........ 99

ກິດຈະກຳວົງມົນ: ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດເຮືອນ ........ 100

ກິດຈະກຳ ສິລະປະສ້າງສັນ: ພິມສີດ້ວຍກ້ານກ້ວຍ ........ 101

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນແຂ່ງຂັນສິ່ງໂອ້ອ້າມຫົວ ........ 102

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5 ........ 103

ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມອ່ານ ........ 104

**16. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 4: ມື້ທີ 1**

**ຈຸດປະສົງສຳລັບອາທິດທີ 4..........105-106**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ .......... 106

ກິດຈະກຳວົງມົນ: ຫ້ອງໃນເຮືອນ .......... 107

ກິດຈະກຳ ສິລະປະສ້າງສັນ: ພັບສີ .......... 108

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນຫຼັງຕິດກັນ .......... 109

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ .......... 110

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ ..........111

**17. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 4: ມື້ທີ 2**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ .......... 112

ກິດຈະກຳວົງມົນ: ຫ້ອງນອນ .......... 113

ກິດຈະກຳ ສິລະປະສ້າງສັນ: ການປັ້ນດິນ..........114

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ຍ່າງຄືໝີ .......... 115

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງນອນ .......... 116

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ .......... 117

**18. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 4: ມື້ທີ 3**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ .......... 118

ກິດຈະກຳວົງມົນ: ຫ້ອງຮັບແຂກ .......... 119

ກິດຈະກຳ ສິລະປະສ້າງສັນ: ຕັດ, ຕິດຮູບພາບ .......... 120

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນແຂ່ງອັນເກັບບານຕາມສີກຳນົດ .......... 121

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບເຄື່ອງໃຊ້ໃນຫ້ອງຮັບແຂກ .......... 122

ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ .......... 123

**19. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 4: ມື້ທີ 4**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງ ຫ້ອງຮັບແຂກ .......... 124

ກິດຈະກຳວົງມົນ: ຫ້ອງແຕ່ງກິນ .......... 125

ກິດຈະກຳ ສິລະປະສ້າງສັນ: ປັ້ນດິນ .......... 126

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນພິມຊາຍ ເປັນຮູບບ່ວງ, ຖ້ວຍ ແລະ ຈານ .......... 127

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ .......... 128

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ .......... 129

**20. ໜ່ວຍຄອບຄົວຂອງຂ້ອຍ, ອາທິດທີ 4: ມື້ທີ 5**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມການສັນຍານ ຍົກຮູບພາບ .......... 130

ກິດຈະກຳວົງມົນ: ຫ້ອງອາບນ້ຳ ແລະ ຫ້ອງວິດຖ່າຍ .......... 132

ກິດຈະກຳ ສິລະປະສ້າງສັນ: ເປົ່າສີ .......... 133

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນ ແຂ່ງອັນໂຍນບ້ວງໃສ່ເປົາ .......... 134

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງນ້ຳ .......... 135

ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ .......... 136

- ເອກະສານອ້າງອີງ .......... 137

# ຈຸດປະສົງລວມ

# ກິດຈະກຳ ເຄື່ອນໄຫວ ແລະ ຈັງຫວະ

1. ສະແດງທ່າທາງຕາມການສັນຍານ ຍົກຮູບພາບໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມສຽງສັນຍານ ສັ່ນກະແຊັກ, ເຄາະໄມ້, ຕົບມືໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມນາຍຄູອອກແບບຢ່າງຖອຍຫຼັງປະກອບການນັບ, ປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
4. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
5. ສະແດງທ່າທາງຕາມຈິນຕະນາປະກອບເລື່ອງ ການຊ່ວຍເຫຼືອກັນ, ປະກອບເລື່ອງທີ່ນາຍຄູເລົ່າຢ່າງມ່ວນຊື່ນ.
6. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ, ບົດຄຳຄ່ອງໄດ້ຖືກຕ້ອງ.
7. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດໄດ້ຖືກຕ້ອງ.
8. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
9. ປອດໄພໃນເວລາສະແດງທ່າທາງ.
10. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
11. ກ້າສະແດງອອກໃນເວລາສະແດງທ່າທາງ.
12. ອົດທົນໃນເວລາສະແດງທ່າທາງ.
13. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
14. ເວົ້າຄຳສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

1. ບອກສະມາຊິກ ແລະ ຈຳນວນຄົນໃນຄອບຄົວໄດ້ຖືກຕ້ອງ.
2. ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດເພງ, ບົດຄຳຄ່ອງ, ບົດນິທານ, ຮູບພາບ, ຮ້ອງເພງ ແລະ ເລົ່າຄຳຄ່ອງໄດ້ຊັດເຈນ.
3. ບອກລຳດັບທີຂອງອ້າຍ, ເອື້ອຍ, ນ້ອງໄດ້ຖືກຕ້ອງ.
4. ເວົ້າຄຳສຸພາບກັບບຸກຄົນໃນຄອບຄົວ.
5. ບອກວຽກຂອງແຕ່ລະຄົນໃນຄອບຄົວ ແລະ ວຽກຂອງຕົນເອງໄດ້ຖືກຕ້ອງ.
6. ນັບໄມ້ດີ້ວແຕ່ 1-5 ໄດ້ຖືກຕ້ອງ.
7. ມີອົດທົນໃນການເຮັດວຽກ.
8. ບອກການຊ່ວຍເຫຼືອກັນໃນຄອບຄົວໄດ້ຖືກຕ້ອງ.
9. ບອກການປະຢັດໄດ້ຖືກຕ້ອງ.
10. ອ່ານຕົວເລກສັບປ່ຽນບ່ອນແຕ່ 0-5 ໄດ້ຖືກຕ້ອງ.
11. ບອກຍາດຕິພີ່ນ້ອງຂອງພໍ່, ແມ່ ແລະ ການຊ່ວຍເຫຼືອກັນໄດ້ຖືກຕ້ອງ.
12. ບອກຄວາມອົບອຸ່ນໃນຄອບຄົວໄດ້ຖືກຕ້ອງ.
13. ເວົ້າອອກສຽງຄຳສັບທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.
14. ສະແດງຄວາມຮັກຕໍ່ບຸກຄົນໃນຄອບຄົວ.

# ກິດຈະກຳສິລະປະສ້າງສັນ

1. ບອກຂັ້ນຕອນການຂີດຂຽນສະຫຼະ ີ ຕາມຄຳສັບ, ຂີດຂຽນສະຫຼະ ີ, ວັນນະຍຸດ ່, ້ ຕາມຄຳສັບ, ຂີດຂຽນສະຫຼະ ີ, ຕົວສະກົດຕາມຄຳສັບ, ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ, ຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ, ຂີດຂຽນຕົວເລກ 8-9 ຕາມຮອຍຈ້ຳ ແລະ ຂຽນຕາມໃຈໄດ້ຖືກຕ້ອງ.
2. ບອກຂັ້ນຕອນການປັ້ນດິນເປັນຮູບໝໍ້, ປັ້ນດິນເປັນຮູບຈອງ ແລະ ປັ້ນດິນເປັນຮູບຖ້ວຍໄດ້ຖືກຕ້ອງ.
3. ບອກຂັ້ນຕອນການແຕ້ມ ແລະ ທາສີຮູບພາບໂຕະ, ຕັ່ງ, ແຕ້ມສໍດຳ, ບັນທັດຕາມແບບ, ທາສີຮູບພາບສະມາຊິກໃນຄອບຄົວໄດ້ຖືກຕ້ອງ.
4. ບອກຂັ້ນຕອນໃນການພິມສີດ້ວຍກ້ານກ້ວຍໃສ່ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ, ພິມສີດ້ວຍກ້ານກ້ວຍ, ພັບສີ ແລະ ເປົ່າສີເປັນຮູບພາບຕ່າງໆໄດ້ຖືກຕ້ອງ.
5. ບອກຂັ້ນການຕັດ-ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້; ໂຮຍດິນຊາຍໃສ່ຮູບພາບເຮືອນໄດ້ຖືກຕ້ອງ.
6. ທາສີຮູບພາບສະມາຊິກໃນຄອບຄົວໄດ້ຈົບງາມ ແລະ ຢູ່ໃນຂອບ.
7. ຂີດຂຽນສະຫຼະ ີ ຕາມຄຳສັບ, ຂີດຂຽນສະຫຼະ ີ, ວັນນະຍຸດ ່, ້ ຕາມຄຳສັບ, ຂີດຂຽນສະຫຼະ ີ, ຕົວສະກົດຕາມຄຳສັບ, ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ, ຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ, ຂີດຂຽນຕົວເລກ 8-9 ຕາມຮອຍຈ້ຳ ແລະ ຂຽນຕາມໃຈໄດ້ສະອາດຈົບງາມ.
8. ປັ້ນດິນເປັນຮູບໝໍ້ໄດ້ຄ້າຍຄື.
9. ແບ່ງປັນສໍສີ ແລະ ດິນປັ້ນໃຫ້ໝູ່ເພື່ອນ.
10. ມີຄວາມອົດທົນໃນການຂີດຂຽນສະຫຼະ ີ ຕາມຄຳສັບ, ຂີດຂຽນສະຫຼະ ີ, ວັນນະຍຸດ ່, ້ ຕາມຄຳສັບ, ຂີດຂຽນສະຫຼະ ີ, ຕົວສະກົດຕາມຄຳສັບ, ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ, ຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ, ຂີດຂຽນຕົວເລກ 8-9 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ.
11. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການພິມສີດ້ວຍກ້ານກ້ວຍໃສ່ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ, ພັບສີ, ພິມສີ, ເປົ່າສີເປັນຮູບພາບຕ່າງໆ ແລະ ໂຮຍດິນຊາຍດິນຊາຍໃສ່ຮູບພາບເຮືອນ.
12. ພິມສີດ້ວຍກ້ານກ້ວຍໃສ່ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ, ພັບສີ, ພິມສີ ແລະ ເປົ່າສີເປັນຮູບພາບຕ່າງໆໄດ້ສະອາດຈົບງາມ.
13. ທາສີຮູບພາບສະມາຊິກໃນຄອບຄົວ, ແຕ້ມຕາມຮອຍຈ້ຳ ແລະ ທາສຮູບພາບໂຕະ ແລະ ຕັ່ງໄດ້ສະອາດຈົບງາມ ແລະ ຢູ່ໃນຂອບ.
14. ມີຄວາມອົດທົນໃນການແຕ້ມຮູບພາບ: ສໍດຳ, ບັນທັດຕາມແບບ.
15. ປັ້ນດິນເປັນຮູບເຮືອນຊັ້ນດຽວ ແລະ ປັ້ນດິນເປັນຮູບຈອງໄດ້ຄ້າຍຄື.
16. ແຕ້ມຮູບພາບ: ສໍດຳ, ບັນທັດຕາມແບບໄດ້ຄ້າຍຄື.
17. ພັບຜ້າຮູບວົງມົນເປັນຮູບສາມແຈ ແລະ ພັບຜ້າຮູບວົງມົນເປັນຮູບສາມແຈ ແລະ ພືຜ້າສາມແຈເປັນຮູບວົງມົນໄດ້ຄ້າຍຄື.
18. ໂຮຍຊາຍໃສ່ຮູບພາບເຮືອນໄດ້ສະອາດຈົບງາມ.
19. ຊ່ວຍເຫຼືອໝູ່ເພື່ອນໃນເວລາພັບຜ້າ.

20. ຕັດ, ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້ໄດ້ສະອາດຈົບງາມ.
21. ເຝິກໃຫ້ເດັກມີຄວາມລະມັດລະວັງໃນການພິມສີ ແລະ ເປົ່າສີ.
22. ມີຄວາມອົດທົນໃນການຕັດ-ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້, ຂີດຂຽນຕົວເລກ, ຂຽນສະຫຼະ, ຄຳສັບ, ວັນນະຍຸດ.

## ກິດຈະກຳຫຼິ້ນກາງແຈ້ງ

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນງູກິນຂຽດ, ຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ, ຫຼິ້ນແບບຫຼິ້ນນໍ້າຂຶ້ນ-ນໍ້າລົງ, ຫຼິ້ນນໍ້າ-ຫຼິ້ນຊາຍ: ກອງຊາຍເປັນຮູບຕ່າງໆຕາມໃຈ, ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເຂົ້າເຮືອນນ້ອຍ, ຫຼິ້ນແບບຫຼິ້ນແຂ່ງຂັນກິ້ງບ້ວງ, ຫຼິ້ນແບບຫຼິ້ນແມວຈັບໜູ, ຫຼິ້ນແບບຫຼິ້ນຕັ່ງວິເສດ, ຫຼິ້ນດິນຊາຍ: ພິມຮູບຕ່າງໆດ້ວຍດິນຊາຍ, ຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ, ຫຼິ້ນແບບຫຼິ້ນຍາດຫາງ, ຫຼິ້ນແບບຫຼິ້ນແຂັນສິ່ງປຶ້ມນິທານ, ຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ, ຫຼິ້ນແບບຫຼິ້ນສົ່ງໂອນໍ້າຂ້າມຫົວ, ຫຼິ້ນແບບຫຼິ້ນຫຼັງຕິດກັນ, ຫຼິ້ນແບບຫຼິ້ນຍ່າງຄືໝີ, ຫຼິ້ນແບບຫຼິ້ນແຂ່ງຂັນເກັບບານຕາມສີກຳນົດ, ຫຼິ້ນນໍ້າ-ຫຼິ້ນຊາຍ: ຜອງນໍ້າ, ຜອງຊາຍ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນໂຍນບ້ວງໃສ່ເປົ້າ.
2. ຫຼິ້ນແບບຫຼິ້ນງູກິນຂຽດ, ຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ, ຫຼິ້ນແບບຫຼິ້ນນໍ້າຂຶ້ນ-ນໍ້າລົງ, ຫຼິ້ນນໍ້າ-ຫຼິ້ນຊາຍ: ກອງຊາຍເປັນຮູບຕ່າງໆຕາມໃຈ, ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເຂົ້າເຮືອນນ້ອຍ, ຫຼິ້ນແບບຫຼິ້ນແຂ່ງຂັນກິ້ງບ້ວງ, ຫຼິ້ນແບບຫຼິ້ນແມວຈັບໜູ, ຫຼິ້ນແບບຫຼິ້ນຕັ່ງວິເສດ, ຫຼິ້ນດິນຊາຍ: ພິມຮູບຕ່າງໆດ້ວຍດິນຊາຍ, ຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ, ຫຼິ້ນແບບຫຼິ້ນຍາດຫາງ, ຫຼິ້ນແບບຫຼິ້ນແຂັນສິ່ງປຶ້ມນິທານ, ຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ, ຫຼິ້ນແບບຫຼິ້ນສົ່ງໂອນໍ້າຂ້າມຫົວ, ຫຼິ້ນແບບຫຼິ້ນຫຼັງຕິດກັນ, ຫຼິ້ນແບບຫຼິ້ນຍ່າງຄືໝີ, ຫຼິ້ນແບບຫຼິ້ນແຂ່ງຂັນເກັບບານຕາມສີກຳນົດ, ຫຼິ້ນນໍ້າ-ຫຼິ້ນຊາຍ: ຜອງນໍ້າ, ຜອງຊາຍ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນໂຍນບ້ວງໃສ່ເປົ້າໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
4. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
5. ເຝິກກ້າມຊີ້ນມືໃຫ້ແຂງແຮງໃນເວລາຖອກນໍ້າ ແລະ ກອງຊາຍ.
6. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
7. ເຝິກກກ້າມຊີ້ນມື ແລະ ແຂນ ໃຫ້ມີຄວາມແຂງແຮງ.
8. ອົດທົນໃນເວລາຫຼິ້ນແບບຫຼິ້ນ.
10. ເຝິກແນວຄວາມຄິດສ້າງສັນໃນເວລາປັ້ນດິນຊາຍໃຫ້ເປັນຮູບເຮືອນ.
11. ເຝິກປະສາດສຳພັນລະຫວ່າງມື ແລະ ສາຍຕາໃນເວລາຫຼິ້ນແບບຫຼິ້ນຮ່ວມກັນກັບໝູ່ເພື່ອນ.
12. ເຝິກການມີສະຕິລະວັງຕົວ ແລະ ຄ່ອງແຄ້ວໃນເວລາຫຼິ້ນແບບຫຼິ້ນ.

## ກິດຈະກຳເກມການສຶກສາ

1. ບອກຊື່ເກມ, ຮູບພາບ, ຮູບເລຂາຄະນິດ, ອອກສຽງຕົວພະຍັນຊະນະ, ອອກສຽງຕົວພະຍັນຊະນະຕົ້ນຕາມຮູບພາບ, ອອກສຽງຕົວພະຍັນຊະນະຕາມຮູບພາບທີ່ມີຢູ່ໃນເກມ.
2. ຈັບຄູ່ທີ່ຄືກັນຮູບພາບສະມາຊິກໃນຄອບຄົວ, ວຽກຂອງແຕ່ລະຄົນໃນຄອບຄົວ, ຍາດຕິພີ່ນ້ອງທາງພໍ່, ຍາດຕິພີ່ນ້ອງທາງແມ່, ເຄື່ອງໃຊ້ໃນເຮືອນ, ເຄື່ອງໃຊ້ໃນຫ້ອງນອນ, ເຄື່ອງໃຊ້ໃນຫ້ອງນໍ້າ.

3. ຕໍ່ຮູບພາບຄອບຄົວອົບອຸ່ນ, ເດັກນ້ອຍກິນອາຫານ ແລະ ດື່ມນ້ຳ, ເຄື່ອງໃຊ້ໃນຫ້ອງຮັບແຂກ.
4. ລຽນລຳດັບຮູບພາບແມ່ຂົ້ວຜັກກາດ.
5. ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບການອອກສຽງພະຍັນຊະນະຕົ້ນ.
6. ຈັບຄູ່ທີ່ຄືກັນຕົວພະຍັນຊະນະ.
7. ສຶກສາລາຍລະອຽດຮູບພາບສ່ວນປະກອບຂອງເຮືອນ.
8. ຈັດໝວດໝູ່ຮູບພາບເຮືອນຕາມປະເພດ.
9. ອົດທົນໃນການຫຼິ້ນເກມ.
10. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
11. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
12. ແບ່ງປັນເກມໃຫ້ໝູ່ເພື່ອນ.
13. ຈັບຄູ່ຮູບພາບກັບຕົວພະຍັນຊະນະ.
14. ຈັບຄູ່ຮູບພາບທີ່ສົມບູນກັບຮູບພາບແຍກສ່ວນເຄື່ອງໃຊ້ສຳລັບຄົວກິນ; ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ.
15. ຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5.
16. ຈັບຄູ່ຮູບພາບເຄື່ອງໃຊ້ຄູ່ກັນ.

## ກິດຈະກຳການຕາມຫຼິ້ນມຸມ

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດ ແລະ ນັບໄມ້ຄີ້ວ 1-15, ຫຼິ້ນເຄື່ອງດົນຕີ, ລຽນຕົວເລກທີ່ເຮັດດ້ວຍກະດາດຊາຍແຕ່ 0-5, ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການ, ພິມພະຍັນຊະນະໃສ່ອ່າງດິນຊາຍ: ກ, ດ, ບ, ມ, ວ, ຕໍ່ບຼັອກເປັນຮູບໂຕະ-ຕັ່ງຕາມແບບ, ວາງຮູບເລຂາຄະນິດເປັນຮູບຕ່າງໆຕາມຈິນຕະນາການ, ພິມຄຳສັບ: ດີ, ປີ, ນີ, ມີ, ລີ, ວີ ໃສ່ອ່າງດິນຊາຍ, ຕໍ່ບຼັອກເປັນຮູບເຮືອນຕາມຈິນຕະນາການ, ພິມຕົວເລກອາຣັບ 0-3 ໃສ່ອ່າງດິນຊາຍ, ວາງໄມ້ຄີ້ວເປັນຮູບເຮືອນຕາມຈິນຕະນາການ, ຕໍ່ຮູບຊົງເລຂາຄະນິດຕາມແບບໃຫ້ເປັນຮູບເຮືອນ, ຕໍ່ບຼັອກເປັນຮູບເຄື່ອງໃຊ້ໃນຫ້ອງນອນ, ຕໍ່ບຼັອກເປັນຮູບເຄື່ອງໃຊ້ໃນການແຕ່ງກິນຢ່າງມ່ວນຊື່ນ.
3. ປັ້ນດິນເປັນຮູບໝໍ້, ຂຽນສະຫຼະ xີ ຕາມຮອຍຈ້ຳໃນຄຳສັບ: ສີ, ຊີ, ພີ, ປີ, ດີ, ຕີ, ແຕ້ມ-ທາສີຮູບພາບໂຕະ-ຕັ່ງ, ຂຽນສະຫຼະ xິ ທີ່ມີໃນຄຳສັບ: ຈິກ, ຂິດ, ຫີນ, x່, ຂຽນຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ x້, ລີ, ລີ່, ລີ້, ປີ, ປີ, ປີ້, ຂີ, ຂີ່, ຂີ້, ນີ, ນີ່, ນີ້, ກີ, ກີ່, ກີ້, ຂຽນຕົວເລກອາຣັບຕາມແບບ 0-3, ແຕ້ມຮູບພາບສໍດຳ, ແຕ້ມຮູບພາບບັນທັດ, ພັບຜ້າຮູບວົງມົນເປັນຮູບສາມແຈ, ປັ້ນດິນເປັນຮູບເຮືອນຊັ້ນດຽວ, ພິມສີດ້ວຍກ້ານກ້ວຍໃສ່ຮູບຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ, ໂຣຍຊາຍໃສ່ຮູບເຮືອນ, ຕັດ-ຕິດຮູບພາບໂທລະພາບ, ໂຖດອກໄມ້, ປັ້ນດິນເປັນຮູບຈອງ, ເປົ່າສີເປັນຮູບຕ່າງໆຕາມຈິນຕະນາການ, ປັ້ນດິນເປັນຮູບຖ້ວຍຕາມແບບໄດ້ຖືກຕ້ອງ.
4. ອ່ານຕາມຮູບພາບໃນບົດເລື່ອງກ່ຽວກັບບຸກຄົນໃນຄອບຄົວ, ອ່ານຕົວເລກອາຣັບ 0-5, ອ່ານຕົວເລກຕາມລຳດັບ 0-5, ເວົ້າເປັນປະໂຫຍກຕາມຮູບພາບ: ເອື້ອຍຊ່ວຍແມ່ແຕ່ງກິນ, ອ້າຍອະນາໄມເຮືອນ, ເດັກນ້ອຍປິດກັອກນ້ຳ, ເດັກນ້ອຍມ້ຽນເຄື່ອງຮຽນໄວ້ເປັນລະບຽບ, ນາງນ້ອຍມອດໄຟ, ອ່ານຕົວເລກ 0-5 ສັບປ່ຽນບ່ອນ, ເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນ: ກິນ, ກິ່ນ, ຈູມ,ຈູ້ມ, ອ່ານຕາມຮູບພາບໃນປຶ້ມນິທານເລື່ອງຄອບຄົວອົບອຸ່ນ, ອ່ານອອກສຽງຄຳສັບທີ່ປະສົມສະຫຼະ xີ: ດີ, ປີ, ນີ, ມີ, ລີ, ວີ, ອ່ານຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ x້, ລີ, ລີ່, ລີ້, ປີ, ປີ, ປີ້, ຂີ, ຂີ່, ຂີ້, ນີ, ນີ່, ນີ້ ເວົ້າເປັນປະໂຫຍກ

ສັ້ນຕາມຮູບພາບ, ອ່ານຄຳສັບຕາມຮູບພາບ: ຖ້ວຍ, ຈານ, ບ່ວງ, ຈອງ, ສ້ອມ, ໝໍ້, ຫວດ, ໝໍ້ໜຶ້ງເຂົ້າ, ພາເຂົ້າ, ເຕົາໄຟ, ຕິບເຂົ້າ, ຂຽງ, ມີດ ແລະ ຜ້າໄດ້ຊັດເຈນ.

5. ຫຼິ້ນບົດບາດສົມມຸດເປັນເອື້ອຍ-ອ້າຍອາບນໍ້າ, ປ້ອນເຂົ້ານ້ອງ, ເປັນພໍ່ເຖົ້າ, ແມ່ເຖົ້າອູ້ມຫຼານ, ເປັນພໍ່-ແມ່ ແລະ ລູກພາກັນໄປທ່ຽວ, ເປັນຕົວລະຄອນໃນບົດເລື່ອງ ຄອບຄົວອົບອຸ່ນ, ເປັນຜູ້ເຖົ້າໄປໄຫວ້ພະຢູ່ວັດ, ເປັນຕົວລະຄອນໃນບົດນິທານເລື່ອງນາງພອຍໄປວັດ, ເປັນນັກຮຽນມ້ຽນເຄື່ອງຮຽນຊ່ວຍຄູ, ເປັນກຳມະກອນກໍ່ສ້າງເຮືອນ, ເປັນພໍ່ຄ້າ-ແມ່ຄ້າ, ລູກຄ້າຊື້ຂາຍນຸ່ງ: ຂາຍໂສ້ງ, ສິ້ນ, ກະໂປ່ງ, ເປັນຕົວລະຄອນໃນບົດເລື່ອງຄອບຄົວກະຕ່າຍ, ອະນາໄມຫ້ອງຕ່າງໆໃນເຮືອນ, ເປັນພໍ່-ແມ່ ແລະ ລູກຊ່ວຍກັນອະນາໄມ ແລະ ເກັບມ້ຽນເຄື່ອງໃຊ້ໃນຫ້ອງຮັບແຂກຢ່າງມ່ວນຊື່ນ.
6. ຈັບຄູ່ຮູບພາບກັບຕົວພະຍັນຊະນະ; ຈັດໝວດໝູ່ຮູບພາບເຮືອນຕາມປະເພດ, ຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບທີ່ແຍກຊິ້ນສ່ວນ; ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນເຮືອນ; ຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ; ຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກຊິ້ນສ່ວນ; ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງນອນ; ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງນໍ້າໄດ້ຖືກຕ້ອງ.
7. ທົດລອງຕໍ່ກ້ອນຫີນເປັນຮູບເຮືອນຕາມແບບໄດ້ຖືກຕ້ອງ.
8. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
9. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
10. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
11. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
12. ມີມາລະຍາດໃນການອ່ານ ແລະ ຫຼິ້ນຮ່ວມກັບໝູ່ເພື່ອນ.
13. ຮັກສາບັດຄຳສັບ ແລະ ປຶ້ມນິທານບໍ່ໃຫ້ຈີກຂາດ.

# ຈຸດປະສົງສຳລັບ ອາທິດທີ 1
# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມການສັນຍານ ຍົກຮູບພາບໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມນາຍຄູອອກແບບຢ່າງຖອຍຫຼັງປະກອບການນັບ, ປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
3. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
4. ສະແດງທ່າທາງຕາມຈິນຕະນາປະກອບເລື່ອງການຊ່ວຍເຫຼືອກັນຢ່າງມ່ວນຊື່ນ.
5. ປອດໄພໃນເວລາສະແດງທ່າທາງ.
6. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
7. ກ້າສະແດງອອກໃນເວລາສະແດງທ່າທາງ.
8. ອົດທົນໃນເວລາສະແດງທ່າທາງ.



# ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສະມາຊິກ, ຈຳນວນຄົນ, ວຽກຂອງແຕ່ລະຄົນໃນຄອບຄົວ ແລະ ວຽກຂອງຕົນເອງຊ່ວຍເຫຼືອຄອບຄົວໄດ້ຖືກຕ້ອງ.
2. ບອກຄວາມອົບອຸ່ນໃນຄອບຄົວໄດ້ຖືກຕ້ອງ.
3. ມີຄວາມເບີກບານມ່ວນຊື່ນໃນການຮ້ອງເພງ ແລະ ມີມາລະຍາດໃນການຟັງນິທານ.
4. ເລົ່າຄຳຄ່ອງເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອບົດຄຳຄ່ອງ,ໃນບົດເພງ, ບົດນິທານ, ຮູບພາບໄດ້ຊັດເຈນ.
5. ເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.
6. ບອກລຳດັບທີຂອງອ້າຍ, ເອື້ອຍ, ນ້ອງໄດ້ຖືກຕ້ອງ.
7. ໃຊ້ຄຳເວົ້າສຸພາບ ແລະ ສະແດງຄວາມຮັກຕໍ່ບຸກຄົນໃນຄອບຄົວ.
8. ນັບໄມ້ຄີ້ວແຕ່ 1-5 ແລະ ອ່ານຕົວເລກສັບປ່ຽນບ່ອນແຕ່ 0-5 ໄດ້ຖືກຕ້ອງ.
9. ບອກການປະຢັດນ້ຳ, ໄຟໄດ້ຖືກຕ້ອງ
10. ມີຄວາມອົດທົນໃນການເຮັດວຽກ ແລະ ແບ່ງປັນສິ່ງຂອງໃຫ້ຍາດພີ່ນ້ອງ.
11. ບອກຍາດພີ່ນ້ອງຂອງພໍ່ ແລະ ແມ່ໄດ້ຖືກຕ້ອງ.



# ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການທາສີຮູບພາບສະມາຊິກໃນຄອບຄົວ, ຂີດຂຽນສະຫຼະ ꫛ ຕາມຄຳສັບ, ຂີດຂຽນສະຫຼະ ꫛ, ວັນນະຍຸດ ꫛ່,ꫛ້ ຕາມຄຳສັບ, ປັ້ນດິນເປັນຮູບໝໍ້ ແລະ ພິມສີດ້ວຍກ້ານກ້ວຍເປັນຮູບພາບຕ່າງໆຕາມຈິນຕະນາການໄດ້ຖືກຕ້ອງ.
2. ທາສີຮູບພາບສະມາຊິກໃນຄອບຄົວໄດ້ຈົບງາມ ແລະ ຢູ່ໃນຂອບ.
3. ຂີດຂຽນສະຫຼະ ꫛ ແລະ ຂີດຂຽນວັນນະຍຸດ ꫛ່, ꫛ້ ທີ່ມີຢູ່ໃນຄຳສັບໄດ້ຈົບງາມ.
4. ປັ້ນດິນເປັນຮູບໝໍ້ໄດ້ຄ້າຍຄື.
5. ພິມສີດ້ວຍກ້ານກ້ວຍເປັນຮູບພາບຕ່າງໆຕາມຈິນຕະນາການໄດ້ສະອາດຈົບງາມ..
6. ແບ່ງປັນສໍສີ ແລະ ດິນປັ້ນໃຫ້ໝູ່ເພື່ອນ.
8. ມີຄວາມອົດທົນໃນການຂີດຂຽນສະຫຼະ ꫛ ແລະ ຂີດຂຽນວັນນະຍຸດ ꫛ່, ꫛ້ ທີ່ມີຢູ່ໃນຄຳສັບ.
9. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການພິມສີ.



# ກິດຈະກຳຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ງູກິນຂຽດ, ແຂ່ງຂັນຍ່າງສາມຂາ, ນ້ຳຂຶ້ນ-ນ້ຳລົງ, ການຫຼິ້ນນ້ຳ-ຫຼິ້ນຊາຍ: ກອງຊາຍເປັນຮູບຕ່າງໆຕາມໃຈ, ແລ່ນເຂົ້າເຮືອນນ້ອຍໄດ້.
2. ຫຼິ້ນແບບຫຼິ້ນ ງູກິນຂຽດ, ແຂ່ງຂັນຍ່າງສາມຂາ, ນ້ຳຂຶ້ນ - ນ້ຳລົງ, ການຫຼິ້ນນ້ຳ-ຫຼິ້ນຊາຍ: ຖອກນ້ຳໃສ່ພາຊະນະຕ່າງໆ, ກອງຊາຍເປັນຮູບຕ່າງໆຕາມໃຈແລ່ນເຂົ້າເຮືອນນ້ອຍໄດ້ຖືກຕ້ອງ.
3. ມີສະຕິ ແລະ ວ່ອງໄວ ໃນເວລາຫຼິ້ນ.
4. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
5. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
6. ເຝິກກ້າມຊີ້ນມືໃຫ້ແຂງແຮງໃນເວລາຖອກນ້ຳ ແລະ ກອງຊາຍ.



# ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ, ຕົວເລກ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບສະມາຊິກໃນຄອບຄົວ, ວຽກຂອງແຕ່ລະຄົນໃນຄອບຄົວ, ຍາດຕິພີ່ນ້ອງທາງພໍ່ໄດ້ຖືກຕ້ອງ.
3. ລຽນລຳດັບຮູບພາບແມ່ຂົ້ວຜັກກາດໄດ້ຖືກຕ້ອງ.
4. ຕໍ່ຮູບພາບຄອບຄົວອົບອຸ່ນໄດ້ຖືກຕ້ອງ.
5. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດ ແລະ ນັບໄມ້ດີ້ວ 1-15, ຫຼິ້ນເຄື່ອງດົນຕີ, ລຽນຕົວເລກທີ່ເຮັດດ້ວຍກະດາດຊາຍແຕ່ 0-5 ຢ່າງມ່ວນຊື່ນ.
3. ປັ້ນດິນເປັນຮູບໝໍ້, ຂຽນສະຫຼະ x ຕາມຮອຍຈ້ຳໃນຄຳສັບ: ສີ, ຊິ, ພີ, ປີ, ດີ, ຕີໄດ້ຖືກຕ້ອງ.
4. ອ່ານຕາມຮູບພາບໃນບົດເລື່ອງກ່ຽວກັບບຸກຄົນໃນຄອບຄົວ, ອ່ານຕົວເລກອາຣັບ 0-5, ອ່ານຕົວເລກຕາມລຳດັບ 0-5, ເວົ້າເປັນປະໂຫຍກຕາມຮູບພາບ: ເອື້ອຍຊ່ວຍແມ່ແຕ່ງກິນ, ອ້າຍອະນາໄມເຮືອນ, ເດັກນ້ອຍປິດກ໊ອກນໍ້າ, ເດັກນ້ອຍມ້ຽນເຄື່ອງຮຽນໄວ້ເປັນລະບຽບ, ນາງນ້ອຍມອດໄຟ, ອ່ານຕົວເລກ 0-5 ສັບປ່ຽນບ່ອນ, ເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນ: ກິນ, ກິ່ນ, ຈູມ,ຈູ້ມ, ອ່ານຕາມຮູບພາບໃນປຶ້ມນິທານເລື່ອງຄອບຄົວອົບອຸ່ນ.
5. ຫຼິ້ນບົດບາດສົມມຸດເປັນເອື້ອຍ-ອ້າຍອາບນໍ້າ, ປ້ອນເຂົ້ານ້ອງ, ເປັນພໍ່ເຖົ້າ, ແມ່ເຖົ້າອູ້ມຫຼານ, ເປັນພໍ່-ແມ່ ແລະ ລູກພາກັນໄປທ່ຽວ, ເປັນຕົວລະຄອນໃນບົດເລື່ອງ ຄອບຄົວອົບອຸ່ນຢ່າງມ່ວນຊື່ນ.
6. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
7. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
8. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມການສັນຍານ ຍົກຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມການສັນຍານຍົກຮູບພາບໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມການສັນຍານ ຍົກຮູບພາບ:

- ຍົກຮູບພາບຜູ້ຊາຍໃຫ້ແລ່ນເຂົ້າມຸມພໍ່.
- ຍົກຮູບພາບແມ່ຍິງໃຫ້ແລ່ນເຂົ້າມຸມແມ່.
- ຍົກຮູບພາບເອື້ອຍໃຫ້ແລ່ນເຂົ້າມຸມເອື້ອຍ.
- ຍົກຮູບພາບອ້າຍໃຫ້ແລ່ນເຂົ້າມຸມອ້າຍ.

### III. ສື່ການຮຽນ-ການສອນ

1. ຮູບພາບຜູ້ຊາຍ, ແມ່ຍິງ, ອ້າຍ ແລະ ເອື້ອຍ.
2. ທ່າຫັດກາຍຍະບໍລິຫານລຳຄໍ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).
3. ບັດຊື່ມຸມ: ມຸມພໍ່, ແມ່, ອ້າຍ, ເອື້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານລຳຄໍ ແລະ ແຂນ: ທ່າໝູນລຳຄໍໄປເບື້ອງຊ້າຍ-ຂວາ ແລະ ທ່າຍົກແຂນຂຶ້ນເທິງຫົວ.
2. ໃຫ້ເດັກນ້ອຍເຕັ້ນຊິກແຊັກໄລຍະ 3 ແມັດ ເບື້ອງຊ້າຍ-ຂວາ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມການສັນຍານຍົກຮູບພາບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນເອົາມືກອດເອິກຫຼັບຕາຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມການສັນຍານຍົກຮູບພາບ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມການສັນຍານຍົກຮູບພາບ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ສະມາຊິກໃນຄອບຄົວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສະມາຊິກ ແລະ ຈຳນວນຄົນໃນຄອບຄົວໄດ້ຖືກຕ້ອງ.
2. ເວົ້າຄຳສັບ, ປະໂຫຍກຕາມເນື້ອໃນບົດເພງ ແລະ ຮ້ອງເພງໄດ້ຊັດເຈນ.
3. ບອກລຳດັບທີຂອງອ້າຍ, ເອື້ອຍ, ນ້ອງໄດ້ຖືກຕ້ອງ.
4. ເວົ້າຄຳສຸພາບກັບບຸກຄົນໃນຄອບຄົວ.

### II. ເນື້ອໃນຕົ້ນຕໍ

1. ສະມາຊິກ, ຈຳນວນຄົນ ແລະ ຊື່ແຕ່ລະຄົນໃນຄອບຄົວ:

- ສະມະຊິກໃນຄອບຄົວປະກອບມີ: ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ, ພໍ່ເຖົ້າ, ແມ່ເຖົ້າ, ພໍ່ປູ່, ແມ່ຍ່າ.
- ຈຳນວນຄົນໃນຄອບຄົວ ແລະ ຊື່ຂອງແຕ່ລະຄົນໃນຄອບຄົວ.

2. ການເວົ້າຄຳສັບ, ປະໂຫຍກ ແລະ ຮ້ອງເພງ ຄອບຄົວຂອງຂ້ອຍ: ບັດຄຳສັບ: ຄອບຄົວ, ຮັກແພງ, ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ, ພໍ່ເຖົ້າ, ແມ່ເຖົ້າ, ປູ່, ຍ່າ; ບັດປະໂຫຍກ: ຄອບຄົວຂ້ອຍຮັກແພງກັນ, ຄອບຄົວຂອງຂ້ອຍມີຫຼາຍຄົນ, ຂ້ອຍມີເອື້ອຍ ແລະ ນ້ອງ, ຄອບຄົວຂ້ອຍ ມີຄວາມສຸກ.
3. ລຳດັບທີຂອງອ້າຍ, ເອື້ອຍ ແລະ ນ້ອງ.

### III. ສື່ການຮຽນ-ການສອນ

1. ຮູບພາບໂຄງປະກອບສາຍພົວພັນຂອງບຸກຄົນໃນຄອບຄົວ: ພໍ່ປູ່, ແມ່ຍ່າ, ພໍ່ເຖົ້າ, ແມ່ເຖົ້າ, ພໍ່, ແມ່, ອ້າຍ, ເອື້ອຍ ແລະ ນ້ອງ; ຮູບພາບລຳດັບທີອ້າຍ, ເອື້ອຍ ແລະ ນ້ອງ.
2. ບົດເພງ ຄອບຄົວຂອງຂ້ອຍ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຈຳນວນຄົນໃນຄອບຄົວຂອງເດັກນ້ອຍ.
2. ໃຫ້ເດັກນ້ອຍເວົ້າຄຳສັບ, ປະໂຫຍກ, ຮ້ອງເພງ ແລະ ສົນທະນາຕາມເນື້ອໃນບົດເພງ.
3. ໃຫ້ເດັກນ້ອຍສັງເກດຮູບພາບໂຄງປະກອບສາຍພົວພັນຂອງບຸກຄົນໃນຄອບຄົວ, ສົນທະນາກ່ຽວກັບສາມະຊິກ,ຈຳນວນຄົນ ແລະ ຊື່ຂອງແຕ່ລະຄົນໃນຄອບຄົວ.
4. ໃຫ້ເດັກນ້ອຍສັງເກດຮູບພາບອ້າຍ, ເອື້ອຍ, ນ້ອງ ແລ້ວບອກລຳດັບທີຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນຈຳນວນຄົນໃນຄອບຄົວ, ເວົ້າປະໂຫຍກ ແລະ ເວົ້າຄຳສັບຄືນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງ, ຊ່ວຍເຫຼືອເຊີ່ງກັນ ແລະ ກັນໃນຄອບຄົວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສະມາຊິກ ແລະ ຈຳນວນຄົນໃນຄອບຄົວ.
2. ຄວາມຊັດເຈນໃນການເວົ້າຄຳສັບ, ເວົ້າປະໂຫຍກຕາມເນື້ອໃນບົດເພງ ແລະ ຮ້ອງເພງ.
3. ຄວາມຖືກຕ້ອງໃນການບອກລຳດັບທີຂອງອ້າຍ, ເອື້ອຍ, ນ້ອງ.
4. ການເວົ້າຄຳສຸພາບກັບບຸກຄົນໃນຄອບຄົວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບຄົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການທາສີຮູບພາບສະມາຊິກໃນຄອບຄົວໄດ້ຖືກຕ້ອງ.
2. ທາສີຮູບພາບສະມາຊິກໃນຄອບຄົວໄດ້ຈົບງາມ ແລະ ຢູ່ໃນຂອບ.
3. ແບ່ງປັນສໍສີໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບພາບສະມາຊິກໃນຄອບຄົວ.

### III. ສື່ການຮຽນ-ການສອນ

1. ສໍສີທຽນ ຫຼື ສໍສີໄມ້.
2. ເຈ້ຍຮູບພາບສະມາຊິກໃນຄອບຄົວ.
3. ເຈ້ຍແບບຮູບພາບສະມາຊິກໃນຄອບຄົວທີ່ທາສີແລ້ວ.
4. ບົດເພງ ຄອບຄົວຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຄອບຄົວຂອງຂ້ອຍ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບສະມາຊິກໃນຄອບຄົວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການທາສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການທາສີຮູບພາບສະມາຊິກໃນຄອບຄົວ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການທາສີຮູບພາບສະມາຊິກໃນຄອບຄົວ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການທາສີຮູບພາບສະມາຊິກໃນຄອບ.
2. ຄວາມຈົບງາມໃນການທາສີຮູບພາບສະມາຊິກໃນຄອບ.
3. ການແບ່ງປັນສໍສີໃຫ້ໝູ່ເພື່ອນ.

# ກິດຈະກໍາການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ງູກິນຂຽດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນງູກິນຂຽດ ໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນງູກິນຂຽດໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນງູກິນຂຽດ.

### III. ສື່ການຮຽນ-ການສອນ

1. ບົດຄໍາຄ່ອງ ງູກິນຂຽດ.
2. ບົດເພງ ຄອບຄົວຂອງຂ້ອຍ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍ ຮ້ອງເພງ ຄອບຄົວຂອງຂ້ອຍ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ງູກິນຂຽດ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ງູກິນຂຽດ, ນາຍຄູຕິດຕາມ ແລະ ຊ່ວຍແນະນໍາ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນໃຫ້ມີຄວາມລະມັດລະວັງໃນເວລາຫຼິ້ນ ແລະ ມີຄວາມສາມັກຄີກັນໃນເວລາຫຼິ້ນຕົວຈິງ.
6. ໃຫ້ເດັກນ້ອຍເຄື່ອນໄຫວ ປະກອບເພງ ຄອບຄົວຂອງຂ້ອຍ ຕາມຈິນຕະນາການ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ງູກິນຂຽດ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ງູກິນຂຽດ.
3. ການມີສະຕິ ແລະ ວ່ອງໄວໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບສະມາຊິກໃນຄອບຄົວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບສະມາຊິກໃນຄອບຄົວໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບສະມາຊິກໃນຄອບຄົວ: ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງຍິງ, ນ້ອງຊາຍ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບສະມາຊິກໃນຄອບຄົວ: ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງຍິງ, ນ້ອງຊາຍ, (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບການປະຕິບັດກິດຈະກຳຂອງເດັກນ້ອຍ: ຫຼິ້ນກັບໝູ່ໃນເດີ່ນ, ນອນພັກຜ່ອນ, ດື່ມນ້ຳ, ອະນາໄມມື, ແຕ້ມຮູບ, ອ່ານປຶ້ມ.
3. ບົດເພງ ຄອບຄົວຂອງຂ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍ ຮ້ອງເພງ ຄອບຄົວຂອງຂ້ອຍ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບສະມາຊິກໃນຄອບຄົວ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມ, ຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບສະມາຊິກໃນຄອບຄົວ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກໍາການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນເອື້ອຍ ຫຼື ອ້າຍ, ນ້ອງ, ເປັນພໍ່ເຖົ້າ, ແມ່ເຖົ້າຢ່າງມ່ວນຊື່ນ.
3. ອ່ານຕາມຮູບພາບໃນບົດເລື່ອງ ແລະ ອ່ານຕົວເລກໄດ້ຊັດເຈນ.
4. ເວົ້າຄໍາທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ ວິທີຫຼິ້ນຕາມມຸມ ບົດບາດສົມມຸດ ແລະ ມຸມອ່ານ.
2. ການຫຼິ້ນບົດບາດສົມມຸດເປັນເອື້ອຍ ຫຼື ອ້າຍອາບນໍ້າ ແລະ ປ້ອນເຂົ້ານ້ອງ, ເປັນພໍ່ເຖົ້າ, ແມ່ເຖົ້າອູ້ມຫຼານ.
3. ການຫຼິ້ນມຸມອ່ານຕາມຮູບພາບໃນບົດເລື່ອງກ່ຽວກັບບຸກຄົນໃນຄອບຄົວ ແລະ ອ່ານຕົວເລກ ອາຣັບ ແຕ່ 0-5.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ຕຸກກະຕາ, ຊາມ, ຖ້ວຍ, ບ່ວງ.
2. ມຸມອ່ານ: ປື້ມນິທານເລື່ອງຕ່າງໆທີ່ມີເນື້ອໃນກ່ຽວກັບຄອບຄົວ, ບັດຕົວເລກອາຣັບ 0-5, ກະດານສຽບ ຫຼື ຕິດ.
3. ບົດເພງ ຄອບຄົວຂອງຂ້ອຍ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຄອບຄົວຂອງຂ້ອຍ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນຕາມມຸມ ແລະ ແນະນໍາວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນ ຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນໍາ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄໍາທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນເອື້ອຍ ຫຼື ອ້າຍ, ນ້ອງ, ເປັນພໍ່ເຖົ້າ, ແມ່ເຖົ້າ.
3. ຄວາມຊັດເຈນໃນການອ່ານຕາມຮູບພາບໃນບົດເລື່ອງ ແລະ ອ່ານຕົວເລກ.
4. ການເວົ້າຄໍາທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບການນັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບຢ່າງຖອຍຫຼັງປະກອບການນັບໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບຢ່າງຖອຍຫຼັງປະກອບການນັບ 5-1.

### III. ສື່ການຮຽນ-ການສອນ

1. ເຊືອກ ຫຼື ສໍຂາວ.
3. ທ່າຫັດກາຍຍະບໍລິຫານມື ແລະ ແອວ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານມື ແລະ ແອວ: ທ່າຢືນຕົບມທາງໜ້າ, ຂ້າງຊ້າຍ, ຂ້າງຂວາ ແລະ ທ່າເບັດແອວໄປທາງຊ້າຍ-ຂວາ.
2. ໃຫ້ເດັກນ້ອຍເຕັ້ນເຂົ້າຊິກແຊັກຊ້າຍຂວາ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບຢ່າງຖອຍຫຼັງປະກອບການນັບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນລູ້ຂາ, ເອົາມືທັງສອງຄ້ຳພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບຢ່າງຖອຍຫຼັງປະກອບການນັບ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບຢ່າງຖອຍຫຼັງປະກອບການນັບ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ວຽກຂອງແຕ່ລະຄົນໃນຄອບຄົວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກວຽກຂອງແຕ່ລະຄົນໃນຄອບຄົວ ແລະ ວຽກຂອງຕົນເອງໄດ້ຖືກຕ້ອງ.
2. ນັບໄມ້ດີ້ວແຕ່ 1-5 ໄດ້ຖືກຕ້ອງ.
3. ມີອົດທົນໃນການເຮັດວຽກ.

### II. ເນື້ອໃນຕົ້ນຕໍ

1. ວຽກຂອງແຕ່ລະຄົນໃນຄອບຄົວ:
- ວຽກຂອງພໍ່ ແລະ ແມ່: ເກືອເປັດ, ເກືອໄກ່, ປຸງແຕ່ງອາຫານ, ຊັກເຄື່ອງ, ລີດເຄື່ອງນຸ່ງ.
- ວຽກຂອງອ້າຍ ແລະ ເອື້ອຍ: ຖູເຮືອນ, ລ້າງຖ້ວຍ; ຫຼິ້ນຮ່ວມກັບນ້ອງ ແລະ ເບິ່ງແຍງນ້ອງ.
- ວຽກຂອງຕົນເອງ: ຊ່ວຍອ້າຍ, ເອື້ອຍມ້ຽນຖ້ວຍ, ບ່ວງ ແລະ ຈອກຫຼັງຈາກກິນອາຫານ.

2. ນັບໄມ້ດີ້ວແຕ່ 1-5.

### III. ສື່ການຮຽນ-ການສອນ

1. ໄມ້ດີ້ວ 5 ດີ້ວ.
2. ຮູບພາບ: ພໍ່ເກືອເປັດ, ເກືອໄກ່, ແມ່ລີດເຄື່ອງ, ເອື້ອຍລ້າງຖ້ວຍ, ອ້າຍຖູເຮືອນ ແລະ ນ້ອງມ້ຽນຖ້ວຍຊ່ວຍເອື້ອຍ.

### IV. ກິດຈະກຳການຮຽນ-ການສອນ.

1. ນາຍຄູສົນທະນາກັບເດັກກ່ຽວກັບຊື່ຂອງຄົນໃນຄອບຄົວ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບວຽກຂອງຕົນເອງ ແລະ ວຽກຂອງແຕ່ລະຄົນໃນ ຄອບຄົວ.
3. ໃຫ້ເດັກນ້ອຍນັບໄມ້ດີ້ວແຕ່ 1-5.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບວຽກຂອງຕົນເອງ ແລະ ວຽກຂອງພໍ່, ແມ່, ອ້າຍ, ເອື້ອຍ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນຄອບຄົວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກວຽກຂອງແຕ່ລະຄົນໃນຄອບຄົວ ແລະ ວຽກຂອງຕົນເອງ.
2. ຄວາມຖືກຕ້ອງໃນການນັບໄມ້ດີ້ວແຕ່ 1-5.
3. ຄວາມອົດທົນໃນການເຮັດວຽກ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ຂີດຂຽນສະຫຼະ ິ ຕາມຄຳສັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນສະຫຼະ ິ ຕາມຄຳສັບໄດ້ຖືກຕ້ອງ.
2. ຂີດຂຽນສະຫຼະ ິ ຕາມຄຳສັບໄດ້ຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນສະຫຼະ ິ ຕາມຄຳສັບ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນສະຫຼະ ິ ຕາມຄຳສັບ: ສີ, ໝາກປີ, ຕີ, ທະນີ, ຝາຊີ, ສາລີ.

### III. ສື່ການຮຽນ-ການສອນ

1. ສໍດຳ ແລະ ຢາງລຶບ.
2. ປຶ້ມບົດເຝິກຫັດພາສາລາວເຫຼັ້ມທີ 1 (ໜ້າ 9) ຫຼື ເຈ້ຍແບບຂຽນສະຫຼະ ິ ຕາມຄຳສັບ: ສີ, ໝາກປີ, ຕີ, ທະນີ, ຝາຊີ, ສາລີ.
3. ເຈ້ຍສະຫຼະ ິ ຕາມຄຳສັບ: ສີ, ໝາກປີ, ຕີ, ທະນີ, ຝາຊີ, ສາລີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງບີບນວດຕາມອົ້ງມື ແລະ ກຳມື ແລະ ແບມື.
2. ໃຫ້ເດັກນ້ອຍສັງເກດຄຳສັບແລ້ວອ່ານ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນຂອງການຂີດຂຽນສະຫຼະ ິ ຕາມຄຳສັບ: ສີ, ໝາກປີ, ຕີ, ທະນີ, ຝາຊີ, ສາລີ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຂີດຂຽນສະຫຼະ ິ ຕາມຄຳສັບ: ສີ, ໝາກປີ, ຕີ, ທະນີ, ຝາຊີ, ສາລີ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນສະຫຼະ ິ ຕາມຄຳສັບ.
2. ຄວາມຈົບງາມໃນການຂີດຂຽນສະຫຼະ ິ ຕາມຄຳສັບ
3. ຄວາມອົດທົນໃນການຂີດຂຽນສະຫຼະ ິ ຕາມຄຳສັບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນຍ່າງສາມຂາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ.

### III. ສື່ການຮຽນ-ການສອນ

ໝາກຫວິດ, ກະແຊັກ, ກອງ, ຜ້າຂາວມ້າ, ເຊືອກ ແລະ ໄມ້ສຳລັບຂີດເສັ້ນ.

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍເຄື່ອນໄຫວຮ່າງກາຍຊ້າ, ໄວຕາມສຽງເຄາະກະແຊັກ.
2. ນາຍຄູສະເໜີແບບຫຼິ້ນແຂ່ງຂັນ ຍ່າງສາມຂາ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນ ຍ່າງສາມຂາ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນ ໃຫ້ຫຼິ້ນດ້ວຍຄວາມອົດທົນ ແລະ ບໍ່ຍູ້ກັນລົ້ມໃນເວລາຫຼິ້ນ.
6. ໃຫ້ເດັກນ້ອຍເຮັດທ່າທາງເກືອໄກ່, ເກືອເປັດ ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນ ຍ່າງສາມຂາ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກໍາເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບວຽກຂອງແຕ່ລະຄົນໃນຄອບຄົວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບວຽກຂອງແຕ່ລະຄົນໃນຄອບຄົວໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບວຽກຂອງແຕ່ລະຄົນໃນຄອບຄົວ: ພໍ່ເກືອໄກ່, ແມ່ແຕ່ງກິນ, ເອື້ອຍລ້າງຖ້ວຍ, ອ້າຍຖູເຮືອນ, ນ້ອງຊ່ວຍເອື້ອຍມ້ຽນຖ້ວຍ, ຊ່ວຍອ້າຍເບິ່ງນ້ອງ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບວຽກຂອງແຕ່ລະຄົນໃນຄອບຄົວ: ແມ່ແຕ່ງກິນ, ເອື້ອຍລ້າງຖ້ວຍ, ອ້າຍຖູເຮືອນ, ນ້ອງຊ່ວຍເອື້ອຍມ້ຽນຖ້ວຍ, ຊ່ວຍອ້າຍເບິ່ງນ້ອງ (ສໍາລັບນາຍຄູ, ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບສະມາຊິກໃນຄອບຄົວ.
3. ບົດເພງ ຄອບຄົວຂອງຂ້ອຍ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຄອບຄົວຂອງຂ້ອຍ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນໍາ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບວຽກຂອງແຕ່ລະຄົນໃນຄອບຄົວ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບວຽກຂອງແຕ່ລະຄົນໃນຄອບຄົວ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ອ່ານຕົວເລກຕາມລຳດັບ ແຕ່ 0-5 ແລະ ອ່ານຕາມຮູບພາບໃນປຶ້ມເລື່ອງໄດ້ຊັດເຈນ.
3. ສຳຜັດ ແລະ ນັບໄມ້ດີ້ວໄດ້ຖືກຕ້ອງ ແລະ ຫຼິ້ນເຄື່ອງດົນຕີຢ່າງມ່ວນຊື່ນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ.
2. ສັງເກດ ແລະ ອ່ານຕົວເລກຕາມລຳດັບ ແຕ່ 0 ຫາ 5 ແລະ ອ່ານຕາມຮູບພາບໃນປຶ້ມເລື່ອງຄວາມອົບອຸ່ນໃນຄອບຄົວ.
3. ສຳຜັດ ແລະ ນັບໄມ້ດີ້ວ 1-5, ຫຼິ້ນເຄື່ອງດົນຕີ: ຕີກອງ, ເປົ່າແຄນ, ສັ່ນກະແຊັກ ແລະ ຈັບໄມໂຄຼໂຟນຮ້ອງເພງ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ບັດຕົວເລກຕາມລຳດັບ ແຕ່ 0-5 ແລະ ປຶ້ມນິທານເລື່ອງຄວາມອົບອຸ່ນໃນຄອບຄົວ.
2. ມຸມເຄື່ອງຫຼິ້ນສຳຜັດ: ໄມ້ດີ້ວ ຫຼື ໄມ້ທູ່, ກອງ, ແຄນ, ກະແຊັກ ແລະ ໄມໂຄຼໂຟນ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາຖາມ-ຕອບກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການອ່ານຕົວເລກຕາມລຳດັບ ແຕ່ 0-5 ແລະ ອ່ານຕາມຮູບພາບໃນປຶ້ມເລື່ອງ.
3. ຄວາມຖືກຕ້ອງໃນການສຳຜັດ ແລະ ນັບໄມ້ດີ້ວ, ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ:

- ໄປມຸມຫ້ອງຄົວສະແດງທ່າທາງແຕ່ງອາຫານ.
- ໄປມຸມເຄື່ອງໃຊ້ສະແດງທ່າທາງມ້ຽນເຄື່ອງ.
- ໄປມຸມຫ້ອງນ້ຳສະແດງທ່າທາງປິດກັອກນ້ຳ.

### III. ສື່ການຮຽນ-ການສອນ

1. ທ່າຫັດກາຍຍະບໍລິຫານລຳຄໍ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).
2. ບັດຊື່ມຸມ: ມຸມຫ້ອງຄົວ, ເຄື່ອງໃຊ້ຫ້ອງນ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ຂາ: ທ່າກົ້ມຫົວລົງ, ເງີຍຫົວຂຶ້ນ ແລະ ທ່າໂຢ່ງໂຢະຂາລົງ.
2. ໃຫ້ເດັກນ້ອຍແລ່ນຊິກແຊັກ ໄລຍະ 10 ແມັດ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນກອດເອິກຫຼັບຕາຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ການຊ່ວຍເຫຼືອກັນໃນຄອບຄົວ ແລະ ການປະຢັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການຊ່ວຍເຫຼືອກັນໃນຄອບຄົວໄດ້ຖືກຕ້ອງ.
2. ບອກການປະຢັດໄດ້ຖືກຕ້ອງ.
3. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ອ່ານຕົວເລກສັບປ່ຽນບ່ອນແຕ່ 0-5 ໄດ້ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ການຊ່ວຍເຫຼືອກັນໃນຄອບຄົວ ແລະ ການປະຢັດ.
- ການຊ່ວຍເຫຼືອກັນໃນຄອບຄົວ: ຊ່ວຍກັນແຕ່ງກິນ, ອະນາໄມເຮືອນ, ເບິ່ງແຍງນ້ອງ, ເກັບມ້ຽນເຄື່ອງຮຽນ ແລະ ເຄື່ອງໃຊ້ຂອງຕົນເອງໃຫ້ເປັນລະບຽບ.
- ການປະຢັດນ້ຳ: ບໍ່ເປີດນ້ຳຫຼິ້ນ, ກ່ອນຈະອອກຈາກຫ້ອງນ້ຳຄວນປິດກັອກນ້ຳໃຫ້ແໜ້ນ.
- ການປະຢັດໄຟ: ບໍ່ຄວນເປີດໂທລະທັດ ແລະ ພັດລົມປະໄວ້.

2. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ: ບັດຄຳສັບ: ເຄື່ອງຮຽນ, ເຄື່ອງໃຊ້, ກັອກນ້ຳ, ໂທລະພາບ, ພັດລົມ; ບັດປະໂຫຍກ: ເອື້ອຍຊ່ວຍແມ່ແຕ່ງ ກິນ, ອ້າຍອະນາໄມເຮືອນ, ເດັກນ້ອຍປິດກັອກນ້ຳ, ເດັກນ້ອຍມ້ຽນເຄື່ອງຮຽນໄວ້ເປັນລະບຽບ, ເດັກນ້ອຍ ມອດໄຟ.
3. ການອ່ານຕົວເລກສັບປ່ຽນບ່ອນແຕ່ 0-5.

### III. ສື່ການຮຽນ-ການສອນ

1. ຮູບພາບ: ເຄື່ອງຮຽນ, ເຄື່ອງໃຊ້ໄຟຟ້າ, ພັດລົມ, ໂທລະພາບ, ກັອກນ້ຳ; ເອື້ອຍຊ່ວຍແມ່ແຕ່ງກິນ, ອ້າຍອະນາໄມເຮືອນ, ເດັກນ້ອຍປິດກັອກນ້ຳ, ເດັກນ້ອຍມ້ຽນເຄື່ອງຮຽນ, ເດັກນ້ອຍມອດໄຟ,
2. ບັດຕົວເລກ 0-5.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບວຽກຂອງອ້າຍ ແລະ ເອື້ອຍຢູ່ໃນຄອບຄົວ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກ່ຽວກັບການຊ່ວຍເຫຼືອເຊິ່ງກັນໃນຄອບຄົວ ແລະ ການປະຢັດ.
3. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍອ່ານຕົວເລກສັບປ່ຽນບ່ອນແຕ່ 0-5.
5. ໃຫ້ເດັກນ້ອຍເວົ້າຄືນການປະຢັດນ້ຳ, ໄຟ, ຄຳສັບ ແລະ ປະໂຫຍກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອກັນໃນຄອບຄົວ ແລະ ການປະຢັດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການຊ່ວຍເຫຼືອກັນໃນຄອບຄົວ ແລະ ບອກການປະຢັດ.
2. ຄວາມຊັດເຈນໃນການເວົ້າຄຳ ສັບ ແລະ ປະໂຫຍກຕາມຮູບພາບ.
3. ຄວາມຖືກຕ້ອງອ່ານຕົວເລກສັບປ່ຽນ ບ່ອນແຕ່ 0-5.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການປັ້ນດິນເປັນຮູບໝໍ້ໄດ້ຖືກຕ້ອງ.
2. ປັ້ນດິນເປັນຮູບໝໍ້ໄດ້ຄ້າຍຄື.
3. ແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນຮູບໝໍ້.

### III. ສື່ການຮຽນ-ການສອນ

1. ດິນປັ້ນ ຫຼື ແປ້ງສຳລັບປັ້ນ.
2. ແຜ່ນຮອງປັ້ນ.
3. ເສື້ອກັນເປື້ອນ.
4. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງຢືບ, ຍູບ ແລະ ຖູຝ່າມື.
2. ໃຫ້ເດັກນ້ອຍສັງເກດຮູບໝໍ້ທີ່ປັ້ນແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການປັ້ນດິນ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການປັ້ນດິນເປັນຮູບໝໍ້.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການການປັ້ນດິນເປັນຮູບໝໍ້.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຮັກຄວາມສະອາດ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການປັ້ນດິນເປັນຮູບໝໍ້.
2. ຄວາມຄ້າຍຄືໃນການປັ້ນດິນເປັນຮູບໝໍ້.
3. ການແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນ ນ້ຳຂຶ້ນ-ນ້ຳລົງໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ.

### III. ສື່ການຮຽນ-ການສອນ

1. ກອງ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍຢືນເປັນວົງມົນ ແລະ ເຄື່ອນໄຫວຕາມບົດບາດສົມມຸດເປັນໂຕເປັດລອຍນ້ຳ ໄປ-ມາ.
2. ນາຍຄູສະເໜີ ແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນໃຫ້ລະວັງບໍ່ໃຫ້ຕຳກັນ, ບໍ່ຍູ້ກັນໃນເວລາຫຼິ້ນ.
6. ໃຫ້ເດັກນ້ອຍເຮັດທ່າທາງໄກ່ຕອດອາຫານ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ.
2. ຄວາມຖືກຕ້ອງ ໃນການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ-ນ້ຳລົງ.
3. ຄວາມເບີກບານມ່ວນຊື່ນ ໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບແມ່ຂົ້ວຜັກກາດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບພາບແມ່ຂົ້ວຜັກກາດໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບພາບແມ່ຂົ້ວຜັກກາດ: ແມ່ໄປຊື້ຜັກກາດຢູ່ຕະຫຼາດ, ແມ່ລ້າງຜັກໃຫ້ສະອາດ, ແມ່ຊອຍຜັກເປັນຕ່ອນ, ແມ່ຂົ້ວຜັກໃສ່ພື້ຂາງ, ແມ່ຕັກຂົ້ວຜັກໃສ່ຈານ, ທຸກຄົນໃນຄອບຄົວກິນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບພາບແມ່ຂົ້ວຜັກກາດ: ແມ່ໄປຊື້ຜັກກາດຢູ່ຕະຫຼາດ, ແມ່ລ້າງຜັກໃຫ້ສະອາດ, ແມ່ຊອຍຜັກເປັນຕ່ອນ, ແມ່ຂົ້ວຜັກໃສ່ພື້ຂາງ, ແມ່ຕັກຂົ້ວຜັກໃສ່ຈານ, ທຸກຄົນໃນຄອບຄົວກິນ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບວຽກຂອງແຕ່ລະຄົນໃນຄອບຄົວ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບວຽກຂອງແຕ່ລະຄົນໃນຄອບຄົວ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບພາບແມ່ຂົ້ວຜັກກາດ.
6. ສຶກສາອົບຮົມເດັກນ້ອຍໃຫ້ກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບແມ່ຂົ້ວຜັກກາດ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ເວົ້າປະໂຫຍກຕາມຮູບພາບ ແລະ ອ່ານຕົວເລກໄດ້ຊັດເຈນ.
3. ປັ້ນດິນ ແລະ ຂຽນສະຫຼະ ິ ໃນຄຳສັບຕາມຮອຍຈ້ຳໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມອ່ານ ແລະ ສິລະປະສ້າງສັນ.
2. ການເວົ້າເປັນປະໂຫຍກຕາມຮູບພາບ: ເອື້ອຍຊ່ວຍແມ່ແຕ່ງກິນ, ອ້າຍອະນາໄມເຮືອນ, ເດັກນ້ອຍປິດກ໊ອກນ້ຳ, ເດັກນ້ອຍມ້ຽນເຄື່ອງຮຽນໄວ້ເປັນລະບຽບ, ນາງນ້ອຍມອດໄຟ; ອ່ານຕົວເລກສັບປ່ຽນບ່ອນ 0-5.
2. ການປັ້ນດິນເປັນຮູບພໍ້, ຂຽນສະຫຼະ ິ ໃນຄຳສັບ: ສິ, ຊິ, ນິ, ພິ, ປິ, ດິ, ຕິ ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ຮູບພາບ: ເອື້ອຍຊ່ວຍແມ່ແຕ່ງກິນ, ອ້າຍອະນາໄມ ເຮືອນ, ເດັກນ້ອຍປິດກ໊ອກນ້ຳ, ເດັກນ້ອຍມ້ຽນເຄື່ອງຮຽນໄວ້ເປັນລະບຽບ, ເດັກນ້ອຍຍິງມອດໄຟ.
2. ມຸມສິລະປະສ້າງສັນ: ດິນປັ້ນ ຫຼື ແປ້ງສຳລັບປັ້ນ, ຜ້າຮອງປັ້ນ, ຊາມນ້ຳ, ເສື້ອກັນເປື້ອນ, ສະບູ, ຜ້າເຊັດມື, ສໍດຳ, ຢາງລຶບ, ບັດຕົວເລກອາຣັບ 0-5, ປຶ້ມບົດເຝິກຫັດ ຫຼື ເຈ້ຍຮອຍຈ້ຳສະຫຼະ ິ ໃນຄຳສັບ: ສິ, ຊິ, ນິ, ພິ, ປິ, ດິ, ຕິ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາຖາມ-ຕອບກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ ກຳນົດໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການເວົ້າປະໂຫຍກຕາມຮູບພາບ ແລະ ອ່ານຕົວເລກ.
3. ຄວາມຖືກຕ້ອງໃນການປັ້ນດິນ, ຂຽນສະຫຼະ ິ ໃນຄຳສັບຕາມຮອຍຈ້ຳ.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງ ການຊ່ວຍເຫຼືອກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເລື່ອງ ການຊ່ວຍເຫຼືອກັນຢ່າງມ່ວນຊື່ນ.
2. ກ້າສະແດງອອກໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ: ລູກບໍ່ສະບາຍພໍ່ແມ່ພາໄປໂຮງໝໍ, ແພດກວດສຸຂະພາບພີ່ນ້ອງມາຢາມຄົນເຈັບ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານແຂນ ແລະ ຂາ: ທ່າມືຄ້ຳແອວ, ຍົກແຂນຂຶ້ນແກວ່ງມືເທິງຫົວ, ພັບແຂນສອກ ເຂົ້າ ແລະ ທ່າໂຢ່ງໂຢ້ະຂາລົງ.
2. ໃຫ້ເດັກນ້ອຍເຕັ້ນຈ່າງຂາ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍວາແຂນອອກ, ພ້ອມທັງຈ່າງຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງອອກໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງ ການຊ່ວຍເຫຼືອກັນ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຍາດພີ່ນ້ອງຂອງພໍ່ ແລະ ແມ່

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຍາດຕິພີ່ນ້ອງຂອງພໍ່, ແມ່ ແລະ ການຊ່ວຍເຫຼືອກັນໄດ້ຖືກຕ້ອງ.
2. ເວົ້າຄຳສັບ, ປະໂຫຍກຕາມເນື້ອໃນຄຳຄ່ອງ ໄດ້ຊັດເຈນ.
3. ຄວາມຊັດເຈນໃນການເລົ່າຄຳຄ່ອງ.

### II. ເນື້ອໃນຕົ້ນຕໍ

1. ຍາດຕິພີ່ນ້ອງຂອງພໍ່, ແມ່ ແລະ ການຊ່ວຍເຫຼືອ:

- ຍາດຕິພີ່ນ້ອງຂອງພໍ່: ພໍ່ປູ່ (ພໍ່ຂອງພໍ່), ແມ່ຍ່າ (ແມ່ຂອງພໍ່), ປ້າ (ເອື້ອຍຂອງພໍ່), ລຸງ (ອ້າຍຂອງພໍ່), ອາວ (ນ້ອງຊາຍຂອງພໍ່), ອາ (ນ້ອງສາວຂອງພໍ່).
- ຍາດຕິພີ່ນ້ອງຂອງແມ່: ພໍ່ເຖົ້າ (ພໍ່ຂອງແມ່), ແມ່ເຖົ້າ (ແມ່ຂອງແມ່), ປ້າ (ເອື້ອຍຂອງແມ່), ລຸງ (ອ້າຍຂອງແມ່), ນ້າບ່າວ (ນ້ອງຊາຍຂອງແມ່), ນ້າສາວ (ນ້ອງສາວຂອງແມ່).
- ການຊ່ວຍເຫຼືອຍາດຕິພີ່ນ້ອງ: ແບ່ງປັນອາຫານ, ສິ່ງຂອງຕ່າງໆໃຫ້, ຢ້ຽມຢາມ ແລະ ເບິ່ງແຍງໃນເວລາເຈັບເປັນ.

2. ການເວົ້າຄຳສັບ, ປະໂຫຍກ, ເລົ່າຄຳຄ່ອງ ຊ່ວຍເຫຼືອກັນ.
3. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.

### III. ສື່ການຮຽນ-ການສອນ

1. ຮູບພາບສາຍພົວພັນຂອງພໍ່ ແລະ ແມ່: ພໍ່ປູ່, ແມ່ຍ່າ, ລຸງ, ປ້າ, ອາວ, ອາ; ພໍ່ເຖົ້າ, ແມ່ເຖົ້າ, ລຸງ, ປ້າ, ນ້າບ່າວ, ນ້າສາວ, ເດັກນ້ອຍແບ່ງປັນອາຫານໃຫ້ພີ່ນ້ອງ, ເດັກນ້ອຍໄປຢ້ຽມຢາມພີ່ນ້ອງບໍ່ສະບາຍ.
2. ບົດຄຳຄ່ອງ ຊ່ວຍເຫຼືອກັນ ເບິ່ງປຶ້ມຄູ່ມືຄູ.
3. ບັດຄຳສັບ: ປູ່, ຍ່າ, ປ້າ, ລຸງ, ອາວ, ອາ, ແມ່, ເອື້ອຍ, ນ້ອງ, ດີໃຈ, ຊ່ວຍເຫຼືອ, ເຊັດ ຕົວ, ອາຫານ; ບັດປະໂຫຍກ: ແມ່ຂ້ອຍເປັນໄຂ້, ພວກຂ້ອຍຊ່ວຍກັນເບິ່ງແມ່, ເອື້ອຍປຸງແຕ່ງອາຫານ, ຂ້ອຍເຊັດຕົວໃຫ້ແມ່, ເດັກນ້ອຍແບ່ງປັນອາຫານໃຫ້ພີ່ນ້ອງ, ເດັກນ້ອຍໄປຢ້ຽມຢາມພີ່ນ້ອງບໍ່ສະບາຍ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການຊ່ວຍເຫຼືອກັນໃນຄອບຄົວທີ່ເດັກນ້ອຍເຄີຍປະຕິບັດ.
2. ໃຫ້ເດັກນ້ອຍເວົ້າຄຳສັບ, ປະໂຫຍກ, ເລົ່າຄຳຄ່ອງ, ສົນທະນາຕາມເນື້ອໃນບົດຄຳຄ່ອງ.
3. ໃຫ້ເດັກນ້ອຍສັງເກດຮູບພາບສາຍພົວພັນຂອງພໍ່ ແມ່, ສົນທະນາກ່ຽວກັບສາຍພົວພັນຍາດຕິພີ່ນ້ອງຂອງພໍ່ແມ່ ແລະ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ.
4. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນຍາດຕິພີ່ນ້ອງຂອງພໍ່ ແມ່, ການຊ່ວຍເຫຼືອກັນ, ເວົ້າຄຳສັບ, ເວົ້າເປັນປະໂຫຍກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງ ແລະ ການຊ່ວຍເຫຼືອຍາດຕິພີ່ນ້ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຍາຕິພີ່ ນ້ອງຂອງພໍ່, ແມ່ ແລະ ການຊ່ວຍເຫຼືອກັນ.
2. ຄວາມຊັດເຈນໃນການເວົ້າຄຳສັບ, ປະໂຫຍກຕາມເນື້ອໃນ ຄຳຄ່ອງ ແລະ ເລົ່າຄຳຄ່ອງ.
3. ຄວາມຊັດເຈນໃນການເລົ່າຄຳຄ່ອງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພິມສີດ້ວຍກ້ານກ້ວຍເປັນຮູບພາບຕ່າງໆຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການພິມສີດ້ວຍກ້ານກ້ວຍເປັນຮູບພາບຕ່າງໆຕາມຈິນຕະນາການໄດ້ຖືກຕ້ອງ.
2. ພິມສີດ້ວຍກ້ານກ້ວຍເປັນຮູບພາບຕ່າງໆຕາມຈິນຕະນາການໄດ້ສະອາດຈົບງາມ.
3. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການພິມສີ.

### II. ເນື້ອໃນຕົ້ນຕໍ

ການພິມສີດ້ວຍກ້ານກ້ວຍເປັນຮູບພາບຕ່າງໆຕາມຈິນຕະນາການ.

### III. ສື່ການຮຽນ-ການສອນ

1. ສີນ້ຳ ແລະ ເຈ້ຍຂາວ.
2. ກ້ານກ້ວຍ.
3. ເຈ້ຍແບບຮູບທີ່ພິມປັນຮູບພາບຕ່າງໆແລ້ວ.
5. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.
6. ບົດຄຳຄ່ອງຊ່ວຍເຫຼືອກັນ.

### IV. ກິດຈະກຳການຮຽນ-ການສອນ

1. ແນະນຳໃຫ້ເດັກນ້ອຍເລົ່າຄຳຄ່ອງ ຊ່ວຍເຫຼືອກັນ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບທີ່ພິມສີແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການພິມສີດ້ວຍກ້ານກ້ວຍ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການພິມສີດ້ວຍກ້ານກ້ວຍເປັນຮູບພາບຕ່າງທຕາມຈິນຕະນາການ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການພິມສີດ້ວຍກ້ານກ້ວຍເປັນຮູບພາບຕ່າງໆຕາມຈິນຕະນາການ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຮັກສາຄວາມສະອາດ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການພິມສີດ້ວຍກ້ານກ້ວຍເປັນຮູບພາບຕ່າງໆຕາມຈິນຕະນາການ.
2. ຄວາມສະອາດຈົບງາມໃນການພິມສີດ້ວຍກ້ານກ້ວຍເປັນຮູບພາບຕ່າງໆຕາມຈິນຕະນາການ.
3. ຄວາມລະມັດລະວັງໃນການພິມສີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ການຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມືໃຫ້ແຂງແຮງໃນເວລາກອງຊາຍ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈ.

### III. ສື່ການຮຽນ-ການສອນ

1. ອ່າງດິນຊາຍ ຫຼື ຄຸດິນຊາຍ, ປູນຂາວ ແລະ ທຸງສີຕ່າງໆ.
2. ບົດຄຳຄ່ອງ ຊ່ວຍເຫຼືອກັນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍ ເລົ່າຄຳຄ່ອງ ຊ່ວຍເຫຼືອກັນ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ການຫຼິ້ນແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນໃນເວລາຫຼິ້ນໃຫ້ລະວັງບໍ່ໃຫ້ວ່ານຊາຍໃສ່ກັນກັນ, ຫຼິ້ນແລ້ວຊ່ວຍກັນເກັບມ້ຽນອຸປະກອນ ແລະ ລ້າງຕີນ-ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍເອົາມືສອງເບື້ອງຍົກຂຶ້ນກາຍຫົວ ແລະ ເຮັດທ່າທາງພັດມາຊ້າໆ ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈ.
2. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາກອງຊາຍ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງພໍ່

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງພໍ່ໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງພໍ່: ປູ່, ຍ່າ, ປ້າ, ລຸງ, ອາວ, ອາ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງພໍ່: ປູ່, ຍ່າ, ປ້າ, ລຸງ, ອາວ, ອາ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບພາບແມ່ຂົ້ວຜັກກາດ.
3. ບົດຄຳຄ່ອງ ຊ່ວຍເຫຼືອກັນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍ ເລົ່າຄຳຄ່ອງ ຊ່ວຍເຫຼືອກັນ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງພໍ່.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງພໍ່.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກໍາການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີຢ່າງມ່ວນຊື່ນ ແລະ ລຽນຕົວເລກທີ່ເຮັດດ້ວຍກະດາດຊາຍໄດ້ຖືກຕ້ອງ.
3. ເວົ້າປະໂຫຍກຕາມຮູບພາບ ແລະ ອ່ານຕົວເລກໄດ້ຊັດເຈນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມຫຼິ້ນສໍາຜັດ ແລະ ມຸມອ່ານ.
2. ການຫຼິ້ນເຄື່ອງດົນຕີ: ຕີກອງ, ດີດກີຕ້າ, ສັ່ນກະແຊັກ, ຈັບໄມໂຄໂຟນຮ້ອງເພງ; ສໍາຜັດ ແລະ ລຽນຕົວເລກທີ່ເຮັດ ດ້ວຍກະດາດຊາຍ: ແຕ່ 0-5.
3. ການເວົ້າເປັນປະໂຫຍກຕາມຮູບພາບ: ເອື້ອຍຊ່ວຍແມ່ແຕ່ງກິນ, ອ້າຍອະນາໄມເຮືອນ, ເດັກນ້ອຍປິດກັອກນໍ້າໃຫ້ແໜ້ນ, ເດັກນ້ອຍມ້ຽນເຄື່ອງຮຽນໄວ້ເປັນລະບຽບ, ນາງນ້ອຍມອດໄຟທຸກຄັ້ງກ່ອນອອກຈາກເຮືອນ ແລະ ອ່ານຕົວ ເລກ 0-5 ສັບປ່ຽນບ່ອນ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສໍາຜັດ: ເຄື່ອງດົນຕີຂອງຈິງ ຫຼື ຈໍາລອງກອງ, ກີຕ້າ, ກະແຊັກ, ໄມໂຄໂຟນ, ບັດຕົວເລກທີ່ເຮັດດ້ວຍກະດາດຊາຍ 0-5.
2. ມຸມອ່ານ: ຮູບພາບເອື້ອຍຊ່ວຍແມ່ແຕ່ງກິນ, ອ້າຍອະນາໄມເຮືອນ, ເດັກນ້ອຍປິດກັອກນໍ້າ, ເດັກນ້ອຍມ້ຽນເຄື່ອງຮຽນໄວ້ເປັນລະບຽບ, ເດັກນ້ອຍຍິງມອດໄຟ, ບັດຕົວເລກອາລັບ 0-5.
3. ບົດຄໍາຄ່ອງ ຊ່ວຍເຫຼືອກັນ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄໍາຄ່ອງ ຊ່ວຍເຫຼືອກັນ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ແນະນໍາວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນໍາ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ ແລະ ຄວາມຖືກຕ້ອງໃນການລຽນຕົວເລກ.
3. ຄວາມຊັດເຈນໃນການເວົ້າປະໂຫຍກຕາມຮູບພາບ ແລະ ອ່ານຕົວເລກ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ຄອບຄົວຂອງຂ້ອຍ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

## II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ ຄອບຄົວຂອງຂ້ອຍ.

## III. ສື່ການຮຽນ-ການສອນ

1. ກອງ ແລະ ເຊືອກ.
2. ບົດເພງ ຄອບຄົວຂອງຂ້ອຍ.
3. ທ່າຫັດກາຍຍະບໍລິຫານແຂນ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານແຂນ ແລ ຕີນ: ທ່າກອດແຂນຊ້າຍໄຂວ່ແຂນຂວາ, ແຂນຂວາໄຂວ່ແຂນຊ້າຍ ແລະ ທ່າໝູບຄໍ່ຕີນ.
2. ໃຫ້ເດັກນ້ອຍໂດດຢຽບເສັ້ນເຊືອກໄລຍະຫ່າງ 20-50 ຊມ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາ, ເອົາມືທັງສອງຄິ່ມພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຄວາມອົບອຸ່ນໃນຄອບຄົວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຄວາມອົບອຸ່ນໃນຄອບຄົວໄດ້ຖືກຕ້ອງ.
2. ເວົ້າຄຳສັບ, ປະໂຫຍກຕາມເນື້ອໃນນິດນິທານ.
3. ເວົ້າອອກສຽງຄຳສັບທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.
4. ສະແດງຄວາມຮັກຕໍ່ບຸກຄົນໃນຄອບຄົວ.

### II. ເນື້ອໃນຕົ້ນຕໍ

1 ຄວາມອົບອຸ່ນໃນຄອບຄົວສະແດງອອກທາງກາຍ ແລະ ວາຈາ:

- ການສະແດງອອກທາງກາຍ: ການໂອບກອດ, ອູ້ມ, ຫອມແກ້ມ ແລະ ລູບຫົວ.
- ການສະແດງອອກທາງວາຈາ: ການໃຊ້ຄຳເວົ້າອ່ອນໂຍນ (ຊົມເຊີຍ, ດີຫຼາຍ, ຄຳຮູ້, ງາມຫຼາຍ, ເກັ່ງຫຼາຍ).

2. ການເວົ້າຄຳສັບ, ປະໂຫຍກ ແລະ ຟັງນິທານເລື່ອງ ຄອບຄົວອົບອຸ່ນ.
3. ການເວົ້າອອກສຽງຄຳສັບທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ພໍ່ອູ້ມລູກ, ແມ່ກອດຫອມແກ້ມລູກ, ພໍ່ແມ່ຕົບມືຊົມເຊີຍລູກ, ເດັກນ້ອຍກິນອາຫານ, ເດັກນ້ອຍດົມດອກໄມ້, ດອກຈຳປາຈູມ, ດອກຈຳປາຫຼາຍດອກຈຸ້ມກັນ.
2. ນິດນິທານເລື່ອງ ຄອບຄົວອົບອຸ່ນ ເບິ່ງໃນປຶ້ມຄູ່ມືຄູ ໜ້າທີ...
3. ບັດຄຳສັບ: ກິນ, ກິ່ນ, ຈູມ, ຈຸ້ມ, ຕະຫຼາດ, ອູ້ມ, ກອດ, ຫອມແກ້ມ, ລົມກັນ, ນັ່ງ, ໂຊກດີ, ຈອກນ້ຳ; ບັດປະໂຫຍກ: ແມ່ເຖົ້າກອດ ແລະ ຫອມແກ້ມຄຳພຽນ, ນ້າສາວແຕ່ງອາຫານຫຼາຍຢ່າງ, ພວກເພິ່ນລົມກັນຢ່າງມ່ວນຊື່ນ, ແກ້ມຂອງຄຳພຽນແດງອົ່ງຕິ່ງ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການຊ່ວຍເຫຼືອຍາດພີ່ນ້ອງ.
2. ໃຫ້ເດັກນ້ອຍເວົ້າຄຳສັບ, ປະໂຫຍກ, ເລົ່ານິທານ ແລະ ສົນທະນາຕາມເນື້ອໃນນິດນິທານ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກ່ຽວກັບຄວາມອົບອຸ່ນໃນຄອບຄົວ.
4. ໃຫ້ເດັກນ້ອຍເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນຄວາມອົບອຸ່ນໃນຄອບຄົວທີ່ສະແດງອອກທາງກາຍ, ວາຈາ, ເວົ້າຄຳສັບ ແລະ ປະໂຫຍກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ ແລະ ການສະແດງຄວາມຮັກຕໍ່ບຸກຄົນໃນຄອບຄົວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຄວາມ ອົບອຸ່ນໃນຄອບຄົວ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນນິດນິທານ.
3. ຄວາມຊັດເຈນໃນການເວົ້າອອກສຽງຄຳສັບທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ
4. ການສະແດງຄວາມຮັກຕໍ່ບຸກຄົນໃນຄອບຄົວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນສະຫຼະ ິ, ວັນນະຍຸດ ່, ້ ຕາມຄຳສັບ

**I. ຈຸດປະສົງ**

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນສະຫຼະ ິ, ວັນນະຍຸດ ່,້ ຕາມຄຳສັບໄດ້ຖືກຕ້ອງ.
2. ຂີດຂຽນສະຫຼະ ິ, ວັນນະຍຸດ ່, ້ ຕາມຄຳສັບໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນ, ສະຫຼະ, ວັນນະຍຸດ ່, ້ ຕາມຄຳສັບ.

**II. ເນື້ອໃນຕົ້ນຕໍ**

ການຂີດຂຽນສະຫຼະ ິ, ວັນນະຍຸດ ່, ້ ຕາມຄຳສັບ: ດິ, ດິ່, ດິ້; ປິ, ປິ່, ປິ້; ນິ, ນິ່, ນິ້.

**III. ສື່ການຮຽນ-ການສອນ**

1. ສໍດຳ ແລະ ຢາງລຶບ.
2. ປຶ້ມບົດເຝິກຫັດພາສາລາວ (ໜ້າ 9) ຫຼື ເຈ້ຍແບບຂຽນສະຫຼະ ິ, ວັນນະຍຸດ ່, ້: ຕາມຄຳສັບ: ດິ, ດິ່, ດິ້; ປິ, ປິ່, ປິ້; ນິ, ນິ່, ນິ້.
3. ເຈ້ຍແບບຂຽນສະຫຼະ ິ, ວັນນະຍຸດ ່, ້ ຕາມຄຳສັບ: ດິ, ດິ່, ດິ້; ປິ, ປິ່, ປິ້; ນິ, ນິ່, ນິ້.

**IV. ກິດຈະກຳການຮຽນ-ການສອນ**

1. ແນະນຳໃຫ້ເດັກນ້ອຍເຮັດທ່າທາງດຶ້ດນິ້ວມືເພື່ອລະນິ້ວ, ສັ່ນມື.
2. ໃຫ້ເດັກນ້ອຍສັງເກດວັນນະຍຸດ ່, ້ ແລ້ວອ່ານຄຳສັບ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນສະຫຼະ ິ, ວັນນະຍຸດ ່, ້ ຕາມຄຳສັບ: ດິ, ດິ່, ດິ້; ປິ, ປິ່, ປິ້; ນິ, ນິ່, ນິ້.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍນຳສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຂີດຂຽນສະຫຼະ ິ, ວັນນະຍຸດ ່, ້ ຕາມຄຳສັບ: ດິ, ດິ່, ດິ້; ປິ, ປິ່, ປິ້; ນິ, ນິ່, ນິ້.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມງາມ ແລະ ເກັບຜົນງານໄປໄວ້ບ່ອນທີ່ຄູກຳນົດ.

**V. ການວັດ ແລະ ການປະເມີນຜົນ**

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄ ວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນສະຫຼະ ິ, ວັນນະຍຸດ ່, ້ ຕາມຄຳສັບ.
2. ຄວາມຄວາມຈົບງາມໃນການຂີດຂຽນສະຫຼະ ິ, ວັນນະຍຸດ ່, ້ ຕາມຄຳສັບ.
3. ຄວາມອົດທົນໃນການຂີດຂຽນສະຫຼະ ິ, ວັນນະຍຸດ ່, ້ ຕາມຄຳສັບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນແລ່ນເຂົ້າເຮືອນນ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເຂົ້າເຮືອນນ້ອຍໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເຂົ້າເຮືອນນ້ອຍໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເຂົ້າເຮືອນນ້ອຍ.

### III. ສື່ການຮຽນ-ການສອນ

1. ເຊືອກ ແລະ ໄມ້ສຳລັບຂີດເສັ້ນ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍລຽນແຖວ ແລະ ເຄື່ອນໄຫວເຮັດທ່າທາງຖີບລົດນ້ອຍໄປຕະຫຼາດ.
2. ນາຍຄູສະເໜີ ແບບຫຼິ້ນ ແຂ່ງຂັນແລ່ນເຂົ້າເຮືອນນ້ອຍ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍ ແບບຫຼິ້ນ ແຂ່ງຂັນແລ່ນ ເຂົ້າເຮືອນນ້ອຍ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນໃຫ້ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະມັດລະວັງເວລາແລ່ນ, ບໍ່ຊຸກ ກັນລົ້ມໃນເວລາຫຼິ້ນ.
6. ໃຫ້ເດັກນ້ອຍເຮັດທ່າທາງກວາດ, ຖູເຮືອນ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນ.
2. ຄວາມຖືກຕ້ອງໃນເວລາຫຼິ້ນແບບຫຼິ້ນ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບຄອບຄົວອົບອຸ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບໃນແຜ່ນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບຄອບຄົວອົບອຸ່ນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບຄອບຄົວອົບອຸ່ນ: ພໍ່ແມ່ໂອບກອດລູກ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບຄອບຄົວອົບອຸ່ນ: ພໍ່ແມ່ໂອບກອດລູກ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບຍາດຕິພີ່ນ້ອງທາງພໍ່.
3. ບົດຄຳຄ່ອງ ຊ່ວຍເຫຼືອກັນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຊ່ວຍເຫຼືອກັນ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນແຜ່ນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບຄອບຄົວອົບອຸ່ນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການເກມຕໍ່ຮູບພາບຄອບຄົວອົບອຸ່ນ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ ແລະ ອ່ານຕາມຮູບພາບໃນປຶ້ມນິທານໄດ້ຊັດເຈນ.
3. ຫຼິ້ນບົດບາດສົມມຸດເປັນພໍ່, ແມ່, ລູກ ແລະ ເປັນຕົວລະຄອນໃນບົດເລື່ອງຢ່າງມ່ວນຊື່ນ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ ວິທີຫຼິ້ນຕາມມຸມອ່ານ ແລະ ບົດບາດສົມມຸດ.
2. ການເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ: ກິນ, ກິ່ນ, ຈູມ, ຈຸ້ມ; ອ່ານຕາມຮູບພາບໃນປຶ້ມນິທານເລື່ອງ: ຄອບຄົວອົບອຸ່ນ.
3. ການຫຼິ້ນບົດບາດສົມມຸດເປັນພໍ່, ແມ່ ແລະ ລູກພາກັນໄປທ່ຽວ; ເປັນຕົວລະຄອນໃນບົດເລື່ອງ: ຄອບຄົວອົບອຸ່ນ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ຮູບພາບເດັກນ້ອຍກິນອາຫານ, ເດັກນ້ອຍດົມດອກໄມ້, ດອກຈຳປາຈູມ, ດອກຈຳປາຫຼາຍດອກຈຸ້ມກັນ. ປຶ້ມນິທານເລື່ອງ: ຄອບຄົວອົບອຸ່ນ.
2. ມຸມບົດບາດສົມມຸດ: ລົດຈຳລອງ, ອາຫານ, ສາດ ແລະ ໜວກຕົວລະຄອນໃນບົດເລື່ອງ: ຄອບຄົວອົບອຸ່ນ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມບົດບາດສົມມຸດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບ ພາບ ແລະ ອ່ານຕາມຮູບພາບໃນປຶ້ມນິທານ.
3. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນພໍ່, ແມ່, ລູກ ແລະ ເປັນຕົວລະຄອນໃນບົດເລື່ອງ.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ຈຸດປະສົງສຳລັບ ອາທິດທີ 2

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:
1. ສະແດງທ່າທາງຕາມສຽງສັນຍານ ສັ່ນກະແຊັກ, ເຄາະໄມ້ໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄອງໄດ້ຖືກຕ້ອງ.
3. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
4. ກ້າສະແດງອອກໃນເວລາສະແດງທ່າທາງ.
5. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
6. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
7. ອົດທົນໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:
1. ບອກການປະຕິບັດຕົນໃນການກິນ, ດື່ມໄດ້ຖືກຕ້ອງ ແລະ ປະຕິບັດຕົວຈິງໃນການກິນ, ດື່ມ.
2. ບອກຕຳແໜ່ງໃນ ແລະ ນອກໄດ້ຖືກຕ້ອງ.
3. ມີມາລະຍາດໃນການກິນ ແລະ ດື່ມ, ການການນັ່ງ, ການຍ່າງ ແລະ ການນົບ.
4. ບອກການປະຕິບັດຕົນໃນການນັ່ງ, ການຍ່າງ ແລະ ການນອນໄດ້ຖືກຕ້ອງ.
5. ປະຕິບັດຕົວຈິງໃນການນັ່ງຕັ່ງ, ການຍ່າງ, ການຂໍອະນຸຍາດ, ການຮັບສິ່ງຂອງ, ການນົບໄຫວ້ພະສົງ, ການນົບສະບາຍດີ ແລະ ການນົບຂໍອະນຸຍາດຜູ້ໃຫຍ່.
6. ອ່ານອອກສຽງຄຳສັບທີ່ປະສົມສະຫຼະ ີ, ອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ່, ້ ໄດ້ຊັດເຈນ.
7. ບອກການປະຕິບັດຕົນໃນການຂໍອະນຸຍາດ ແລະ ການຮັບສິ່ງຂອງໄດ້ຖືກຕ້ອງ.
8. ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດຄຳຄອງ, ບົດເພງ, ບົດນິທານ, ຮູບພາບ, ເລົ່າຄຳຄອງ ແລະ ຮ້ອງເພງໄດ້ຊັດເຈນ.
9. ບອກມາລະຍາດໃນການນົບໄດ້ຖືກຕ້ອງ.
10. ບອກຊື່ເຄື່ອງຮຽນ, ເຄື່ອງນຸ່ງ, ເຄື່ອງຫຼິ້ນ ແລະ ການປະຢັດໄດ້ຖືກຕ້ອງ.
11. ມີຄວາມປະຢັດເຄື່ອງຮຽນ, ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:
1. ບອກຂັ້ນຕອນການຂີດຂຽນສະຫຼະ ີ, ຕົວສະກົດຕາມຄຳສັບ, ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ; ຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ; ແຕ້ມ ແລະ ທາສີຮູບພາບໂຕະ, ຕັ່ງ ແລະ ຂັ້ນຕອນການແຕ້ມສໍດຳ, ບັນທັດຕາມແບບໄດ້ຖືກຕ້ອງ.
2. ຂີດຂຽນສະຫຼະ ີ, ຕົວສະກົດຕາມຄຳສັບ, ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ; ຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈໄດ້ສະອາດຈົບງາມ.
3. ແຕ້ມຕາມຮອຍຈ້ຳ ແລະ ທາສຮູບພາບໂຕະ ແລະ ຕັ່ງໄດ້ສະອາດຈົບງາມ ແລະ ຢູ່ໃນຂອບ.
4. ແຕ້ມຮູບພາບ: ສໍດຳ, ບັນທັດຕາມແບບໄດ້ຄ້າຍຄື.

5. ມີຄວາມອົດທົນໃນການຂີດຂຽນສະຫຼະ ີ, ຕົວສະກົດຕາມຄຳສັບ, ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ; ຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ.
6. ແບ່ງປັນສໍສີໃຫ້ໝູ່ເພື່ອນ.
7. ມີຄວາມອົດທົນໃນການແຕ້ມຮູບພາບ: ສໍດຳ, ບັນທັດ ຕາມແບບ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແຂ່ງຂັນກົ້ງບ້ວງ, ແບບຫຼິ້ນແມວຈັບໜູ, ແບບຫຼິ້ນຕັ່ງວິເສດ, ພິມຮູບຕ່າງໆດ້ວຍດິນຊາຍ, ແຂ່ງຂັນກິນໝາກກ້ຽງໄດ້.
2. ຫຼິ້ນແຂ່ງຂັນກົ້ງບ້ວງ, ແບບຫຼິ້ນແມວຈັບໜູ, ແບບຫຼິ້ນ ຕັ່ງວິເສດ, ພິມຮູບຕ່າງໆດ້ວຍດິນ, ແຂ່ງຂັນກິນໝາກກ້ຽງໄດ້ຖືກຕ້ອງ.
3. ມີຄວາມຄ່ອງແຄ້ວ ແລະ ວ່ອງໄວ ໃນເວລາຫຼິ້ນ.
4. ມີສະຕິ ແລະ ວ່ອງໄວໃນເວລາຫຼິ້ນ.
5. ກ້າສະແດງອອກໃນເວລາຫຼິ້ນ.
6. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
7. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ, ຮູບພາບ, ອອກສຽງຕົວພະຍັນຊະນະຕົ້ນຕາມຮູບພາບ, ອອກສຽງຕົວພະຍັນຊະນະ, ອອກສຽງຕົວພະຍັນຊະນະຕາມຮູບພາບໃນແຜ່ນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບເດັກນ້ອຍກິນອາຫານ ແລະ ດື່ມນ້ຳໄດ້ຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບພາບຍາດຕິພີ່ນ້ອງທາງແມ່ໄດ້ຖືກຕ້ອງ.
4. ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງຕົວພະຍັນຊະນະຕົ້ນໄດ້ຖືກຕ້ອງ.
5. ຈັບຄູ່ທີ່ຄືກັນຕົວພະຍັນຊະນະໄດ້ຖືກຕ້ອງ.
6. ຈັບຄູ່ຮູບພາບກັບຕົວພະຍັນຊະນະໄດ້ຖືກຕ້ອງ.
7. ແບ່ງປັນເກມໃຫ້ໝູ່ເພື່ອນ.
8. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດຫຼິ້ນເຄື່ອງດົນຕີ, ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການ, ພິມພະຍັນຊະນະໃສ່ອ່າງດິນຊາຍ: ກ, ດ, ບ, ມ, ວ , ຕໍ່ບຼັອກເປັນຮູບໂຕະ-ຕັ່ງຕາມແບບ, ວາງຮູບເລຂາຄະນິດເປັນຮູບຕ່າງໆຕາມຈິນຕະນາການ, ພິມຄຳສັບ: ດີ, ປີ, ນີ, ມີ, ລີ, ວີ ໃສ່ອ່າງດິນຊາຍ, ຢ່າງມ່ວນຊື່ນ.
3. ປັ້ນດິນແຕ້ມ-ທາສີຮູບພາບໂຕະ-ຕັ່ງ, ຂຽນສະຫຼະ ີ, ວັນນະຍຸດ ່, ້ ຕາມຄຳສັບ ແລະ ຂີດຂຽນສະຫຼະ ີ, ຕົວສະກົດຕາມຄຳສັບ, ຕົວສະກົດຕາມຄຳສັບ, ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ; ຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ, ແຕ້ມຮູບພາບສໍດຳ, ແຕ້ມຮູບພາບບັນທັດຕາມແບບໄດ້ຖືກຕ້ອງ.
4. ຫຼິ້ນບົດບາດສົມມຸດເປັນຜູ້ເຖົ້າໄປໄຫວ້ພະຢູ່ວັດ, ເປັນຕົວລະຄອນໃນບົດນິທານເລື່ອງ ນາງພອຍໄປວັດ, ເປັນນັກຮຽນມ້ຽນເຄື່ອງຮຽນຊ່ວຍຄູຢ່າງມ່ວນຊື່ນ.
5. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
6. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານ ສັ່ນກະແຊັກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກໄດ້ຖືກຕ້ອງ.
2. ກ້າສະແດງອອກໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ:

- ສັ່ນກະແຊັກ 1 ບາດ ສະແດງທ່າທາງກິນອາຫານ.
- ສັ່ນກະແຊັກ 2 ບາດ ສະແດງທ່າທາງຖອກນໍ້າໃສ່ຈອກ.
- ສັ່ນກະແຊັກ 3 ບາດ ສະແດງທ່າທາງດື່ມນໍ້າ.

### III. ສື່ການຮຽນ-ການສອນ

1. ກະແຊັກ.
2. ທ່າຫັດກາຍຍະບໍລິຫານຂາ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານຂາ ແລະ ແຂນ: ທ່າໝູນຫົວເຂົ່າ, ທ່າຢືນເບັດແຂນບິດແຂນໄປເບື້ອງຊ້າຍ-ເບື້ອງຂວາ.
2. ໃຫ້ເດັກນ້ອຍຍ່າງເຢ່ງເຢ້ເປັນ 2 ແຖວຄູ່.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສຽງສັນຍານກະແຊັກ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຂັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງອອກໃນການສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການກິນ ແລະ ການດື່ມ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປະຕິບັດຕົນໃນການກິນ, ດື່ມໄດ້ຖືກຕ້ອງ ແລະ ປະຕິບັດຕົວຈິງໃນການກິນ, ດື່ມ.
2. ເວົ້າປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ບອກຕຳແໜ່ງໃນ ແລະ ນອກໄດ້ຖືກຕ້ອງ.
4. ມີມາລະຍາດໃນການກິນ ແລະ ດື່ມ.

### II. ເນື້ອໃນຕົ້ນຕໍ

1. ການປະຕິບັດຕົນໃນການກິນ ແລະ ການດື່ມ.
- ການກິນ: ກິນອາຫານທີ່ມີປະໂຫຍດ, ກິນຖືກເວລາ, ຕັກອາຫານໃຫ້ພໍດີກິນອີ່ມ, ຫຍໍ້າອາຫານບໍ່ໃຫ້ມີສຽງດັງ, ຫຍໍ້າອາຫານໃຫ້ແຫຼກແລ້ວຈຶ່ງກືນ, ນຳໃຊ້ບ່ວງກາງຕັກອາຫານ ແລະ ບໍ່ໃຫ້ອາຫານຕົກເຮ່ຍ.
- ການດື່ມ: ຖອກນ້ຳໃສ່ຈອກໃຫ້ພໍດີບໍ່ໃຫ້ນ້ຳເຮ່ຍ, ຈັບຈອກທາງລຸ່ມໃຫ້ແໜ້ນ, ດື່ມນ້ຳຄ່ອຍໆກືນບໍ່ໃຫ້ມີສຽງດັງ.

2. ການເວົ້າປະໂຫຍກຕາມຮູບພາບ: ກິນເຂົ້າໃຫ້ຖືກເວລາ, ຕັກອາຫານໃຫ້ພໍດີ, ໃຊ້ບ່ວງກາງຕັກອາຫານ.
3. ຕຳແໜ່ງໃນ ແລະ ນອກ.

### III. ສື່ການຮຽນ-ການສອນ

1. ເຂົ້າ, ອາຫານ, ຖ້ວຍ, ບ່ວງ,ຈອກ, ນ້ຳສະອາດ.
2. ຮູບພາບ: ເດັກນ້ອຍກິນອາຫານ, ເດັກນ້ອຍຕັກອາຫານ, ເດັກນ້ອຍໃຊ້ບ່ວງກາງຕັກອາຫານ, ດອກໄມ້ຢູ່ໃນເຕົ້າ ແລະ ຢູ່ນອກເຕົ້າ.
3. ບັດປະໂຫຍກ: ກິນເຂົ້າໃຫ້ຖືກເວລາ, ຕັກອາຫານໃຫ້ພໍດີ, ໃຊ້ບ່ວງກາງຕັກອາຫານ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບອາຫານທີ່ເດັກນ້ອຍເຄີຍກິນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກ່ຽວກັບການປະຕິບັດຕົນໃນການກິນ, ດື່ມ ແລະ ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການກິນ, ການດື່ມ.
3. ໃຫ້ເດັກນ້ອຍເວົ້າເປັນປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍສັງເກດຮູບພາບດອກໄມ້ແລ້ວໃຫ້ບອກດອກໄມ້ຢູ່ໃນເຕົ້າ ແລະ ຢູ່ນອກເຕົ້າ.
5. ໃຫ້ເດັກນ້ອຍເວົ້າຄືນມາລະຍາດໃນການກິນ, ດື່ມ ແລະ ຕຳແໜ່ງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບມາລະຍາດໃນການກິນ ແລະ ດື່ມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປະຕິບັດຕົນໃນການກິນ, ດື່ມ ແລະ ການປະຕິບັດຕົວຈິງໃນການກິນ, ດື່ມ.
2. ຄວາມຊັດເຈນໃນການເວົ້າປະໂຫຍກຕາມຮູບພາບ.
3. ຄວາມຖືກຕ້ອງໃນການບອກຕຳແໜ່ງໃນ ແລະ ນອກ.
4. ມາລະຍາດໃນການກິນ ແລະ ດື່ມ.

# ກິດຈະກໍາສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນສະຫຼະ ິ, ຕົວສະກົດຕາມລໍາດັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນສະຫຼະ ິ, ຕົວສະກົດຕາມລໍາດັບໄດ້ຖືກຕ້ອງ.
2. ຂີດຂຽນສະຫຼະ ິ, ຕົວສະກົດຕາມລໍາດັບໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນສະຫຼະ ິ, ຕົວສະກົດຕາມລໍາດັບ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນສະຫຼະ ິ, ຕົວສະກົດຕາມລໍາດັບ: ຕິນ, ປິນ, ປິກ, ດິດ, ມິດ, ລິດ, ລິງ, ຂິງ.

### III. ສື່ການຮຽນ-ການສອນ

1. ສໍດໍາ ແລະ ຢາງລຶບ.
2. ປຶ້ມບົດເຝິກຫັດພາສາລາວ (ໜ້າ 11) ຫຼື ເຈ້ຍສະຫຼະ ິ, ຕົວສະກົດຕາມລໍາດັບ: ຕິນ, ປິນ, ປິກ, ດິດ, ມິດ, ລິດ, ລິງ, ຂິງ.
3. ເຈ້ຍແບບສະຫຼະ ິ, ຕົວສະກົດຕາມລໍາດັບ: ຕິນ, ປິນ, ປິກ, ດິດ, ມິດ, ລິດ, ລິງ, ຂິງ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍສັ່ນມື, ແກວ່ງຝ່າມືໄປຂ້າງຊ້າຍ, ຂ້າງຂວາ.
2. ໃຫ້ເດັກນ້ອຍສັງເກດ, ອ່ານສະຫຼະ ິ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນ.
3. ນາຍຄູແນະນໍາ, ສາທິດວິທີ, ຂັ້ນຕອນການຂີດຂຽນສະຫຼະ ິ, ຕົວສະກົດຕາມລໍາດັບ: ຕິນ, ປິນ, ປິກ, ດິດ, ມິດ, ລິດ, ລິງ, ຂິງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນໍາເດັກນ້ອຍ.
5. ໃຫ້ເດັກນ້ອຍນໍາສະເໜີຜົນງານການຂີດຂຽນສະຫຼະ ິ ຕົວສະກົດຕາມລໍາດັບ: ຕິນ, ປິນ, ປິກ, ດິດ, ມິດ, ລິດ, ລິງ, ຂິງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນສະຫຼະ ິ ຕາມລໍາດັບ.
2. ຄວາມຈົບງາມໃນການຂີດຂຽນສະຫຼະ ິ, ຕົວສະກົດຕາມລໍາດັບ.
3. ຄວາມອົດທົນໃນການຂີດຂຽນສະຫຼະ ິ ຕົວສະກົດຕາມລໍາດັບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນກິ້ງບ້ວງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແຂ່ງຂັນກິ້ງບ້ວງໄດ້ຖືກຕ້ອງ.
2. ຫຼິ້ນແຂ່ງຂັນກິ້ງບ້ວງໄດ້ຖືກຕ້ອງ.
3. ມີຄວາມຄ່ອງແຄ້ວ ແລະ ວ່ອງໄວ ໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນ ກິ້ງບ້ວງ.

### III. ສື່ການຮຽນ-ການສອນ

1. ໝາກຫວີດ, ກອງ, ກະແຊັກ.
2. ບ້ວງ, ເຊືອກ, ໄມ້ສຳລັບຂີດເສັ້ນ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຢືນລຽນແຖວ ແລະ ສັ່ນຄໍ່ມື, ໝູນເຄົ່າ, ເຕັ້ນຢູ່ກັບທີ່.
2. ນາຍຄູສະເໜີ ແບບຫຼິ້ນ ແຂ່ງຂັນ ກິ້ງບ້ວງ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ແຂ່ງຂັນ ກິ້ງບ້ວງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ ແລະ ມີສະຕິໃນການຫຼິ້ນ.
6. ໃຫ້ເດັກນ້ອຍຢືນເຮັດທ່າທາງເປົ່າປຸມເປົ້າ, ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນ ແຂ່ງຂັນກິ້ງບ້ວງ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ແຂ່ງຂັນກິ້ງບ້ວງ.
3. ຄວາມຄ່ອງແຄ້ວ ແລະ ວ່ອງໄວ ໃນເວລາຫຼິ້ນ.

# ກິດຈະກໍາເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບເດັກນ້ອຍກິນອາຫານ ແລະ ດື່ມນໍ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບເດັກນ້ອຍກິນອາຫານ ແລະ ດື່ມນໍ້າໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບເດັກນ້ອຍກິນອາຫານ ແລະ ດື່ມນໍ້າ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບເດັກນ້ອຍກິນອາຫານ ແລະ ດື່ມນໍ້າ (ສໍາລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບຄອບຄົວອົບອຸ່ນ: ພໍ່ແມ່ໂອບກອດລູກ.

### IV. ກິດຈະກໍາການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບການປະຕິບັດຕົນໃນການກິນອາຫານ.
2. ນາຍຄູສົນທະນາກັບເດັກກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນໍາ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບເດັກນ້ອຍກິນອາຫານ ແລະ ດື່ມນໍ້າ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການແບ່ງປັນເກມໃຫ້ໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບເດັກນ້ອຍກິນອາຫານ ແລະ ດື່ມນໍ້າ.
3. ການແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຂຽນສະຫຼະ ິ, ວັນນະຍຸດ ່, ້ ຕາມຄຳສັບ ແລະ ຕົວສະກົດຕາມຄຳສັບໄດ້ຖືກຕ້ອງ.
3. ຕໍ່ບັ້ອກເປັນຮູບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ ແລະ ພິມຕົວພະຍັນຊະນະໃສ່ອາງດິນຊາຍໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
2. ການຂຽນສະຫຼະ ິ, ວັນນະຍຸດ ່, ້ ຕາມຄຳສັບ: ດິ, ດິ່, ດິ້; ປິ, ປິ່, ປິ້; ນິ, ນິ່, ນິ້ ແລະ ຂຽນຕົວສະກົດຕາມຄຳສັບ: ຕີນ, ປີນ, ປີກ, ດີດ, ມີດ, ລີດ, ລີງ, ຂີງ.
3. ການຕໍ່ບັ້ອກເປັນຮູບຕ່າງໆຕາມຈິນຕະນາການ, ພິມຕົວພະຍັນຊະນະໃສ່ອ່າງດິນຊາຍ: ກ ດ ບ ງ ມ ວ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ປື້ມບົດເຝິກຫັດພາສາລາວ (ໜ້າ 9, 11) ຫຼື ເຈ້ຍແບບຂີດຂຽນສະຫຼະ ິ, ວັນນະຍຸດ ່, ້ ແລະ ຕົວສະກົດຕາມຄຳສັບ: ດິ, ດິ່, ດິ້; ປິ, ປິ່, ປິ້; ນິ, ນິ່, ນິ້, ເຈ້ຍຂີດຂຽນສະກົດຕາມຄຳສັບ: ຕີນ, ປີນ, ປີກ, ດີດ, ມີດ, ລີດ, ລີງ, ຂີງ.
2. ມຸມເຄື່ອງຫຼິ້ນສຳຜັດ: ແບບພິມຕົວພະຍັນຊະນະຕົວ: ກ ດ ບ ງ ມ ວ, ຊຸດໄມ້ບັ້ອກ ຫຼື ປາຮາສະຕິກ, ອ່າງດິນຊາຍ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຂຽນສະຫຼະ ິ, ວັນນະຍຸດ ່, ້, ຕົວສະກົດຕາມຄຳສັບ.
3. ຄວາມມ່ວນຊື່ນໃນການຕໍ່ບັ້ອກເປັນຮູບຕ່າງໆຕາມຈິນຕະນາການ ແລະ ຄວາມຖືກຕ້ອງໃນການພິມຕົວພະຍັນຊະນະໃສ່ອ່າງດິນຊາຍ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ຍ່າງຢຶດຕົວຊື່, ແມ່ຍິງນັ່ງພັບແພບ, ຜູ້ຊາຍນັ່ງຂັດສະໝາດ, ນອນຢຽດຕົວຊື່.

### III. ສື່ການຮຽນ-ການສອນ

ທ່າຫັດກາຍຍະບໍລິຫານລຳຕົວ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານລຳຕົວ ແລະ ຂາ: ທ່າຫງ່ຽງລຳ ຕົວໄປເບື້ອງຊ້າຍ-ເບື້ອງຂວາ, ທ່າຢືນຂາດຽວຍົກຂາຂຶ້ນທາງໜ້າພ້ອມທັງຍົກມືໄວ້(ເຮັດສັບປ່ຽນກັນ).
2. ໃຫ້ເດັກນ້ອຍຍ່າງເຍ່ງເຢ້ໄປທາງໜ້າ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກ, ກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ການນັ່ງ, ການຍ່າງ ແລະ ການນອນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປະຕິບັດຕົນໃນການນັ່ງ, ການຍ່າງ ແລະ ການນອນໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງການນັ່ງຕັ່ງ ແລະ ການຍ່າງ.
3. ອ່ານອອກສຽງຄຳສັບທີ່ປະສົມສະຫຼະ ີ ໄດ້ຊັດເຈນ.
4. ມີມາລະຍາດໃນການການນັ່ງ ແລະ ການຍ່າງ.

### II. ເນື້ອໃນຕົ້ນຕໍ

1. ການປະຕິບັດຕົນໃນການນັ່ງ, ການຍ່າງ ແລະ ການນອນ:
- ການນັ່ງຕັ່ງ: ຫຍັບຕັ່ງໃຫ້ພໍດີກັບໂຕະ, ນັ່ງຕັ່ງໃຫ້ຫຼັງຊື່, ຫຍັບກະໂພກໃຫ້ຕິດກັບບ່ອນອີງຂອງຕັ່ງ, ແຂນທັງສອງເບື້ອງວາງໄວ້ເທິງໂຕະ.
- ການນັ່ງພື້ນ: ແມ່ຍິງນັ່ງພັບແພບ, ຜູ້ຊາຍນັ່ງຂັດສະໝາດ, ນັ່ງຕ່ຳກ່ອນຜູ້ໃຫຍ່.
- ການຍ່າງ: ຍ່າງຍືດຕົວຊື່, ກ້າວຂາຍ່າງໃຫ້ພໍດີ; ຍ່າງກາຍຜູ້ໃຫຍ່ຕ້ອງຍໍ້ຕົວ ແລະ ກົ້ມຫົວລົງໜ້ອຍໜຶ່ງ.
- ການນອນ: ນອນຢຽດຕົວຊື່, ບໍ່ເອົາຂາກ່າຍຄົນອື່ນ, ນອນແຕ່ຫົວຄ່ຳ ແລະ ຕື່ນນອນແຕ່ເຊົ້າ.

2. ການປະຕິບັດຕົວຈິງໃນການນັ່ງຕັ່ງ, ການຍ່າງ.
3. ການອ່ານອອກສຽງຄຳສັບທີ່ປະສົມສະຫຼະ ີ: ດີ, ປີ, ນີ, ມີ, ລີ, ວີ.

### III. ສື່ການຮຽນ-ການສອນ

1. ໂຕະ, ຕັ່ງ; ບັດຄຳສັບ: ດີ, ປີ, ນີ, ມີ, ລີ, ວີ.
2. ຮູບພາບ: ເດັກນ້ອຍນັ່ງຕັ່ງຫຼັງຊື່, ແມ່ຍິງນັ່ງພັບແພບ, ຜູ້ຊາຍນັ່ງຂັດສະໝາດ, ເດັກນ້ອຍນັ່ງຕ່ຳກ່ວາຜູ້ໃຫຍ່, ເດັກນ້ອຍນອນ, ເດັກນ້ອຍຕື່ນນອນ, ເດັກນ້ອຍຍ່າງ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດຕົນໃນການດື່ມ.
2. ໃຫ້ເດັກນ້ອຍສັງເກດຮູບພາບການນັ່ງ, ການຍ່າງ, ການນອນ, ສົນທະນາກ່ຽວກັບການປະຕິບັດຕົນໃນການນັ່ງ, ການຍ່າງ ແລະ ການນອນ.
3. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການນັ່ງ ແລະ ການຍ່າງ.
4. ໃຫ້ເດັກນ້ອຍອ່ານອອກສຽງຄຳສັບທີ່ປະສົມສະຫຼະ ີ.
5. ໃຫ້ເດັກນ້ອຍເວົ້າຄືນການປະຕິບັດຕົນໃນການນັ່ງ, ການຍ່າງ, ການນອນ ແລະ ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ີ ຄືນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕົນໃນການນັ່ງ, ການຍ່າງ, ການນອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປະຕິບັດຕົນໃນການນັ່ງ, ການຍ່າງ ແລະ ການນອນ.
2. ການປະຕິບັດຕົວຈິງການນັ່ງຕັ່ງ ແລະ ການຍ່າງ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ປະສົມສະຫຼະ ີ.
4. ມາລະຍາດໃນການການນັ່ງ ແລະ ການຍ່າງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມ ແລະ ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມ ແລະ ທາສີຮູບພາບໂຕະ, ຕັ່ງໄດ້ຖືກຕ້ອງ.
2. ແຕ້ມຮູບພາບ, ໂຕະ, ຕັ່ງ; ຕາມຮອຍຈ້ຳ ທາສີຮູບພາບໂຕະ, ຕັ່ງໄດ້ສະອາດຈົບງາມ ແລະ ຢູ່ໃນຂອບ.
3. ແບ່ງປັນສໍສີໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການແຕ້ມໂຕະ, ຕັ່ງ ຕາມຮອຍຈ້ຳ ແລະ ທາສີຮູບພາບໂຕະ ແລະ ຕັ່ງ.

### III. ສື່ການຮຽນ-ການສອນ

1. ສໍດຳ ສໍສີທຽນ ຫຼື ສໍສີໄມ້.
2. ຮູບພາບໂຕະ ແລະ ຕັ່ງທີ່ມີຮອຍຈ້ຳ.
3. ແບບຮູບພາບໂຕະ, ຕັ່ງທີ່ແຕ້ມ ແລະ ທາສີແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງບີບນວດຕາມອົ້ງມື ແລະ ກຳມື ແລະ ແບມື.
2. ໃຫ້ເດັກນ້ອຍສັງເກດຮູບພາບໂຕະ, ຕັ່ງ, ສົນທະນາ ແລະ ບອກກ່ຽວກັບປະໂຫຍດ ແລະ ຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ, ຂັ້ນຕອນຂອງການແຕ້ມຕາມຮອຍຈ້ຳ, ທາສີຮູບພາບໂຕະ ແລະ ຕັ່ງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ, ເວົ້າຄືນຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໂຕະ ແລະ ຕັ່ງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນໃນການແຕ້ມ ແລະ ທາສີຮູບພາບໂຕະ, ຕັ່ງ.
2. ຄວາມຈົບງາມໃນການແຕ້ມຕາມຮອຍຈ້ຳ, ຢູ່ໃນຂອບ ແລະ ທາສີຮູບພາບໂຕະ, ຕັ່ງ.
3. ການແບ່ງປັນສໍສີໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແມວຈັບໜູ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນ ແມວຈັບໜູໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນ ແມວຈັບໜູໄດ້ຖືກຕ້ອງ.
3. ມີສະຕິ ແລະ ວ່ອງໄວໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແມວຈັບໜູ.

### III. ສື່ການຮຽນ-ການສອນ

1. ກອງ ຫຼື ກະແຊັກ.
2. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍລຽນແຖວ ແລະ ຕົບມືຍ່າງເປັນວົງມົນ.
2. ນາຍຄູສະເໜີແບບຫຼິ້ນ ແມວຈັບໜູ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກຳ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ແມວຈັບໜູ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມເບີກບານມ່ວນຊື່ນ ແລະ ໃຫ້ມີຄວາມວ່ອງໄວ, ຮັກສາຄວາມປອດໄພໃນການຫຼິ້ນ.
6. ໃຫ້ເດັກນ້ອຍນັ່ງລົງ ແລະ ເອົາມືວາງໄວ້ຕັກນັ່ງສະມາທິ, ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ແມວຈັບໜູ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ແມວຈັບໜູ.
3. ການມີສະຕິ ແລະ ວ່ອງໄວ ໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງແມ່

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງແມ່ໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ເຫຼືອໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງແມ່: ພໍ່ເຖົ້າ, ແມ່ເຖົ້າ, ປ້າ, ລຸງ, ນ້າບ່າວ, ນ້າສາວ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງແມ່: ພໍ່ເຖົ້າ, ແມ່ເຖົ້າ, ປ້າ, ລຸງ, ນ້າບ່າວ, ນ້າສາວ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບເດັກນ້ອຍກິນອາຫານ ແລະ ດື່ມນ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບການປະຕິບັດຕົນໃນການນັ່ງ, ຍ່າງ, ນອນ.
2. ນາຍຄູສົນທະນາກັບເດັກກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງແມ່.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການແບ່ງປັນໃຫ້ເຫຼືອໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບຍາດຕິພີ່ນ້ອງທາງແມ່.
3. ການແບ່ງປັນເກມໃຫ້ເຫຼືອໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ແຕ້ມ, ທາສີຮູບພາບ ແລະ ຂຽນສະຫຼະ ີ ຕາມຮອຍຈ້ຳໃນຄຳສັບໄດ້ຖືກຕ້ອງ.
3. ຫຼິ້ນເຄື່ອງດົນຕີຢ່າງມ່ວນຊື່ນ ແລະ ຕໍ່ບ້ຽອກເປັນຮູບໂຕະ, ຕັ່ງໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນໃນມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
2. ການແຕ້ມ, ທາສີຮູບພາບຕັ່ງ, ໂຕະ; ຂຽນສະຫຼະ ີ ຕາມຮອຍຈ້ຳໃນຄຳສັບ: ສີ, ຊີ, ພີ, ປີ, ດີ, ຕີ.
3. ການຫຼິ້ນເຄື່ອງດົນຕີ: ຕີກອງ, ດີດກີຕາ, ສັ່ນກະແຊັກ, ຈັບໄມໂຄໂຟນຮ້ອງເພງ; ຕໍ່ບ້ຽອກເປັນຮູບໂຕະ ແລະ ຕັ່ງ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ສໍດຳ, ສໍສີໄມ້ ຫຼື ສີທຽນ, ຮູບພາບຕັ່ງ ແລະ ໂຕະ, ປື້ມບົດເຝິກຫັດພາສາລາວ ຫຼື ເຈ້ຍຮອຍຈ້ຳສະຫຼະ ີ ໃນຄຳສັບ: ສີ, ຊີ, ພີ, ປີ, ດີ, ຕີ.
2. ມຸມເຄື່ອງຫຼິ້ນສຳຜັດ: ເຄື່ອງດົນຕີ ຫຼື ຈຳລອງ ກອງ, ກີຕ່າ, ສັ່ນກະແຊັກ ແລະ ໄມໂຄໂຟນ; ຊຸດໄມ້ບ້ຽອກ ຫຼື ປາຣາສະຕິກ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການແຕ້ມ, ທາສີຮູບພາບ ແລະ ຂຽນສະຫຼະ ີ ຕາມຮອຍຈ້ຳໃນຄຳສັບ.
3. ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ ແລະ ຄວາມຖືກຕ້ອງໃນການຕໍ່ບ້ຽອກເປັນຮູບໂຕະ ແລະ ຕັ່ງ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານ ເຄາະໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານ ເຄາະໄມ້ໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານ ເຄາະໄມ້:

- ເຄາະໄມ້ 1 ບາດສະແດງທ່າທາງຮັບສິ່ງຂອງຈາກຜູ້ໃຫຍ່.
- ເຄາະໄມ້ 2 ບາດສະແດງທ່າທາງຍໍມືນົບ.

### III. ສື່ການຮຽນ-ການສອນ

1. ໄມ້ 2 ອັນ.
2. ທ່າຫັດກາຍຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານ ແຂນ ແລະ ຂາ: ທ່າແຂນຂວາໂຄ້ງໄປທາງຊ້າຍ-ຂວາ ແລະ ທ່າຢືນຂາດຽວ, ຍົກຂາຂຶ້ນຊ້າຍທາງໜ້າ, ຍົກມືໄວ້ (ເຮັດສັບປ່ຽນກັນ).
2. ໃຫ້ເດັກນ້ອຍແລ່ນເກັບຂອງຫຼິ້ນ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສຽງສັນຍານ ເຄາະໄມ້.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານ ເຄາະໄມ້.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານ ເຄາະໄມ້.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການຂໍອະນຸຍາດ ແລະ ການຮັບສິ່ງຂອງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປະຕິບັດຕົນໃນການຂໍອະນຸຍາດ ແລະ ການຮັບສິ່ງຂອງໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການຂໍອະນຸຍາດ ແລະ ຮັບສິ່ງຂອງ.
3. ເວົ້າຄຳສັບ, ປະໂຫຍກຕາມເນື້ອໃນບົດຄຳຄ່ອງ ແລະ ເລົ່າຄຳຄ່ອງໄດ້ຊັດເຈນ.
4. ອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ x່, x້ ໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ການປະຕິບັດຕົນໃນການຂໍອະນຸຍາດ ແລະ ການຮັບສິ່ງຂອງ.
 - ການຂໍອະນຸຍາດ: ກ່ອນຈະໃຊ້ເຄື່ອງໃຊ້ຂອງຄົນອື່ນຄວນເວົ້າຄຳ (ຂໍອະນຸຍາດ) ຈາກເຈົ້າຂອງເຄື່ອງ.
 - ການຮັບສິ່ງຂອງ: ເມື່ອໄດ້ຮັບສິ່ງຂອງຈາກຜູ້ອື່ນຍໍມືນົບ ແລະ ກ່າວຄຳຂອບໃຈ.
2. ການເວົ້າຄຳສັບ, ປະໂຫຍກ ແລະ ເລົ່າຄຳຄ່ອງ ເດັກດີ; ຄຳສັບ: ຂອບໃຈ, ຢືມ, ຂໍອະນຸຍາດ, ສາມັກຄີ, ເດັກດີ, ມາລະຍາດ; ປະໂຫຍກ: ພວກເຮົາກ່າວຄຳຂອບໃຈ, ຜູ້ໃຫຍ່ເອົາເຄື່ອງໃຫ້, ຂ້ອຍຢືມເຄື່ອງໃຊ້ນຳໝູ່, ຂ້ອຍເປັນເດັກສະຫຼາດ.
3. ການອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ x່, x້: ດີ, ດີ່, ດີ້; ປີ, ປີ່, ປີ້; ນີ, ນີ່, ນີ້.
4. ການປະຕິບັດຕົວຈິງໃນການຂໍອະນຸຍາດ ແລະ ຮັບສິ່ງຂອງ.

### III. ສື່ການຮຽນ-ການສອນ

1. ປຶ້ມ, ສໍ, ໄມ້ບັນທັດ.
2. ບົດຄຳຄ່ອງ ເດັກດີ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດຕົນໃນການຂໍອະນຸຍາດ ແລະ ການຮັບສິ່ງຂອງ.
2. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການຂໍອະນຸຍາດ ແລະ ການຮັບສິ່ງຂອງ.
3. ໃຫ້ເດັກນ້ອຍເວົ້າຄຳສັບ, ເປັນປະໂຫຍກ, ເລົ່າຄຳຄ່ອງ ແລະ ສົນທະນາຕາມເນື້ອໃນບົດຄຳຄ່ອງ.
4. ໃຫ້ເດັກນ້ອຍອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ x່, x້.
5. ໃຫ້ເດັກນ້ອຍເວົ້າຄືນການປະຕິບັດຕົນໃນການຂໍອະນຸຍາດ, ອ່ານອອກສຽງຄຳສັບຄືນ, ເວົ້າຄຳສັບ, ເວົ້າປະໂຫຍກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕົນໃນການຂໍອະນຸຍາດ ແລະ ການຮັບສິ່ງຂອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປະຕິບັດຕົນໃນການຂໍອະນຸຍາດ ແລະ ການຮັບສິ່ງຂອງ.
2. ການປະຕິບັດຕົວຈິງການຂໍອະນຸຍາດ ແລະ ຮັບສິ່ງຂອງ.
3. ຄວາມຊັດເຈນໃນການເວົ້າຄຳສັບ, ປະໂຫຍກ, ເລົ່າຄຳຄ່ອງ.
4. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ x່, x້.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈໄດ້ຖືກຕ້ອງ.
2. ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ.

### III. ສື່ການຮຽນ-ການສອນ

1. ສໍດຳ ແລະ ຢາງລຶບ.
2. ປຶ້ມບົດເຝິກຫັດພາສາລາວ (ໜ້າ 3) ຫຼື ເຈ້ຍຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ.
3. ເຈ້ຍຕົວເລກ 4-5 ຕາມຮອຍຈ້ຳທີ່ຂຽນແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງຂຽນໜັງສືເທິງກາງຫາວ, ຢືບ, ຍູບ ແລະ ຖູຝ່າມື.
2. ໃຫ້ເດັກນ້ອຍສັງເກດຕົວເລກ 4-5 ແລ້ວອ່ານຕົວເລກ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍນຳສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມງາມ ແລະ ເກັບຜົນງານໄປໄວ້ບ່ອນທີ່ຄູກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ.
2. ຄວາມຄວາມຈົບງາມໃນການຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ.
3. ຄວາມອົດທົນໃນການຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ຕັ່ງວິເສດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຕັ່ງວິເສດໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນ ຕັ່ງວິເສດ ໄດ້ຖືກຕ້ອງ.
3. ກ້າສະແດງອອກໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນຕັ່ງວິເສດ.

### III. ສື່ການຮຽນ-ການສອນ

1. ຕັ່ງ ແລະ ກອງ.
2. ບົດຄຳຄ່ອງ ເດັກດີ
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍ ເລົ່າຄຳຄ່ອງ ເດັກດີ ປະກອບທ່າທາງ
2. ນາຍຄູສະເໜີ ແບບຫຼິ້ນຕັ່ງວິເສດ ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກຳ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ຕັ່ງວິເສດ , ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນໃຫ້ລະວັງບໍ່ໃຫ້ລົ້ມ, ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ ແລະ ເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ເດັກນ້ອຍນັ່ງຢຽດຂາໃຊ້ມືບີບຂາຕົນເອງ, ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນ ຕັ່ງວິເສດ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ຕັ່ງວິເສດ.
3. ການກ້າສະແດງອອກໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ອອກສຽງພະຍັນຊະນະຕົ້ນຕາມຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ: ຂ(ໄຂ່), ສ(ເສືອ), ຖ(ຖົງ), ຜ(ເຜີ້ງ), ຝ(ຝົນ), ຫ(ຫ່ານ).

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ: ຂ(ໄຂ່), ສ(ເສືອ), ຖ(ຖົງ), ຜ(ເຜີ້ງ), ຝ(ຝົນ), ຫ(ຫ່ານ); (ສຳລັບນາຍຄູ, ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບຍາດຕິພີ່ນ້ອງທາງແມ່.
3. ບົດຄຳຄ່ອງ ເດັກດີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເດັກດີ.
2. ນາຍຄູສົນທະນາກັບເດັກກ່ຽວກັບພະຍັນຊະນະ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບພະຍັນຊະນະ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການອອກສຽງພະຍັນຊະນະຕົ້ນຕາມຮູບພາບທີ່ຢູ່ໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ແຕ້ມຮູບພາບໂຕະ, ຕັ່ງຕາມຮອຍຈ້ຳ ແລະ ທາສີ, ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ ໄດ້ຖືກຕ້ອງ.
3. ວາງຮູບເລຂາຄະນິດເປັນຮູບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ ແລະ ພິມຄຳສັບໃສ່ອ່າງດິນຊາຍໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
2. ການແຕ້ມຮູບພາບໂຕະ, ຕັ່ງຕາມຮອຍຈ້ຳ, ທາສີ ແລະ ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ.
3. ການຈັດວາງຮູບສາມແຈ, ສີ່ແຈຈະຕຸລັດເປັນຮູບເຮືອນ ແລະ ຕາມຈິນຕະນາການຂອງເດັກ; ຂຽນຄຳສັບໃສ່ອ່າງດິນຊາຍ: ດີ, ປີ, ນີ, ມີ, ລີ, ວີ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ເຈ້ຍຮູບພາບໂຕະຕັ່ງທີ່ມີຮອຍຈ້ຳ, ສໍດຳ, ສໍສີໄມ້ ຫຼື ສໍສີທຽນ, ຊາມ, ນ້ຳລ້າງມື, ສະບູ, ຜ້າເຊັດມື, ສໍດຳ, ຢາງລຶບ, ປຶ້ມບົດເຝິກຫັດຄະນິດສາດ (ໜ້າ 3) ຫຼື ເຈ້ຍຮອຍຈ້ຳຕົວເລກ 4-5.
2. ມຸມເຄື່ອງຫຼິ້ນສຳຜັດ ເຈ້ຍຮູບສາມແຈ, ສີ່ແຈ ແລະ ຈະຕຸລັດ, ອ່າງຊາຍ.
3. ບົດຄຳຄ່ອງ ເດັກດີ ແລະ ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເດັກດີ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການແຕ້ມຮູບພາບໂຕະ, ຕັ່ງຕາມຮອຍຈ້ຳ, ທາສີ ແລະ ຂີດຂຽນຕົວເລກ 4-5 ຕາມຮອຍຈ້ຳ ແລະ ຕາມໃຈ.
3. ຄວາມມ່ວນຊື່ນໃນການວາງຮູບເລຂາຄະນິດເປັນຮູບຕ່າງໆຕາມຈິນຕະນາການ ແລະ ຄວາມຖືກຕ້ອງໃນການພິມຄຳສັບໃສ່ອ່າງດິນຊາຍ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳລ່ອງ ເດັກດີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ ເດັກດີ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດລຳລ່ອງ ເດັກດີ.
3. ທ່າຫັດກາຍຍະບໍລິຫານຂາ ແລະ ທ້ອງ-ຫຼັງ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານຂາ ແລະ ທ້ອງ-ຫຼັງ: ທ່າຢຽດຂາໄປທາງໜ້າ, ທາງຫຼັງ ແລະ ທ່າທ້ອງຫຼັງກົ້ມຫົວລົງທາງໜ້າ, ເງີຍຂຶ້ນແອນຕົວໄປທາງຫຼັງ.
2. ໃຫ້ເດັກນ້ອຍເຕັ້ນໄປທາງໜ້າ-ທາງຫຼັງຕາມສຽງເຄາະ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກ, ກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການນົບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກມາລະຍາດໃນການນົບໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງການນົບໄຫວ້ພະສົງ, ການນົບສະບາຍດີ ແລະ ການນົບຂໍອະນຸຍາດຜູ້ໃຫຍ່.
3. ມີມາລະຍາດໃນການຟັງນິທານ ແລະ ມີມາລະຍາດການນົບ.
4. ເວົ້າຄຳສັບ ແລະ ເວົ້າປະໂຫຍກຕາມເນື້ອໃນບົດນິທານໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ມາລະຍາດໃນການນົບ ແລະ ໄຫວ້:

- ການນົບໄຫວ້ພະສົງ ຫຼື ພະພຸດທະຮູບ: ນັ່ງຂຸເຂົ່າ, ຍໍມືນົບໂດຍການຍໍມືຊ້າຍ ແລະ ມືຂວາແປະໃສ່ກັນໃຫ້ປາຍມືເທົ່າກັນຢູ່ກາງເອິກ, ຍໍມືຂຶ້ນໃຫ້ປາຍນິ້ວມືຈຸຕີນຜົມແລ້ວກາບລົງສາມເທື່ອ.
- ການນົບຖາມສະບາຍດີ ແລະ ນົບຂໍອະນຸຍາດຜູ້ໃຫຍ່: ຍົກມືຊ້າຍ ແລະ ມືຂວາແປະໃສ່ກັນໃຫ້ປາຍມືເທົ່າກັນຢູ່ກາງເອິກ, ກົ້ມຫົວລົງໃຫ້ປາຍນິ້ວມືຈຸຫວ່າງຄິ້ວ ຫຼື ຈຸປາຍດັງ.

2. ການເວົ້າເປັນຄຳສັບ, ເປັນປະໂຫຍກ ແລະ ຟັງນິທານເລື່ອງ ນາງພອຍໄປວັດ; ບັດຄຳສັບ: ນຸ່ງສິ້ນ, ເກົ້າຜົມ, ນັ່ງ, ພັບແພບ, ບູຊາ, ຕັກບາດ, ລຽນແຖວ, ຄູບາ, ນົບ, ໄຫວ້, ເຂົ້າຕົ້ມ, ຜ້າບ່ຽງ, ສິ້ນ, ເສື້ອ, ເອິກ; ບັດປະໂຫຍກ:ນາງພອຍນຸ່ງສິ້ນ ແລະ ບ່ຽງແພ, ແມ່ນາງພອຍເກົ້າຜົມ, ນາງພອຍນັ່ງພັບແພບນາງພອຍຍໍມືທັງສອງເບື້ອງຂຶ້ນນົບໄຫວ້ພະ, ນາງພອຍຍໍມືນົບຢູ່ພຽງເອິກ, ນາງພອຍກົ້ມກາບລົງສາມເທື່ອ, ນາງພອຍຍໍມືຂຶ້ນນົບພຽງຫວ່າງຄິ້ວ..

### III. ສື່ການຮຽນ-ການສອນ

1. ນິທານເລື່ອງ ນາງພອຍໄປວັດ ເບິ່ງໃນປຶ້ມຄູ່ມືຄູ ໜ້າທີ...
2. ຮູບພາບ: ເດັກນ້ອຍນົບພະພຸດທະຮູບ, ນົບຖາມສະບາຍດີ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດຕົນໃນການຮັບສິ່ງຂອງ.
2. ໃຫ້ເດັກນ້ອຍເວົ້າຄຳສັບ, ເວົ້າປະໂຫຍກ, ຄູເລົ່ານິທານ ແລະ ສົນທະນາຕາມເນື້ອໃນບົດນິທານ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກ່ຽວກັບການນົບພະສົງ, ນົບຖາມສະບາຍດີ, ນົບຂໍອະນຸຍາດຜູ້ໃຫຍ່.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງກ່ຽວກັບການນົບພະສົງ, ນົບຖາມສະບາຍດີ ແລະ ນົບຂໍອະນຸຍາດຜູ້ໃຫຍ່.
5. ໃຫ້ເດັກນ້ອຍເວົ້າຄືນການນົບໄຫວ້ພະສົງ ແລະ ການນົບຖາມສະບາຍດີ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບມາລະຍາດໃນການນົບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກມາລະຍາດໃນການນົບ.
2. ການປະຕິບັດຕົວຈິງການນົບໄຫວ້ພະສົງ, ການນົບສະບາຍດີ ແລະ ການນົບຂໍອະນຸຍາດຜູ້ໃຫຍ່.
3. ມາລະຍາດໃນການນົບ ແລະ ການຟັງນິທານ.
4. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດນິທານ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ ໄດ້ຖືກຕ້ອງ.
2. ຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈໄດ້ຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ.

### III. ສື່ການຮຽນ-ການສອນ

1. ສໍດຳ ແລະ ຢາງລຶບ.
2. ປຶ້ມບົດເຝິກຫັດລະນິດສາດ (ໜ້າ 3) ຫຼື ເຈ້ຍຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ.
3. ເຈ້ຍຕົວເລກ 6-7 ຕາມຮອຍຈ້ຳທີ່ຂຽນແລ້ວ.
4. ບົດຄຳຄ່ອງ: ເດັກດີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເດັກດີ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຕົວເລກ 6-7 ແລ້ວອ່ານ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມງາມ ແລະ ເກັບຜົນງານໄປໄວ້ບ່ອນທີ່ຄູກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ.
2. ຄວາມຈົບງາມໃນການຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ.
3. ຄວາມອົດທົນໃນການຂີດຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຕາມໃຈ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ.

### III. ສື່ການຮຽນ-ການສອນ

1. ນ້ຳສະອາດ, ຜ້າເຊັດມື, ອ່າງດິນຊາຍ, ແມ່ພິມຮູບຕ່າງໆ, ຊວ້ານນ້ອຍ.
2. ໝາກຫວີດ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຢືນລຽນແຖວ ແລະ ແລ່ນຕາມຫຼັງກັນຕາມບໍລິເວນເດີ່ນ.
2. ນາຍຄູສະເໜີ ແບບຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ບໍ່ຫວ່ານດິນຊາຍໃສ່ຕາກັນ, ຫຼັງຈາກຫຼິ້ນແລ້ວອະນາໄມຕີນ-ມື ແລະ ຊ່ວຍກັນກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍເຮັດທ່າທາງລົມພັດໄປ-ມາ, ຫຼັງຈາກນັ້ນໃຫ້ເດັກນ້ອຍ ຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນພິມຮູບຕ່າງໆດ້ວຍດິນຊາຍ.
2. ຄວາມແຂງແຮງຂອງກ້າມຊີ້ນມື.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ອອກສຽງຕົວພະຍັນຊະນະທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຕົວພະຍັນຊະນະໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ຂ, ສ, ຖ, ຜ, ຝ, ຫ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ຂ, ສ, ຖ, ຜ, ຝ, (ສຳລັບນາຍຄູ ແລະ ເດັກ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບມາລະຍາດໃນການນົບ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຕົວພະຍັນຊະນະທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຕົວພະຍັນຊະນະ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການອອກສຽງຕົວພະຍັນຊະນະທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຕົວພະຍັນຊະນະ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນຜູ້ເຖົ້າໄປໄຫວ້ພະຢູ່ວັດ ແລະ ເປັນຕົວລະຄອນໃນບົດນິທານຢ່າງມ່ວນຊື່ນ.
3. ຂຽນຕົວເລກ 4, 5, 6, 7 ຕາມຮອຍຈ້ຳ ແລະ ຕາມໃຈໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນບົດບາດສົມມຸດເປັນຜູ້ເຖົ້າໄປໄຫວ້ພະຢູ່ວັດ, ເປັນຕົວລະຄອນໃນບົດນິທານເລື່ອງ ນາງ ພອຍ ໄປວັດ.
3. ການຂຽນຕົວເລກ 4, 5, 6, 7 ຕາມຮອຍຈ້ຳ ແລະ ຕາມໃຈ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງຈຳລອງ ຫຼື ຂອງຈິງ ໂອ, ທູບ, ທຽນ, ດອກໄມ້, ວັດຈຳລອງ.
2. ມຸມສິລະປະສ້າງສັນ: ປຶ້ມບົດເຝິກຫັດຄະນິດສາດ (ໜ້າ 3, 4 ຫຼື ເຈ້ຍຕົວເລກ 4, 5, 6, 7 ຕາມຮອຍຈ້ຳ, ສໍດຳ ຫຼື ສໍສີ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນຜູ້ເຖົ້າໄປໄຫວ້ພະຢູ່ວັດ ແລະ ເປັນຕົວລະຄອນ ໃນບົດນິທານ.
3. ຄວາມຖືກຕ້ອງໃນການຂຽນຕົວເລກ 4, 5, 6, 7 ຕາມຮອຍຈ້ຳ ແລະ ຕາມໃຈ.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ແລ່ນເຂົ້າວົງມົນ, ແລ່ນອອກຈາກວົງມົນ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍຍະບໍລິຫານທ້ອງ-ຫຼັງ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານທ້ອງ-ຫຼັງ ແລະ ຕີນ: ທ່າກົ້ມຕົວໄປລົ່ໜ້າ ແລະ ເງີຍຂຶ້ນແອນລຳຕົວໄປທາງຫຼັງ ແລະ ທ່າຍ້ຳເທົ້າຂຶ້ນລົງ.
2. ໃຫ້ເດັກນ້ອຍຍ່າງໂຢ່ງໂຢະ ເປັນ 2 ແຖວຄູ່.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນເອົາມືກອດເອິກຫຼັບຕາຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ການປະຢັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຮຽນ, ເຄື່ອງນຸ່ງ, ເຄື່ອງຫຼິ້ນ ແລະ ການປະຢັດໄດ້ຖືກຕ້ອງ.
2. ເວົ້າຄຳສັບ, ປະໂຫຍກຕາມເນື້ອໃນບົດເພງ, ຕາມຮູບພາບ ແລະ ຮ້ອງເພງໄດ້ຊັດເຈນ.
3. ມີຄວາມປະຢັດເຄື່ອງຮຽນ, ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້.

### II. ເນື້ອໃນຕົ້ນຕໍ

1. ການປະຢັດເຄື່ອງຮຽນ, ເຄື່ອງນຸ່ງ ແລະ ເຄື່ອງຫຼິ້ນ:

- ຊື່ເຄື່ອງຮຽນ ແລະ ການປະຢັດ: ປຶ້ມ, ສໍດຳ, ສໍສີ, ໄມ້ບັນທັດ; ບໍ່ຈີກ, ບໍ່ຂີດປຶ້ມຊະຊາຍ ແລະ ຂຽນປຶ້ມໃຫ້ໝົດທຸກໜ້າ; ສໍດຳ, ສໍສີບໍ່ແຫຼມຫຼິ້ນ; ບໍ່ຫັກໄມ້ບັນທັດ; ເຄື່ອງຮຽນເມື່ອໃຊ້ແລ້ວຄວນເກັບມ້ຽນໄວ້ໃຫ້ເປັນລະບຽບ.
- ຊື່ເຄື່ອງນຸ່ງ ແລະ ການປະຢັດ: ໂສ້ງ, ເສື້ອ, ສິ້ນ, ກະໂປງ; ກະໂປງຫຼັງຈາກນຸ່ງແລ້ວຄວນຊັກໃຫ້ສະອາດ, ຕາກໃຫ້ແຫ້ງ ແລະ ພັບໄວ້ເປັນລະບຽບ.
- ຊື່ເຄື່ອງຫຼິ້ນ ແລະ ການປະຢັດ: ຕຸກກະຕາ, ລົດ, ເຄື່ອງຫຼິ້ນເຮືອນນ້ອຍ, ຊຸດຕຶດຕໍ່ (ຈິກຊໍ); ຫຼິ້ນຖືກວິທີ, ບໍ່ມ້າງເພ, ຫຼິ້ນແລ້ວຄວນລ້າງ ຫຼື ເຊັດໃຫ້ສະອາດ, ເອົາໃສ່ຖົງ ຫຼື ກັບເກັບມ້ຽນໄວ້ເປັນລະບຽບ.

2. ການເວົ້າຄຳສັບ, ປະໂຫຍກຕາມເນື້ອໃນບົດເພງ, ຕາມຮູບພາບ ແລະ ການຮ້ອງເພງ ປະຢັດ.
3. ການເວົ້າເປັນຄຳສັບ ແລະ ເປັນເປັນປະໂຫຍກຕາມຮູບພາບ; ບັດຄຳສັບ ແລະ ບັດປະໂຫຍກ: ປະຢັດ, ເຄື່ອງຮຽນ, ເຄື່ອງຫຼິ້ນ, ໂທລະພາບ, ພັດລົມ, ໄມ້ບັນທັດ, ສໍສີ, ໂສ້ງ, ເສື້ອ, ສິ້ນ, ຕາກ, ຊັກ, ພັບ, ລົດ; ພວກເຮົາພ້ອມກັນປະຢັດນ້ຳ, ພວກເຮົາຊ່ວຍກັນປິດໄຟ, ເດັກນ້ອຍ ເກັບມ້ຽນກະເປົ໋າຮຽນ, ເດັກນ້ອຍເກັບມ້ຽນປຶ້ມ ແລະ ສໍດຳ, ເດັກນ້ອຍຊັກເຄື່ອງນຸ່ງ, ເດັກນ້ອຍພັບໂສ້ງ ແລະ ເສື້ອ, ເດັກນ້ອຍຕາກເຄື່ອງໃຫ້ແຫ້ງ, ເດັກນ້ອຍພັບສິ້ນ ແລະ ກະໂປງ..

### III. ສື່ການຮຽນ-ການສອນ

1. ປຶ້ມ, ສໍດຳ, ສໍສີ, ໄມ້ບັນທັດ, ໂສ້ງ, ເສື້ອ, ສິ້ນ, ກະໂປງ, ຕຸກກະຕາ, ລົດນ້ອຍ.
2. ບົດເພງ ປະຢັດ (ເບິ່ງໃນປຶ້ມຄູ່ມືຄູ).
3. ຮູບພາບ: ເດັກນ້ອຍເກັບມ້ຽນກະເປົ໋າຮຽນ, ເດັກນ້ອຍເກັບມ້ຽນປຶ້ມ ແລະ ສໍດຳ, ເດັກນ້ອຍຊັກເຄື່ອງນຸ່ງ, ເດັກນ້ອຍພັບໂສ້ງ ແລະ ເສື້ອ, ເດັກນ້ອຍຕາກເຄື່ອງ, ເດັກນ້ອຍພັບສິ້ນ ແລະ ກະໂປງ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກ່ຽວກັບເຄື່ອງຮຽນ, ເຄື່ອງນຸ່ງ ແລະ ເຄື່ອງຫຼິ້ນທີ່ເດັກນ້ອຍຮູ້ຈັກ.
2. ໃຫ້ເດັກນ້ອຍເວົ້າຄຳສັບ, ປະໂຫຍກ, ສົນທະນາຕາມເນື້ອໃນບົດເພງ ແລະ ຮ້ອງເພງ.
3. ໃຫ້ເດັກນ້ອຍສັງເກດເຄື່ອງຮຽນ, ເຄື່ອງຫຼິ້ນ, ເຄື່ອງໃຊ້ສົນທະນາກ່ຽວກັບຊື່ ແລະ ການປະຢັດ.
4. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ເວົ້າປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການປະຢັດເຄື່ອງຮຽນ, ເຄື່ອງນຸ່ງ, ເຄື່ອງຫຼິ້ນ, ເວົ້າຄຳສັບ, ເວົ້າເປັນປະໂຫຍກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຢັດເຄື່ອງຮຽນ, ເຄື່ອງນຸ່ງ ແລະ ເຄື່ອງຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເຄື່ອງຮຽນ, ເຄື່ອງນຸ່ງ, ເຄື່ອງຫຼິ້ນ ແລະ ການປະຢັດ.
2. ຄວາມຊັດເຈນໃນການເວົ້າຄຳສັບ, ປະໂຫຍກຕາມເນື້ອໃນບົດເພງ, ຕາມຮູບພາບ ແລະ ການຮ້ອງເພງ.
3. ການປະຢັດເຄື່ອງຮຽນ, ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມຮູບພາບ ສໍດຳ ແລະ ບັນທັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມສໍດຳ, ບັນທັດຕາມແບບໄດ້ຖືກຕ້ອງ.
2. ແຕ້ມຮູບພາບສໍດຳ, ບັນທັດຕາມແບບໄດ້ຄ້າຍຄື.
3. ມີຄວາມອົດທົນໃນການແຕ້ມຮູບພາບສໍດຳ, ບັນທັດ ຕາມແບບ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຮູບພາບ: ສໍດຳ, ບັນທັດຕາມແບບ.

### III. ສື່ການຮຽນ-ການສອນ

1. ສໍດຳ ແລະ ເຈ້ຍຂາວ.
2. ເຈ້ຍແບບແຕ້ມຮູບພາບສໍດຳ, ບັນທັດ.
3. ບົດເພງ ປະຢັດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ປະຢັດປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບສໍດຳ, ບັນທັດ, ສີນະນາ ແລະ ບອກກ່ຽວກັບຂັ້ນຕອນການແຕ້ມຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການແຕ້ມຮູບພາບສໍດຳ, ບັນທັດຕາມແບບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍນຳສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການແຕ້ມຮູບພາບສໍດຳ, ບັນທັດຕາມແບບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມງາມ ແລະ ເກັບຜົນງານໄປໄວ້ບ່ອນທີ່ຄູກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຮູບພາບສໍດຳ, ບັນທັດຕາມແບບ.
2. ຄວາມຄ້າຍຄືໃນການແຕ້ມຮູບພາບສໍດຳ, ບັນທັດຕາມແບບ.
3. ຄວາມອົດທົນໃນການແຕ້ມຮູບພາບຕາມແບບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນກິນໝາກກ້ຽງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງໄດ້ຖືກຕ້ອງ.
2. ການຫຼິ້ນແບບຫຼິ້ນແຂ່ງຂັນ ກິນໝາກກ້ຽງ ໄດ້ຖືກຕ້ອງ.
3. ມີຄວາມຄ່ອງແຄ້ວ ແລະ ວ່ອງໄວໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ.

### III. ສື່ການຮຽນ-ການສອນ

1. ໝາກຫວິດ, ໝາກກ້ຽງ, ຈານ ຫຼື ຜາຖາດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍຢືນລຽນແຖວເປັນສອງແຖວ ແລະ ແກ່ວງແຂນສະຫຼັບກັບການຍົກຂາ.
2. ນາຍຄູສະເໜີ ແບບຫຼິ້ນແຂ່ງຂັນກິນໝາກກ້ຽງ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກບອກຂັ້ນຕອນ ແລະ ກົຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນໃຫ້ມີຄວາມອົດທົນລໍຄ່ອຍ ແລະ ໃຫ້ມີຄວາມລະວັງ.
6. ໃຫ້ເດັກນ້ອຍຢືນເຮັດທ່າທາງເກັບເປືອກໝາກກ້ວຍໃສ່ກະຕ່າ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການການບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແຂ່ງຂັນ ກິນໝາກກ້ວຍ.
2. ຄວາມຖືກຕ້ອງໃນການຫຼິ້ນແຂ່ງຂັນ ກິນໝາກກ້ຽງ.
3. ຄວາມຄ່ອງແຄ້ວ ແລະ ວ່ອງໄວ ໃນເວລາຫຼິ້ນ.

# ກິດຈະກໍາເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ອອກສຽງຕົວພະຍັນຊະນະຕາມຮູບພາບໃນແຜ່ນເກມໄດ້ຖືກຕ້ອງ.
2. ຈັບຄູ່ຮູບພາບກັບຕົວພະຍັນຊະນະໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຮູບພາບກັບຕົວພະຍັນຊະນະ: ຮູບພາບໄຂ່, ເສືອ, ຖົງ, ເຜິ້ງ, ຝົນ, ຫ່ານ; ຕົວພະຍັນຊະນະ: ຂ, ສ, ຖ, ຜ, ຝ, ຫ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ: ຮູບພາບໄຂ່, ເສືອ, ຖົງ, ເຜິ້ງ, ຝົນ, ຫ່ານ; ຕົວພະຍັນຊະນະ: ຂ, ສ, ຖ, ຜ, ຝ, ຫ. (ສໍາລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຕົວພະຍັນຊະນະ: ຂ, ສ, ຖ, ຜ, ຝ, ຫ.
3. ບົດເພງ ປະຢັດ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍ ຮ້ອງເພງ ປະຢັດ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຕົວພະຍັນຊະນະ ແລະ ຮູບພາບໃນແຜ່ນເກມ.
3. ນາຍຄູແນະນໍາ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການອອກສຽງຕົວພະຍັນຊະນະຕາມຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບກັບຕົວພະຍັນຊະນະ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກໍາການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນນັກຮຽນ ແລະ ເປັນຕົວລະຄອນໃນບົດນິທານຢ່າງມ່ວນຊື່ນ.
3. ແຕ້ມຮູບພາບ, ຂຽນຕົວເລກ 6-7 ຕາມຮອຍຈໍ້າ ແລະ ຕາມໃຈໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນບົດບາດສົມມຸດເປັນນັກຮຽນນັ່ງຮຽນເຄື່ອງຮຽນຊ່ວຍຄູ, ເປັນຕົວລະຄອນໃນບົດນິທານ ເລື່ອງ ນາງພອຍໄປວັດ.
3. ການແຕ້ມຮູບພາບສໍດໍາ ແລະ ບັນທັດ; ຂຽນຕົວເລກ 6-7 ຕາມຮອຍຈໍ້າ ແລະ ຕາມໃຈ .

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃນຫ້ອງຮຽນ.
2. ມຸມສິລະປະສ້າງສັນ: ຮູບພາບສໍດໍາ, ບັນທັດ, ປຶ້ມບົດເຝິກຫັດຄະນິດສາດ (ໜ້າ 4) ຫຼື ເຈ້ຍຕົວເລກ 6-7 ຕາມຮອຍຈໍ້າ, ສໍດໍາ ແລະ ເຈ້ຍຂາວ.
3. ບົດເພງ ປະຢັດ, ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ປະຢັດ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນ ແລະ ແນະນໍາວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນໍາ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນນັກຮຽນ ແລະ ເປັນຕົວລະຄອນໃນບົດນິທານ.
3. ຄວາມຖືກຕ້ອງໃນການແຕ້ມຮູບພາບ ແລະ ຂຽນຕົວເລກ 6-7 ຕາມຮອຍຈໍ້າ ແລະ ຕາມໃຈ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ຈຸດປະສົງສຳລັບ ອາທິດທີ 3

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ, ບົດຄຳຄ່ອງໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າຢ່າງມ່ວນຊື່ນ.
3. ສະແດງທ່າທາງຕາມການສັນຍານ ຕົບມືໄດ້ຖືກຕ້ອງ.
4. ອົດທົນໃນເວລາສະແດງທ່າທາງ.
5. ກ້າສະແດງໃນເວລາສະແດງທ່າທາງ.
6. ປອດໄພໃນເວລາສະແດງທ່າທາງ.
7. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
8. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກປະເພດ, ລັກສະນະ ແລະ ສີຂອງເຮືອນໄດ້ຖືກຕ້ອງ.
2. ເວົ້າເປັນຄຳສັບ, ເປັນປະໂຫຍກຕາມບົດຄຳຄ່ອງ, ບົດເພງ, ນິທານ, ຮູບພາບ, ເລົ່າຄຳຄ່ອງ ແລະ ຮ້ອງເພງໄດ້ຊັດເຈນ.
3. ປຽບທຽບຄວາມສູງໂດຍໃຊ້ຄຳວ່າ: ສູງກວ່າ, ຕ່ຳກວ່າ, ສູງເທົ່າກັນໄດ້ຖືກຕ້ອງ.
4. ບອກລັກສະນະ, ສ່ວນປະກອບຂອງເຮືອນໄມ້, ເຮືອນກໍ່ປະສົມໄມ້, ເຮືອນກໍ່ ແລະ ວັດສະດຸທີ່ນຳໃຊ້ໄດ້ຖືກຕ້ອງ.
5. ມີມາລະຍາດ ແລະ ຄວາມມ່ວນຊື່ນໃນການຟັງນິທານ.
6. ບອກຊື່ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດເຮືອນໄດ້ຖືກຕ້ອງ.
7. ປະຕິບັດຕົວຈິງໃນການຖູພື້ນເຮືອນ.
8. ປຽບທຽບຈຳນວນໜ້ອຍກວ່າ, ເທົ່າກັນບໍ່ເກີນ 5 ໄດ້ຖືກຕ້ອງ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການປັ້ນດິນເປັນຮູບໝໍ້, ພັບສີເປັນຮູບຕ່າງໆຕາມຈິນຕະນາການ, ຂີດຂຽນຕົວເລກ 8-9 ຕາມຮອຍຈ້ຳ ແລະ ຕາມໃຈ, ໂຮຍດິນຊາຍໃສ່ຮູບພາບເຮືອນ, ພິມສີດ້ວຍກ້ານກ້ວຍໃສ່ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອໄດ້ຖືກຕ້ອງ.
2. ປັ້ນດິນເປັນຮູບເຮືອນຊັ້ນດຽວໄດ້ຄ້າຍຄື.
3. ຂີດຂຽນຕົວເລກ 8-9 ຕາມຮອຍຈ້ຳ ແລະ ຕາມໃຈ ແລະ ພັບສີເປັນຮູບຕ່າງໆຕາມຈິນຕະນາການໄດ້ຄ້າຍຄື.
4. ໂຮຍຊາຍໃສ່ຮູບພາບເຮືອນໄດ້ສະອາດຈົບງາມ.
5. ພິມສີດ້ວຍກ້ານກ້ວຍໃສ່ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອໄດ້ສະອາດຈົບງາມ.
6. ແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາພັບຜ້າ.
8. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການໂຮຍດິນຊາຍ ແລະ ພິມສີດ້ວຍກ້ານກ້ວຍ.
9. ຮັກສາຄວາມປອດໄພໃນການພັບສີ.
10. ອົດທົນໃນເວລາຂຽນຕົວເລກ, ແຕ້ມຮູບພາບ, ຕັດ, ຕິດ, ຂີດຂຽນສະຫຼະ, ຄຳສັບ, ຕົວສະກົດ, ວັນນະຍຸດ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຍາດຫາງ, ແຂ່ງຂັນສົ່ງປຶ້ມນິທານ, ມັດຕາຈັບປຸມເປົ້າ, ການຫຼິ້ນນ້ຳ-ຫຼິ້ນຊາຍ: ຖອກນ້ຳໃສ່ພາຊະນະຕ່າງໆ, ພິມຊາຍເປັນຮູບເຮືອນ, ແຂ່ງຂັນສົ່ງໂອນ້ຳໄດ້.
2. ຫຼິ້ນແບບຫຼິ້ນ ຍາດຫາງ, ແຂ່ງຂັນສົ່ງປຶ້ມນິທານ, ມັດຕາຈັບ ປຸມເປົ້າ, ການຫຼິ້ນນ້ຳ-ຫຼິ້ນຊາຍ: ກອງຊາຍເປັນຮູບຕ່າງໆຕາມໃຈ, ແຂ່ງຂັນສົ່ງໂອນ້ຳໄດ້ຖືກຕ້ອງ.
3. ມີສະຕິ ແລະ ວ່ອງໄວໃນເວລາຫຼິ້ນ.
4. ມີຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນ.
5. ສຳນຶກ ແລະ ກະຕວງໃນເວລາຫຼິ້ນ.
6. ເຝິກກ້າມຊີ້ນມືໃຫ້ແຂງແຮງໃນເວລາກອງຊາຍເປັນຮູບຕ່າງໆຕາມໃຈ.
7. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ, ຕົວເລກ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຈັດໝວດໝູ່ຮູບພາບເຮືອນຕາມປະເພດໄດ້ຖືກຕ້ອງ.
3. ຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບທີ່ແຍກສ່ວນໄດ້ຖືກຕ້ອງ.
4. ສຶກສາລາຍລະອຽດຮູບສ່ວນປະກອບຂອງເຮືອນໄດ້ຖືກຕ້ອງ.
5. ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5 ໄດ້ຖືກຕ້ອງ.
6. ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນເຮືອນໄດ້ຖືກຕ້ອງ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
8. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
9. ອົດທົນໃນເວລາຫຼິ້ນເກມ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດຕໍ່ບູ້ອກເປັນຮູບເຮືອນຕາມຈິນຕະນາການ, ພິມຕົວເລກອາຣັບ 0-3 ໃສ່ອ່າງດິນຊາຍ, ວາງໄມ້ດົ້ວເປັນຮູບເຮືອນຕາມຈິນຕະນາການ, ຕໍ່ຮູບຊິ້ງເລຂາຄະນິດຕາມແບບໃຫ້ເປັນຮູບເຮືອນຢ່າງມ່ວນຊື່ນ.
3. ພັບຜ້າຮູບວົງມົນເປັນຮູບສາມແຈ, ປັ້ນດິນເປັນຮູບເຮືອນຊັ້ນດຽວ, ພິມສີດ້ວຍກ້ານກ້ວຍໃສ່ຮູບຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ, ໂຮຍຊາຍໃສ່ຮູບເຮືອນຕາມແບບໄດ້ຖືກຕ້ອງ.
4. ອ່ານອອກສຽງຄຳສັບທີ່ປະສົມສະຫຼະ ອິ: ດິ, ປິ, ນິ, ມິ, ລິ, ວິ, ອ່ານຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ອິ້, ລິ, ລີ່, ລີ້, ປີ, ປີ, ປີ້, ຂີ, ຂີ່, ຂີ້, ນີ, ນີ່, ນີ້ ຕາມຮູບພາບໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດເປັນກຳມະກອນກໍ່ສ້າງເຮືອນ, ເປັນພໍ່ຄ້າ-ແມ່ຄ້າ, ລູກຄ້າຊື້ຂາຍນຸ່ງ: ຂາຍໂສ້ງ, ສິ້ນ, ກະໂປ່ງ, ຢ່າງມ່ວນຊື່ນ.
6. ຈັບຄູ່ຮູບພາບກັບຕົວພະຍັນຊະນະ; ຈັດໝວດໝູ່ຮູບພາບເຮືອນຕາມປະເພດໄດ້ຖືກຕ້ອງ.
7. ທົດລອງຕໍ່ກ້ອນຫີນເປັນຮູບເຮືອນຕາມແບບໄດ້ຖືກຕ້ອງ.
8. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
9. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
10. ຊ່ວຍເຫຼືອເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ປະຢັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ ປະຢັດ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ປະຢັດ.
3. ທ່າຫັດກາຍຍະບໍລິຫານລຳຄໍ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື ແລະ ຕີນ: ທ່າຈຸ້ມນິ້ວມືເຂົ້າ, ອອກ, ຢ່ຳເທົ້າຂຶ້ນ ແລະ ລົງ.
2. ໃຫ້ເດັກຍ່າງເຕະຂາໄປທາງໜ້າ.
3. ຄູສາທິດການສະແດງທ່າທາງຕາມທີ່ຄູອອກແບບປະກອບຄຳຄ່ອງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຢືນສັ່ນມືຂຶ້ນ ແລະ ລົງ.
6. ໃຫ້ເດັກປະຕິບັດຄືນການສະແດງທ່າທາງຕາມທີ່ຄູອອກແບບປະກອບຄຳຄ່ອງ.
7. ສຶກສາອົບຮົມເດັກກ່ຽວກັບມາລະຍາດໃນການສະແດງທ່າທາງຕາມທີ່ຄູອອກແບບປະກອບຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ເຮືອນ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ເວົ້າຄຳສັບ, ປະໂຫຍກຕາມບົດຄຳຄ່ອງ ແລະ ເລົ່າຄຳຄ່ອງໄດ້ຊັດເຈນ.
2. ບອກປະເພດ, ລັກສະນະ ແລະ ສີຂອງເຮືອນໄດ້ຖືກຕ້ອງ.
3. ປຽບທຽບຄວາມສູງ, ຕ່ຳ, ສູງກວ່າ, ຕ່ຳກວ່າ, ສູງເທົ່າກັນໄດ້ຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

1. ປະເພດ, ລັກສະນະ ແລະ ສີຂອງເຮືອນ:

- ປະເພດ: ເຮືອນກໍ່, ເຮືອນໄມ້ ແລະ ເຮືອນກໍ່ປະສົມໄມ້.
- ລັກສະນະຂອງເຮືອນ: ເຮືອນຊັ້ນດຽວ, ເຮືອນຫຼາຍຊັ້ນ.
- ສີ: ສີເຫຼືອງ, ສີບົວ, ສີຂຽວ, ສີແດງ.

2. ການເວົ້າຄຳສັບ, ປະໂຫຍກ ແລະ ເລົ່າຄຳຄ່ອງ ເຮືອນນ້ອຍຫຼັງງາມ; ບັດຄຳສັບ: ເຮືອນ, ນ້ອຍ, ໄມ້ແປ້ນ, ຝາ, ສັງກະສີ, ສະບາຍ, ງາມ; ບັດປະໂຫຍກ: ເຮືອນຂ້ອຍມຸງດ້ວຍສັງກະສີ, ຝາເຮືອນແອ້ມດ້ວຍໄມ້ແປ້ນ, ໜ້າບ້ານຂ້ອຍມີຕົ້ນໝາກມ່ວງ, ລົມພັດເຢັນສະບາຍ, ຂ້ອຍ ເປັນເຈົ້າຂອງເຮືອນ.
3. ການປຽບທຽບຄວາມສູງ: ສູງກວ່າ, ຕ່ຳກວ່າ, ສູງເທົ່າກັນ.

## III. ສື່ການຮຽນ-ການສອນ

1. ຮູບພາບ: ເຮືອນກໍ່, ເຮືອນໄມ້ ແລະ ເຮືອນກໍ່ປະສົມໄມ້.
2. ບົດຄຳຄ່ອງ ເຮືອນນ້ອຍຫຼັງງາມ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບປະເພດຂອງເຮືອນທີ່ເດັກນ້ອຍອາໄສຢູ່.
2. ເດັກນ້ອຍເວົ້າຄຳສັບ, ປະໂຫຍກ, ເລົ່າຄຳຄ່ອງ ແລະ ສົນທະນາຕາມບົດຄຳຄ່ອງ.
3. ໃຫ້ເດັກນ້ອຍສັງເກດຮູບພາບເຮືອນ, ສົນທະນາກ່ຽວປະເພດ, ລັກສະນະ ແລະ ສີຂອງເຮືອນ.
4. ໃຫ້ເດັກນ້ອຍປຽບທຽບຄວາມສູງຂອງຮູບພາບເຮືອນ.
5. ໃຫ້ເດັກນ້ອຍເວົ້າຄືນປະເພດສີ ແລະ ລັກສະນະຂອງເຮືອນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນພາຍໃນຄອບຄົວ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກປະເພດ, ລັກສະນະ ແລະ ສີຂອງເຮືອນ.
2. ຄວາມຊັດເຈນໃນການເວົ້າຄຳສັບ, ປະໂຫຍກຕາມບົດຄຳຄ່ອງ ແລະ ເລົ່າຄຳຄ່ອງ.
3. ຄວາມຖືກຕ້ອງໃນການປຽບທຽບຄວາມສູງ, ຕ່ຳ: ສູງກວ່າ, ຕ່ຳກວ່າ, ສູງເທົ່າກັນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນເປັນຮູບເຮືອນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການປັ້ນດິນເປັນຮູບເຮືອນຊັ້ນດຽວໄດ້ຖືກຕ້ອງ.
2. ປັ້ນດິນເປັນຮູບເຮືອນຊັ້ນດຽວໄດ້ຄ້າຍຄື.
3. ແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນຮູບເຮືອນຊັ້ນດຽວ.

### III. ສື່ການຮຽນ-ການສອນ

1. ດິນປັ້ນ ຫຼື ແປ້ງສຳລັບປັ້ນ.
2. ແຜ່ນຮອງປັ້ນ.
3. ເສື້ອກັນເປື້ອນ.
4. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.
5. ບົດຄຳຄ່ອງເຮືອນນ້ອຍຫຼັງງາມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເຮືອນນ້ອຍຫຼັງງາມ ປະກອບທ່າທາງ
2. ໃຫ້ເດັກນ້ອຍສັງເກດຮູບເຮືອນທີ່ປັ້ນແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການປັ້ນດິນເປັນຮູບເຮືອນ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການປັ້ນດິນເປັນຮູບເຮືອນຊັ້ນດຽວ
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການປັ້ນດິນເປັນຮູບເຮືອນຊັ້ນດຽວ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການປັ້ນດິນ.
2. ຄວາມຄ້າຍຄືຂອງຮູບປັ້ນເຮືອນຊັ້ນດຽວ.
3. ການແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ຍາດຫາງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຍາດຫາງໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນຍາດຫາງໄດ້ຖືກຕ້ອງ.
3. ມີສະຕິ ແລະ ວ່ອງໄວໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນຍາດຫາງ.

### III. ສື່ການຮຽນ-ການສອນ

1. ປູນຂາວສຳລັບຂີດເສັ້ນ, ຜ້າສີຕ່າງໆ ຫຼື ເຈ້ຍໜັງສືພິມ ແລະ ກອງ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຢືນລຽນແຖວຕັ້ງ ແລະ ຢ່ຳເທົ້າຢູ່ກັບທີ່.
2. ນາຍຄູສະເໜີ ແບບຫຼິ້ນ ຍາດຫາງ ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ຍາດຫາງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ ແລະ ມີສະຕິໃນການຫຼິ້ນ.
6. ໃຫ້ເດັກນ້ອຍຍ່າງ ແລ້ວຍົກແຂນຂຶ້ນແກ່ວງໄປ-ມາ, ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ຍາດຫາງ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ຍາດຫາງ.
3. ການມີສະຕິ ແລະ ວ່ອງໄວໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັດໝວດໝູ່ຮູບພາບເຮືອນຕາມປະເພດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັດໝວດໝູ່ຮູບພາບເຮືອນຕາມປະເພດໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັດໝວດໝູ່ຮູບພາບເຮືອນຕາມປະເພດ: ເຮືອນກໍ່, ເຮືອນໄມ້, ເຮືອນກໍ່ປະສົມໄມ້.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັດໝວດໝູ່ຮູບພາບເຮືອນຕາມປະເພດ: ເຮືອນກໍ່, ເຮືອນໄມ້, ເຮືອນກໍ່ປະສົມໄມ້ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ.
3. ບົດຄຳຄ່ອງ ເຮືອນນ້ອຍຫຼັງງາມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເຮືອນນ້ອຍຫຼັງງາມ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັດໝວດໝູ່ຮູບພາບເຮືອນຕາມປະເພດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັດໝວດໝູ່ຮູບພາບເຮືອນຕາມປະເພດ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຕໍ່ບຼັອກເປັນຮູບເຮືອນຕາມຈິນຕະນາການຢ່າງມ່ວນຊື່ນ, ພິມຕົວເລກ 0-5 ໃສ່ອ່າງດິນຊາຍໄດ້ຖືກຕ້ອງ.
3. ຫຼິ້ນເກມຈັດໝວດໝູ່ຮູບພາບເຮືອນຕາມປະເພດ, ຫຼິ້ນເກມຈັບຄູ່ຮູບພາບຍາດຕິພີ່ນ້ອງທາງພໍ່ ແລະ ທາງແມ່ໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
2. ການຕໍ່ບຼັອກເປັນຮູບເຮືອນຕາມຈິນຕະນາການ, ພິມຕົວເລກອາຣັບ 0-3 ໃສ່ອ່າງດິນຊາຍ.
3. ການຈັດໝວດໝູ່ຮູບພາບເຮືອນຕາມປະເພດ: ເຮືອນກໍ່, ເຮືອນໄມ້ ແລະ ເຮືອນກໍ່ປະສົມໄມ້.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ຊຸດໄມ້ບຼັອກ ຫຼື ປາຣາສະຕິກ. ແບບພິມຕົວເລກອາຣັບ 0-3.
2. ມຸມເກມການສຶກສາ: ແຜ່ນເກມຈັດໝວດໝູ່ຮູບພາບເຮືອນຕາມປະເພດ: ເຮືອນກໍ່, ເຮືອນໄມ້ ແລະ ເຮືອນກໍ່ປະສົມໄມ້, ແຜ່ນເກມຈັບຄູ່ຮູບພາບຍາດຕິພີ່ນ້ອງທາງພໍ່ ແລະ ທາງແມ່.
3. ບົດຄຳຄ່ອງ ເຮືອນນ້ອຍຫຼັງງາມ ແລະ ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເຮືອນນ້ອຍຫຼັງງາມ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການ ສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຕໍ່ບຼັອກເປັນຮູບເຮືອນຕາມຈິນຕະນາການ ແລະ ຄວາມຖືກຕ້ອງໃນການພິມຕົວເລກອາຣັບໃສ່ອ່າງດິນຊາຍ.
3. ຄວາມຖືກຕ້ອງໃນການຫຼິ້ນເກມຈັດໝວດໝູ່ຮູບພາບເຮືອນຕາມປະເພດ, ຫຼິ້ນເກມຈັບຄູ່ຮູບພາບຍາດຕິພີ່ນ້ອງທາງພໍ່ ແລະ ທາງແມ່.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳຄ່ອງ ເຮືອນນ້ອຍຫຼັງງາມ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳຄ່ອງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳຄ່ອງ ເຮືອນນ້ອຍຫຼັງງາມ.

### III. ສື່ການຮຽນ-ການສອນ

1. ເຊືອກ.
2. ບົດລຳຄ່ອງ ເຮືອນນ້ອຍຫຼັງງາມ.
3. ທ່າຫັດກາຍຍະບໍລິຫານມື ແລະ ແອວ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານມື ແລະ ແອວ: ທ່າຢືນຕົບມືທາງໜ້າ, ຂ້າງຊ້າຍ, ຂ້າງຂວາ ແລະ ທ່າຫງ່ຽງແອວຂວາ-ຊ້າຍ.
2. ໃຫ້ເດັກນ້ອຍເຕັ້ນຂ້າມເຊືອກສູງ 30 ຊັງຕີແມັດ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳຄ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາເອົາມືທັງສອງຄ່ຳພື້ນທາງຫຼັງພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳຄ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳຄ່ອງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກໍາວົງມົນ

## ຫົວຂໍ້: ເຮືອນໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກລັກສະນະ, ສ່ວນປະກອບຂອງເຮືອນໄມ້ ແລະ ວັດສະດຸທີ່ນໍາໃຊ້ໄດ້ຖືກຕ້ອງ.
2. ເວົ້າຄໍາສັບ ແລະ ເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ລັກສະນະ, ສ່ວນປະກອບຂອງເຮືອນໄມ້ ແລະ ວັດສະດຸທີ່ນໍາໃຊ້.

- ລັກສະນະເຮືອນໄມ້ຊົງລາວເດີມ: ເຮືອນສູງຊັ້ນດຽວ, ກ້ອງຕະລ່າງບໍ່ມີຝາແອ້ມ, ຫຼັງຄາແຫຼມ, ຫ້ອງນອນນ້ອຍ, ລະບຽງໃຫຍ່, ຂັ້ນໄດຢູ່ນອກເຮືອນ, ເສົາໄມ້.
- ສ່ວນປະກອບ: ເສົາ, ຂັ້ນໄດ, ພື້ນເຮືອນ, ຝາເຮືອນ, ປະຕູ, ປ່ອງຢ້ຽມ, ເພດານ, ຫຼັງຄາ.
- ວັດສະດຸທີ່ນໍາມາໃຊ້: ໄມ້, ເຫຼັກຕາປູ, ສັງກະສີ, ກະເບື້ອງ, ຫຍ້າຄາ.

2. ການເວົ້າຄໍາສັບ ແລະ ປະໂຫຍກຕາມຮູບພາບ; ບັດຄໍາສັບ ແລະ ບັດປະໂຫຍກ: ເຮືອນໄມ້, ຫຍ້າຄາ, ສັງກະສີ, ເຫຼັກຕະປູ, ປະຕູ, ປ່ອງຢ້ຽມ; ເສົາເຮືອນເປັນຮູບທໍ່ກົມ, ຂັ້ນໄດມີຫຼາຍຂັ້ນ, ພື້ນເຮືອນປູດ້ວຍໄມ້ແປ້ນ, ປະຕູເປັນຮູບສີ່ແຈ, ປ່ອງຢ້ຽມໃສ່ບານຄູ່, ຫຼັງຄາມຸງດ້ວຍກະເບື້ອງ.

### III. ສື່ການຮຽນ-ການສອນ

ຮູບພາບ: ເຮືອນໄມ້, ເສົາເຮືອນ, ຂັ້ນໄດ, ພື້ນເຮືອນປູດ້ວຍໄມ້ແປ້ນ, ປະຕູ, ປ່ອງຢ້ຽມ, ຫຼັງຄາມຸງດ້ວຍກະເບື້ອງ.

### IV. ກິດຈະກໍາການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບປະເພດ ແລະ ລັກສະນະຂອງເຮືອນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກ່ຽວກັບລັກສະນະ, ສ່ວນປະກອບຂອງເຮືອນໄມ້ ແລະ ວັດສະດຸທີ່ນໍາໃຊ້.
3. ໃຫ້ເດັກນ້ອຍເວົ້າຄໍາສັບ ແລະ ເວົ້າປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍເວົ້າຄືນລັກສະນະ, ສ່ວນປະກອບຂອງເຮືອນໄມ້ ແລະ ວັດສະດຸທີ່ເອົາມານໍາໃຊ້.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນຄອບຄົວ.

### V. ການວັດ ແລະ ປະເມີນຜົນ.

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກລັກສະນະສ່ວນປະກອບຂອງເຮືອນໄມ້ ແລະ ວັດສະດຸທີ່ນໍາໃຊ້.
2. ຄວາມຊັດເຈນໃນການເວົ້າຄໍາສັບ ແລະ ປະໂຫຍກຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ 8-9 ຕາມຮອຍຈໍ້າ ແລະ ຕາມໃຈ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກທິດທາງຕົວເລກ ແລະ ຂຽນຕົວເລກ 8-9.
2. ຂີດຂຽນຕົວເລກ 8-9 ຕາມຮອຍຈໍ້າ ແລະ ຕາມໃຈໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຂີດຂຽນຕົວເລກ 8-9 ຕາມຮອຍຈໍ້າ ແລະ ຕາມໃຈ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕົວເລກ 8-9 ຕາມຮອຍຈໍ້າ ແລະ ຕາມໃຈ.

### III. ສື່ການຮຽນ-ການສອນ

1. ສໍດຳ, ຢາງລຶບ, ປຶ້ມບົດເຝິກຫັດຄະນິດສາດ (ໜ້າ 5) ຫຼື ເຈ້ຍຕົວເລກ 8-9.
2. ເຈ້ຍແບບຂຽນຕົວເລກ 8-9 ຕາມຮອຍຈໍ້າທີ່ຂຽນແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງບີບນວດຕາມອົ້ງມື, ກຳມື ແລະ ແບມື.
2. ໃຫ້ເດັກນ້ອຍສັງເກດຜ້າຮູບວົງມົນ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການພັບຜ້າ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນຂອງການຜ້າຮູບວົງມົນເປັນຮູບສາມແຈ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍແນະນຳຜົນງານໃນການຜ້າຮູບວົງມົນເປັນຮູບສາມແຈ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂີດຂຽນຕົວເລກ 8-9.
2. ຄວາມຖືກຕ້ອງໃນການຂີດຂຽນຕົວເລກ 8-9 ຕາມຮອຍຈໍ້າ ແລະ ຕາມໃຈ
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຂີດຂຽນຕົວເລກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຍັບສິ່ງປຶ້ມນິທານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຍັບສິ່ງປຶ້ມນິທານໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຍັບສິ່ງປຶ້ມນິທານໄດ້ຖືກຕ້ອງ.
3. ມີຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຍັບສິ່ງປຶ້ມນິທານ.

### III. ສື່ການຮຽນ-ການສອນ

1. ປຶ້ມນິທານ, ປຶ້ມຂຽນ, ກອງ ແລະ ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍລຽນແຖວເປັນສອງແຖວຕັ້ງ ແລະ ເຄື່ອນໄຫວຕາມຈັງຫວະຂອງສຽງກອງ.
2. ນາຍຄູສະເໜີແບບຫຼິ້ນ ແຂ່ງຍັບສິ່ງປຶ້ມນິທານ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ແຂ່ງຍັບສິ່ງປຶ້ມນິທານ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຊ່ວຍເຫຼືອກັນໃນເວລາຫຼິ້ນ ແລະ ຫຼິ້ນແລ້ວເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍເຮັດທ່າທາງເປັນໂຕໄກ່ກົ່ງຄໍອັນ ແລະ ພືປີກ ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນ ແຂ່ງຍັບສິ່ງປຶ້ມນິທານ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ແຂ່ງຍັບສິ່ງປຶ້ມນິທານ.
3. ຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມສຶກສາລາຍລະອຽດຮູບພາບສ່ວນປະກອບຂອງເຮືອນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບໃນແຜ່ນເກມໄດ້ຖືກຕ້ອງ.
2. ສຶກສາລາຍລະອຽດຮູບພາບສ່ວນປະກອບຂອງເຮືອນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການສຶກສາລາຍລະອຽດຮູບພາບສ່ວນປະກອບຂອງເຮືອນ: ຂັ້ນໄດ, ປະຕູ, ປ່ອງຢ້ຽມ, ຝາເຮືອນ, ເພດານ ແລະ ກະເບື້ອງ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມສຶກສາລາຍລະອຽດຮູບພາບສ່ວນປະກອບຂອງເຮືອນ: ຂັ້ນໄດ, ປະຕູ, ປ່ອງຢ້ຽມ, ຝາເຮືອນ, ເພດານ ແລະ ກະເບື້ອງ. (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັດໝວດໝູ່ຮູບພາບເຮືອນຕາມປະເພດ: ເຮືອນກໍ່, ເຮືອນໄມ້, ເຮືອນກໍ່ປະສົມໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູ ສົນທະນາກັບເດັກນ້ອຍກ່ຽວກັບສ່ວນປະກອບຂອງເຮືອນໄມ້.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມສຶກສາລາຍລະອຽດຮູບພາບສ່ວນປະກອບຂອງເຮືອນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການສຶກສາລາຍລະອຽດຮູບພາບສ່ວນປະກອບຂອງເຮືອນ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນກຳມະກອນກໍ່ສ້າງເຮືອນ, ເປັນພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າ ຢ່າງມ່ວນຊື່ນ.
3. ຂີດຂຽນຕົວເລກ 8-9 ຕາມຮອຍຈໍ້າ ແລະ ຕາມໃຈ, ປັ້ນດິນເປັນຮູບເຮືອນໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນບົດບາດສົມມຸດເປັນກຳມະກອນກໍ່ສ້າງເຮືອນໄມ້, ເປັນພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າຂາຍເຄື່ອງນຸ່ງ: ໂສ້ງ, ເສື້ອ, ສິ້ນ, ກະໂປງ.
3. ການຂີດຂຽນຕົວເລກ 8-9 ຕາມຮອຍຈໍ້າ ແລະ ຕາມໃຈ, ປັ້ນດິນເປັນຮູບເຮືອນຊັ້ນດຽວ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງນຸ່ງຈິງ ຫຼື ຈຳລອງ; ເຄື່ອງກໍ່ສ້າງ ແລະ ເຄື່ອງມືກໍ່ສ້າງເຮືອນຈຳລອງ ຫຼື ຂອງຈິງ.
2. ມຸມສິລະປະສ້າງສັນ: ປຶ້ມບົດເຝິກຫັດຄະນິດສາດ (ໜ້າ 5) ຫຼື ເຈ້ຍຕົວເລກ 8-9, ສໍດຳ, ຢາງລຶບ, ດິນປັ້ນ ຫຼື ແປ້ງສຳລັບປັ້ນ, ເສື້ອກັນເປື້ອນ, ຜ້າຮອງ, ຊາມນໍ້າ, ສະບູ, ຜ້າເຊັດມື, ແບບເຮືອນທີ່ປັ້ນແລ້ວ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນກຳມະກອນ, ເປັນພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າ.
3. ຄວາມຖືກຕ້ອງໃນການຂີດຂຽນຕົວເລກ 8-9 ຕາມຮອຍຈໍ້າ ແລະ ຕາມໃຈ, ປັ້ນດິນເປັນຮູບເຮືອນ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງ ກັບບ້ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າຢ່າງມ່ວນຊື່ນ.
2. ກ້າສະແດງໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ: ກັບບ້ານຈາກການໄປທ່ຽວຫຼິ້ນ, ຂຶ້ນຂັ້ນໄດເຮືອນ, ໄຂປະຕູເຮືອນ, ໄຂປ່ອງຢ້ຽມ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍຍະບໍລິຫານລຳຄໍ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານລຳຄໍ ແລະ ຂາ: ກົ້ມຫົວລົງ, ເງີຍຫົວຂຶ້ນ ແລະ ທ່າໝູນຫົວເອົ່າ.
2. ໃຫ້ເດັກນ້ອຍແລ່ນຊິກແຊັກ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
2. ການກ້າໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ເຮືອນກໍ່ປະສົມໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກລັກສະນະ, ສ່ວນປະກອບຂອງເຮືອນກໍ່ປະສົມໄມ້ ແລະ ວັດສະດຸທີ່ນຳໃຊ້ໄດ້ຖືກຕ້ອງ.
2. ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນນິດນິທານໄດ້ຊັດເຈນ.
3. ມີມາລະຍາດ ແລະ ຄວາມມ່ວນຊື່ນໃນການຟັງນິທານ.

### II. ເນື້ອໃນຕົ້ນຕໍ

1. ລັກສະນະ, ສ່ວນປະກອບຂອງເຮືອນກໍ່ປະສົມໄມ້ ແລະ ວັດສະດຸທີ່ນຳໃຊ້
- ລັກສະນະເຮືອນກໍ່ປະສົມໄມ້ ຫຼື ເຮືອນລາວສະໄໝໃໝ່: ເຮືອນສູງສອງຊັ້ນ, ຊັ້ນເທິງເຮັດດ້ວຍໄມ້, ຊັ້ນລຸ່ມກໍ່ດ້ວຍດິນຈີ່, ຊີມັງ, ຈຳນວນຫ້ອງມີຫຼາຍ, ໃຊ້ໄມ້ໃນການຕົບແຕ່ງເປັນສ່ວນຫຼາຍ.
- ສ່ວນປະກອບ: ເສົາ, ຂັ້ນໄດ, ພື້ນເຮືອນ, ຝາເຮືອນ, ປະຕູ, ປ່ອງຢ້ຽມ, ເພດານ, ສັງກະສີ ຫຼື ກະເບື້ອງ.
- ວັດສະດຸທີ່ນຳໃຊ້: ສັງກະສີ ຫຼື ກະເບື້ອງ, ໄມ້. ເຫຼັກ, ດິນຈີ່, ຊີມັງ, ຫີນ ແລະ ຊາຍ.

2. ການເວົ້າຄຳສັບ, ປະໂຫຍກ ແລະ ຟັງນິທານເລື່ອງ ຄອບຄົວກະຕ່າຍ; ບັດຄຳສັບ: ດິນຊາຍ, ປ່ອງຢ້ຽມ, ປະຕູ, ດິນຈີ່, ຊີມັງ, ເສົາເຮືອນ, ສັງກະສີ, ບານປະຕູ, ໄມ້, ຂັ້ນໄດ; ບັດປະໂຫຍກ: ລູກກະຕ່າຍຊ່ວຍພໍ່ແມ່ປຸກເຮືອນ, ກະຕ່າຍຊ່ວຍກັນຂົນຊາຍມາກອງໄວ້, ເຮືອນກະຕ່າຍກໍ່ດ້ວຍດິນຈີ່, ຫຼັງຄາເຮືອນມຸງດ້ວຍສັງກະສີ, ຄອບຄົວກະຕ່າຍມີຄວາມສາມັກຄີກັນ, ຂັ້ນໄດເຮືອນເຮັດດ້ວຍໄມ້.

### III. ສື່ການຮຽນ-ການສອນ

1. ຮູບພາບເຮືອນກໍ່ປະສົມໄມ້.
2. ນິດນິທານເລື່ອງ ຄອບຄົວກະຕ່າຍ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບວັດສະດຸທີ່ເອົາມານຳໃຊ້ເຮັດເຮືອນໄມ້.
2. ໃຫ້ເດັກນ້ອຍເວົ້າຄຳສັບ, ປະໂຫຍກ, ເລົ່ານິທານ ແລະ ສົນທະນາຕາມເນື້ອໃນ ນິດນິທານ.
3. ໃຫ້ເດັກນ້ອຍສັງເກດຮູບພາບເຮືອນກໍ່ປະສົມໄມ້, ສົນທະນາກ່ຽວກັບລັກສະນະ, ສ່ວນປະກອບຂອງເຮືອນກໍ່ປະສົມໄມ້ ແລະ ວັດສະດຸທີ່ນຳໃຊ້.
4. ໃຫ້ເດັກນ້ອຍເວົ້າຄືນສ່ວນປະກອບຂອງເຮືອນໄມ້ ແລະ ເວົ້າຄຳສັບຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ມາລະຍາດໃນການຟັງນິທານ.

### V. ການວັດ ແລະ ປະເມີນຜົນ.

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກລັກສະນະ, ສ່ວນປະກອບຂອງເຮືອນກໍ່ປະສົມໄມ້ ແລະ ວັດ ສະດຸທີ່ນຳໃຊ້.
2. ຄວາມຊັດເຈນໃນການເວົ້າຄຳ ສັບ ແລະ ປະໂຫຍກຕາມເນື້ອໃນນິດນິທານ.
3. ການມີມາລະຍາດ ແລະ ຄວາມມ່ວນຊື່ນໃນການຟັງນິທານ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພັບສີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ພັບສີເປັນຮູບຕ່າງໆຕາມຈິນຕະນາການ.
2. ພັບສີເປັນຮູບຕ່າງໆຕາມຈິນຕະນາການໄດ້ສະອາດຈົບງາມ.
3. ຮັກສາຄວາມປອດໄພໃນການພັບສີ.

### II. ເນື້ອໃນຕົ້ນຕໍ

ການພັບສີເປັນຮູບຕ່າງໆຕາມຈິນຕະນາການ.

### III. ສື່ການຮຽນ-ການສອນ

1. ແບບພັບສີຮູບຕ່າງໆ.
2. ຊາມ, ຜ້າເຊັດມື, ສະບູ, ເຈ້ຍຂາວ, ບີສ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງຢືບ, ຢືກ, ຫຍູມ.
2. ໃຫ້ເດັກນ້ອຍສັງເກດຮູບຮ່າງຜ້າທີ່ຈະພັບ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການພັບສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ  ຂັ້ນຕອນການພັບສີເປັນຮູບຕ່າງໆຕາມຈິນຕະນາການ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການພັບພັບສີເປັນຮູບຕ່າງໆຕາມຈິນຕະນາການ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການພັບສີເປັນຮູບຕ່າງໆຕາມຈິນຕະນາການ.
2. ຄວາມສະອາດຈົບງາມໃນການພັບສີເປັນຮູບຕ່າງໆຕາມຈິນຕະນາການ.
3. ການຮັກສາຄວາມປອພໄພໃນການພັບສີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ມັດຕາຈັບປຸມເປົ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ມັດຕາຈັບປຸມເປົ້າໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນ ມັດຕາຈັບປຸມເປົ້າໄດ້ຖືກຕ້ອງ
3. ສຳນຶກ ແລະ ກະຕວງໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນມັດຕາຈັບປຸມເປົ້າ.

### III. ສື່ການຮຽນ-ການສອນ

1. ໝາກປຸມເປົ້າ, ຢາງບ້ວງ, ເຊືອກຟາງ, ທ່ອນໄມ້ສຳລັບເຮັດຫຼັກ.
2. ວິທີຫຼິ້ນ (ເບິ່ງຕາມປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍຢືນຕົບມືໄປຂ້າງຊ້າຍ-ຂ້າງຂວາ, ຕົບໄປຂ້າງໜ້າກັບຫຼັງ.
2. ນາຍຄູສະເໜີແບບຫຼິ້ນ ມັດຕາຈັບປຸມເປົ້າສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ມັດຕາຈັບປຸມເປົ້າ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນໃຫ້ມີຄວາມລະມັດລະວັງ, ຊ່ວຍເຫຼືອກັນໃນເວລາຫຼິ້ນ ແລະ ຫຼິ້ນແລ້ວເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍຢືນຢູ່ກັບທີ່ ຫາຍໃຈອອກເຂົ້າຢ່າງຊ້າໆ, ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນ ມັດຕາຈັບປຸມເປົ້າ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ມັດຕາຈັບປຸມເປົ້າ.
3. ການສຳນຶກ ແລະ ກະຕວງ ໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບທີ່ແຍກສ່ວນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບທີ່ແຍກສ່ວນໄດ້ຖືກຕ້ອງ.
3. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ເຕົາໄຟ, ໝໍ້ຂາງ, ໝໍ້ແກງ, ການ້ຳ, ກະຕ່າ, ຊາມ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ເຕົາໄຟ, ໝໍ້ຂາງ, ໝໍ້ແກງ, ການ້ຳ, ກະຕ່າ, ຊາມ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມສຶກສາລາຍລະອຽດຮູບພາບສ່ວນປະກອບຂອງເຮືອນ: ຂັ້ນໄດ, ປະຕູ, ປ່ອງຢ້ຽມ, ຝາເຮືອນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູ ສົນທະນາກັບເດັກນ້ອຍ ກ່ຽວກັບສ່ວນປະກອບຂອງເຮືອນກໍ່ປະສົມໄມ້.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນການຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບທີ່ແຍກສ່ວນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບທີ່ແຍກສ່ວນ.
3. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມວິທະຍາສາດ ແລະ ທຳມະຊາດ, ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຈັດໝວດໝູ່ກ້ອນຫີນຕາມຂະໜາດໃຫຍ່- ນ້ອຍ, ກ້ອນຫີນຕໍ່ກ້ອນຫີນເປັນຮູບເຮືອນຕາມແບບໄດ້ຖືກຕ້ອງ.
3. ຕໍ່ບຼັອກ ແລະ ວາງໄມ້ດິ້ວເປັນຮູບເຮືອນຕາມຈິນຕະນາການຢ່າງມ່ວນຊື່ນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມວິທະຍາສາດ-ທຳມະຊາດ ແລະ ມຸມເຄື່ອງຫຼິ້ນສຳຜັດ.
2. ການສັງເກດ, ຈັດໝວດໝູ່ກ້ອນຫີນຕາມຂະໜາດ, ກໍ່ກ້ອນຫີນເປັນຮູບເຮືອນຕາມແບບ.
3. ການຕໍ່ບຼັອກເປັນຮູບເຮືອນ ແລະ ວາງໄມ້ດິ້ວເປັນຮູບເຮືອນຕາມຈິນຕະນາການ.

### III. ສື່ການຮຽນ-ການສອນ

1. ມຸມວິທະຍາສາດ ແລະ ທຳມະຊາດ: ກ້ອນຫີນໃຫຍ່-ນ້ອຍ, ແບບຮູບເຮືອນທີ່ກໍ່ແລ້ວ.
2. ມຸມເຄື່ອງຫຼິ້ນສຳຜັດ: ຊຸດໄມ້ບຼັອກ ຫຼື ບຼັອກປາຣາສະຕິກ, ໄມ້ດິ້ວ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ, ມຸມເຄື່ອງຫຼິ້ນສຳຜັດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ, ມຸມເຄື່ອງຫຼິ້ນສຳຜັດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຈັດໝວດໝູ່ກ້ອນຫີນຕາມຂະໜາດ, ກໍ່ກ້ອນຫີນເປັນຮູບເຮືອນຕາມແບບ.
3. ຄວາມມ່ວນຊື່ນໃນການຕໍ່ບຼັອກ ແລະ ວາງໄມ້ດິ້ວເປັນຮູບເຮືອນຕາມຈິນຕະນາການ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມການສັນຍານ ຕົບມື

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມການສັນຍານ ຕົບມືໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມການສັນຍານ ຕົບມື:

- ຕົບມື 1 ບາດແລ່ນເຂົ້າມຸມໄມ້.
- ຕົບມື 2 ບາດແລ່ນເຂົ້າມຸມແກ້ວ.
- ຕົບມື 3 ບາດແລ່ນເຂົ້າມຸມຊີມັງ.

### III. ສື່ການຮຽນ-ການສອນ

1. ທ່າຫັດກາຍຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).
2. ບັດຊື່ມຸມ: ມຸມໄມ້, ມຸມແກ້ວ, ມຸມຊີມັງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານແຂນ ແລະ ຂາ: ທ່າວາແຂນອອກພຽງບ່າໄຫຼ່ແລ້ວເອົາໄຂວ່ກັນຢູ່ທາງໜ້າ ແລະ ທ່າຍົກຂາຊ້າຍຢືນຂາດຽວໄປທາງຫຼັງເອົາມືຈັບໄວ້.
2. ໃຫ້ເດັກນ້ອຍເຕັ້ນຂາດຽວເບື້ອງຊ້າຍ-ເບື້ອງຂວາໄປທາງໜ້າ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມການສັນຍານຕົບມື.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍຫຼັບຕາວາແຂນອອກ, ພ້ອມທັງຈ່າງຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມການສັນຍານ ຕົບມື.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມການສັນຍານ ຕົບມື.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ເຮືອນກໍ່

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກລັກສະນະ, ສ່ວນປະກອບຂອງເຮືອນກໍ່ ແລະ ວັດສະດຸທີ່ນຳໃຊ້ໄດ້ຖືກຕ້ອງ.
2. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ລັກສະນະ, ສ່ວນປະກອບຂອງເຮືອນກໍ່ ແລະ ວັດສະດຸທີ່ນຳໃຊ້:
- ລັກສະນະ: ຕ່ຳຊັ້ນດຽວ, ສູງຫຼາຍຊັ້ນ, ໂຄງສ້າງເຮັດດ້ວຍເຫຼັກ, ກໍ່ດ້ວຍດິນຈີ່, ຊີມັງ, ຈຳນວນຫ້ອງມີຫຼາຍ.
- ສ່ວນປະກອບ: ເສົາ, ຂັ້ນໄດ, ພື້ນເຮືອນ, ຝາເຮືອນ, ປະຕູ, ປ່ອງຢ້ຽມ, ເພດານ, ຫຼັງຄາ.
- ວັດສະດຸທີ່ນຳໃຊ້: ໄມ້, ແກ້ວ, ເຫຼັກ, ສັງກະສີ ຫຼື ກະເບື້ອງ, ດິນຈີ່, ຊີມັງ, ຫີນ ແລະ ຊາຍ.

2. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ; ບັດຄຳສັບ: ຝາເຮືອນ, ພື້ນເຮືອນ, ແກ້ວ, ກະເບື້ອງ, ເຫຼັກ, ດິນຈີ່, ຊີມັງ, ຫີນ, ຊາຍ, ໄມ້. ບັດປະໂຫຍກ: ແກ້ວໃຊ້ໃສ່ປະຕູ ແລະ ປ່ອງຢ້ຽມ, ເຫຼັກຕາປູໃຊ້ຕອກໄມ້, ກະເບື້ອງໃຊ້ມຸງຫຼັງຄາ, ຊາຍ ແລະ ຊີ ມັງໃຊ້ໄວ້ກໍ່, ຫີນ, ຊາຍ ແລະ ຊີມັງໃຊ້ເທພື້ນ, ເຫຼັກເສັ້ນໃຊ້ເທເສົາ ແລະ ເທຄານ.

### III. ສື່ການຮຽນ-ການສອນ

ຮູບພາບ: ຮູບພາບເຮືອນກໍ່ຊັ້ນດຽວ, ກໍ່ຫຼາຍຊັ້ນ, ເຫຼັກຕາປູ, ເຫຼັກເສັ້ນ, ກະເບື້ອງ, ຊີມັງ, ຫີນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບວັດສະດຸທີ່ໃຊ້ເຮັດເຮືອນກໍ່ປະສົມໄມ້.
2. ໃຫ້ເດັກນ້ອຍສັງເກດຮູບພາບເຮືອນກໍ່, ສົນທະນາກ່ຽວກັບລັກສະນະ, ສ່ວນປະກອບຂອງເຮືອນກໍ່ ແລະ ວັດ ສະດຸທີ່ນຳໃຊ້.
3. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍເວົ້າຄືນລັກສະນະ, ສ່ວນປະກອບຂອງເຮືອນກໍ່, ວັດສະດຸທີ່ນຳໃຊ້, ເວົ້າຄຳສັບ ແລະ ປະໂຫຍກ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອກັນ ແລະ ການບົວລະບັດຮັກສາເຮືອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກລັກສະນະ, ສ່ວນປະກອບຂອງເຮືອນກໍ່ ແລະ ວັດສະດຸທີ່ນຳໃຊ້.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ໂຮຍຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການໂຮຍດິນຊາຍໃສ່ຮູບພາບເຮືອນໄດ້ຖືກຕ້ອງ.
2. ໂຮຍຊາຍໃສ່ຮູບພາບເຮືອນໄດ້ສະອາດຈົບງາມ.
3. ມີຄວາມລະມັດລະວັງໃນການໂຮຍດິນຊາຍ.

### II. ເນື້ອໃນຕົ້ນຕໍ

ການໂຮຍດິນຊາຍໃສ່ຮູບພາບເຮືອນ.

### III. ສື່ການຮຽນ-ການສອນ

1. ຮູບພາບເຮືອນ ແລະ ເຈ້ຍແບບຮູບພາບເຮືອນທີ່ໂຮຍດິນຊາຍແລ້ວ.
2. ກາວສຳເລັດຮູບ ຫຼື ເຂົ້າໜຽວຕົ້ມ ແລະ ດິນຊາຍ.
3. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເດັກເຮັດທ່າທາງລູບມື, ລ້າງມື.
2. ໃຫ້ເດັກນ້ອຍສັງເກດຮູບພາບເຮືອນ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການໂຮຍດິນຊາຍ.
3. ນາຍຄູແນະນຳ, ສາທິດວິທີ ແລະ  ຂັ້ນຕອນການໂຮຍດິຍຊາຍໃສ່ຮູບພາບເຮືອນ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການໂຮຍດິຍຊາຍໃສ່ຮູບພາບເຮືອນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ, ຄວາມສະອາດ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ຂັ້ນຕອນການໂຮຍດິນຊາຍໃສ່ຮູບພາບເຮືອນ.
2. ຄວາມສະອາດຈົບງາມໃນການໂຮຍດິນຊາຍໃສ່ຮູບພາບເຮືອນ.
3. ຄວາມລະມັດລະວັງໃນການໂຮຍດິນຊາຍ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ການຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈໄດ້ຖືກຕ້ອງ
2. ເຝິກກ້າມຊີ້ນມືໃຫ້ແຂງແຮງ ໃນເວລາກອງຊາຍເປັນຮູບຕ່າງໆຕາມໃຈ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈ.

### III. ສື່ການຮຽນ-ການສອນ

1. ອ່າງດິນຊາຍ, ຮູບສີ່ແຈ, ປູນຂາວ, ທຸງສີຕ່າງໆ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍລຽນແຖວ ແລະ ແລ່ນຕາມຫຼັງກັນຊ້າໆ ຕາມບໍລິເວນເດີ່ນ.
2. ນາຍຄູສະເໜີ ແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈ ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມລະມັດລະວັງ, ຫຼິ້ນແລ້ວອະນາໄມຕີນມື ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ
6. ໃຫ້ເດັກນ້ອຍເຮັດທ່າທາງເປັນໂຕແມງໄມ້ບິນໄປຊ້າໆ, ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນກອງຊາຍເປັນຮູບຕ່າງໆຕາມໃຈ.
2. ຄວາມແຂງແຮງຂອງກ້າມຊີ້ນມືໃນການຫຼິ້ນ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນເຮືອນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນເຮືອນໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນເຮືອນ: ຕູ້ເຢັນ, ໂທລະພາບ, ເຕົາລີດ, ພັດລົມ, ຖ້ວຍ, ບ່ວງ, ສ້ອມ, ໝໍ້, ເຕົາໄຟ, ພ້າ, ມີດຕັດ, ຂວ້ານ, ເລື່ອຍ, ສຽມ, ໂຕະ, ຕັ່ງ, ຕຽງ, ຕູ້.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນເຮືອນ: ຕູ້ເຢັນ, ໂທລະພາບ, ເຕົາລີດ, ພັດລົມ, ຖ້ວຍ, ບ່ວງ, ສ້ອມ, ໝໍ້, ເຕົາໄຟ, ພ້າ, ມີດຕັດ, ຂວ້ານ, ເລື່ອຍ, ສຽມ, ໂຕະ, ຕັ່ງ, ຕຽງ, ຕູ້. (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບທີ່ແຍກສ່ວນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູ ສົນທະນາເກັບເດັກນ້ອຍ ກ່ຽວກັບສ່ວນປະກອບຂອງເຮືອນກໍ່.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນເຮືອນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນເຮືອນ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຕໍ່ຮູບຊົງເລຂາຄະນິດຕາມແບບໄດ້ຖືກຕ້ອງ, ວາງໄມ້ດິ້ວເປັນຮູບເຮືອນຕາມຈິນຕະນາການ ຢ່າງມ່ວນຊື່ນ.
3. ຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນເຮືອນ, ຫຼິ້ນເກມຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບທີ່ແຍກສ່ວນໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ເກມການສຶກສາ.
2. ການຕໍ່ຮູບຊົງສາມລ່ຽມ, ສີ່ລ່ຽມ ແລະ ວົງມົນໃຫ້ເປັນຮູບເຮືອນ, ຕູ້ເຢັນຕາມແບບ, ວາງໄມ້ດິ້ວເປັນຮູບເຮືອນຕາມຈິນຕະນາການ.
3. ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນເຮືອນ: ຕູ້ເຢັນ, ໂທລະພາບ, ເຕົາລີດ, ພັດລົມ, ຖ້ວຍ, ບ່ວງ, ສ້ອມ, ໝໍ້, ເຕົາໄຟ, ຜ້າ, ມີດຕັດ, ຂວ້ານ, ເລື່ອຍ, ສຽມ, ໂຕະ, ຕັ່ງ, ຕຽງ, ຕູ້; ເກມຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບ ທີ່ແຍກສ່ວນ: ເຕົາໄຟ, ໝໍ້ຂາງ, ໝໍ້ແກງ, ການ້ຳ, ກະຕ່າ, ຊາມ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ບູ້ອກຊົງສາມລ່ຽມ, ສີ່ລ່ຽມ, ວົງມົນ ແລະ ໄມ້ດິ້ວ.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ, ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນເຮືອນ: ຕູ້ເຢັນ, ໂທລະພາບ, ເຕົາລີດ, ພັດລົມ, ຖ້ວຍ, ບ່ວງ, ສ້ອມ, ໝໍ້, ເຕົາໄຟ, ຜ້າ, ມີດຕັດ, ຂວ້ານ, ເລື່ອຍ, ສຽມ, ໂຕະ, ຕັ່ງ, ຕຽງ, ຕູ້; ເກມຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນທີ່ສົມບູນກັບຮູບພາບ ທີ່ແຍກສ່ວນ: ເຕົາໄຟ, ໝໍ້ຂາງ, ໝໍ້ແກງ, ການ້ຳ, ກະຕ່າ, ຊາມ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສ່ວນປະກອບຂອງເຮືອນກໍ່ ແລະ ວັດສະດຸທີ່ນຳໃຊ້.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ;ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຕໍ່ຮູບຊົງເລຂາຄະນິດຕາມແບບ ແລະ ຄວາມມ່ວນຊື່ນໃນການວາງໄມ້ດິ້ວເປັນຮູບເຮືອນຕາມຈິນຕະນາການ
3. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນເຄື່ອງໃຊ້ໃນເຮືອນ, ການຈັບຄູ່ຮູບພາບເຄື່ອງໃຊ້ສຳລັບຄົວກິນ ແລະ ຮູບພາບທີ່ແຍກສ່ວນ.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ກວາດພື້ນເຮືອນ, ປັດໄຍແມງມຸມ, ເກັບຂີ້ເຫຍື້ອໃສ່ກະຕ່າ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍຍະບໍລິຫານແຂນ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານແຂນ ແລະ ຕີນ: ທ່າກອດແຂນຊ້າຍໄຂ່ວແຂນຂວາ, ແຂນຂວາ ໄຂ່ວແຂນຊ້າຍ ແລະ ທ່າໝູບຄໍ່ຕີນ.
2. ໃຫ້ເດັກນ້ອຍໂດດຢຽບເສັ້ນເຊືອກໄລຍະຫ່າງ 20-50 ຊມ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາເອົາມືທັງສອງຄໍ່ມພື້ນທາງຫຼັງພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ການຮັກສາຄວາມສະອາດເຮືອນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດເຮືອນໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການຖູພື້ນເຮືອນ.
3. ເວົ້າຄຳສັບ, ປະໂຫຍກຕາມເນື້ອໃນບົດເພງ ແລະ ຮ້ອງເພງໄດ້ຊັດເຈນ.
4. ປຽບທຽບຈຳນວນໜ້ອຍກວ່າ, ເທົ່າກັນບໍ່ເກີນ 5 ໄດ້ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດເຮືອນ:

- ຊື່ເຄື່ອງໃຊ້: ຟອຍກວາດພື້ນ, ຊວ້ານຂີ້ເຫຍື້ອ, ກະຕ່າຂີ້ເຫຍື້ອ, ຄຸນ້ຳ, ຜ້າຖູພື້ນ, ຜ້າເຊັດ, ໄມ້ຖູພື້ນ, ນ້ຳຢາຖູພື້ນ, ຟອຍປັດໃຍແມງມຸມ.
- ການຮັກສາຄວາມສະອາດ: ປັດກວາດ ແລະ ຖູພື້ນເຮືອນ, ເຊັດປະຕູ ແລະ ປ່ອງຢ້ຽມ, ປັດໃຍແມງມຸມຕາມເພດານ, ຝາເຮືອນ ແລະ ເກັບມ້ຽນເຄື່ອງໄວ້ເປັນລະບຽບ.

2. ການເວົ້າຄຳສັບ, ປະໂຫຍກ ແລະ ຮ້ອງເພງ ເຮືອນສະອາດ; ບັດຄຳສັບ: ເຮືອນ, ສະອາດ, ເຫຼື້ອມ, ກ້ຽງ, ເຊັດ, ຖູ, ປະຕູ, ເພດານ, ພື້ນ, ຂີ້ຝຸ່ນ, ໃຍແມງມຸມ; ບັດປະໂຫຍກ: ເພດານບໍ່ມີໄຍແມງມຸມ, ຂ້ອຍເຊັດປະຕູໃຫ້ເຫຼື້ອມ, ຂ້ອຍຖູພື້ນເຮືອນໃຫ້ສະອາດ, ເຮືອນຂອງຂ້ອຍມີປະຕູ ແລະ ເພດານ.
3. ການປຽບທຽບຈຳນວນ: ໜ້ອຍກວ່າ ແລະ ເທົ່າກັນບໍ່ເກີນ 5.
4. ການປະຕິບັດຕົວຈິງໃນການຖູພື້ນເຮືອນ.

### III. ສື່ການຮຽນ-ການສອນ

1. ຟອຍກວາດພື້ນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ, ຊວ້ານຂີ້ເຫຍື້ອ, ຜ້າຖູພື້ນ, ນ້ຳຢາຖູພື້ນຟອຍ, ປັດໄຍແມງມຸມ.
2. ຮູບພາບ: ຟອຍກວາດພື້ນ, ຄຸນ້ຳ 1-5.
3. ບົດເພງ ເຮືອນສະອາດ ເບິ່ງໃນປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູພາເດັກນ້ອຍເວົ້າຄຳສັບ, ປະໂຫຍກ, ຮ້ອງເພງ ແລະ ສົນທະນາຕາມເນື້ອໃນບົດເພງ.
2. ໃຫ້ເດັກນ້ອຍສັງເກດຟອຍກວາດພື້ນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ, ຊວ້ານຂີ້ເຫຍື້ອ, ຜ້າຖູພື້ນ, ນ້ຳຢາຖູພື້ນຟອຍປັດໄຍແມງມຸມ, ສົນທະນາກ່ຽວກັບຊື່ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດເຮືອນ.
3. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການຖູພື້ນເຮືອນ.
4. ໃຫ້ເດັກນ້ອຍປຽບທຽບຮູບພາບ ຟອຍກວາດພື້ນ, ຄຸນ້ຳຈຳນວນໜ້ອຍກວ່າ ແລະ ເທົ່າກັນບໍ່ເກີນ 5.
5. ໃຫ້ເດັກນ້ອຍເວົ້າຄືນຊື່ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດເຮືອນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມດຸໝັ່ນໃນການບົວລະບັດຮັກສາເຮືອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດເຮືອນ
2. ການປະຕິບັດຕົວຈິງໃນການຖູພື້ນເຮືອນ.
3. ຄວາມຊັດເຈນໃນການເວົ້າຄຳສັບ, ປະໂຫຍກຕາມເນື້ອໃນບົດເພງ ແລະ ຮ້ອງເພງ.
4. ຄວາມຖືກຕ້ອງໃນການປຽບທຽບຈຳນວນໜ້ອຍກວ່າ, ເທົ່າກັນບໍ່ເກີນ 5.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພິມສີດ້ວຍກ້ານກ້ວຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນການພິມສີດ້ວຍກ້ານກ້ວຍໃສ່ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອໄດ້ຖືກຕ້ອງ.
2. ພິມສີດ້ວຍກ້ານກ້ວຍໃສ່ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອໄດ້ສະອາດຈົບງາມ.
3. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການພິມສີ.

### II. ເນື້ອໃນຕົ້ນຕໍ

ການພິມສີດ້ວຍກ້ານກ້ວຍໃສ່ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ ແລະ ສີນ້ຳ.
2. ກ້ານກ້ວຍ.
3. ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳກະຕ່າຂີ້ ເຫຍື້ອ.
4. ແບບຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫື້ຍອທີ່ພິມແລ້ວ.
5. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.
6. ບົດເພງ ເຮືອນສະອາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ເຮືອນສະອາດ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບ ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການພິມສີດ້ວຍກ້ານກ້ວຍໃສ່ຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການພິມສີດ້ວຍກ້ານກ້ວຍໃສ່ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍນຳສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການພິມສີດ້ວຍກ້ານກ້ວຍໃສ່ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ. .
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ, ຄວາມສະອາດ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນການພິມສີດ້ວຍກ້ານກ້ວຍໃສ່ຮູບພາບ.
2. ຄວາມສະອາດຈົບງາມໃນການພິມສີດ້ວຍກ້ານກ້ວຍໃສ່ຮູບພາບ: ຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ.
3. ຄວາມລະມັດລະວັງໃນການພິມສີໃສ່ຮູບພາບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນສົ່ງໂອນນ້ຳຂ້າມຫົວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໂອນນ້ຳໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໂອນນ້ຳໄດ້ຖືກຕ້ອງ.
3. ມີຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງໂອນນ້ຳຂ້າມຫົວ.

### III. ສື່ການຮຽນ-ການສອນ

1. ໂອນນ້ຳ ຫຼື ຖັງນ້ຳ ແລະ ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍແລ່ນຕາມຫຼັງກັນ ແລະ ຢືນພູນເຂົ່າ, ເບັດແອວໄປ-ມາ.
2. ນາຍຄູສະເໜີແບບຫຼິ້ນ ແຂ່ງຂັນສົ່ງໂອນນ້ຳສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ແຂ່ງຂັນສົ່ງໂອນນ້ຳຂ້າມຫົວ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນໃຫ້ມີຄວາມລະມັດລະວັງ, ຊ່ວຍເຫຼືອກັນໃນເວລາຫຼິ້ນ ແລະ ຫຼິ້ນແລ້ວເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍເຮັດທ່າທາງເປົ່າປຸມເປົ້າ, ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນ ສົ່ງໂອນນ້ຳຂ້າມຫົວ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນ ສົ່ງໂອນນ້ຳຂ້າມຫົວ.
3. ຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຕົວເລກທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5 ໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5: ຮູບຟອຍ 1 ກ້ານ, ຊວ້ານຂີ້ເຫຍື້ອ 2 ອັນ, ກະຕ່າຂີ້ເຫຍື້ອ 3 ໜ່ວຍ, ຄຸນ້ຳ 4 ໜ່ວຍ, ຜ້າຖູພື້ນ 5 ຜືນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5: ຮູບຟອຍ 1 ກ້ານ, ຊວ້ານຂີ້ເຫຍື້ອ 2 ອັນ, ກະຕ່າຂີ້ເຫຍື້ອ 3 ໜ່ວຍ, ຄຸນ້ຳ 4 ໜ່ວຍ, ຜ້າຖູພື້ນ 5 ຜືນ (ສຳລັບນາຍຄູ, ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນເຮືອນ: ຕູ້ເຢັນ, ໂທລະພາບ, ເຕົາລີດ, ພັດລົມ, ຖ້ວຍ, ບ່ວງ, ສ້ອມ, ໝໍ້, ເຕົາໄຟ, ພ້າ, ມີດຕັດ, ຂວ້ານ, ເລື່ອຍ, ສຽມ, ໂຕະ, ຕັ່ງ, ຕຽງ, ຕູ້.
3. ບົດເພງ ເຮືອນສະອາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ເຮືອນສະອາດ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຕົວເລກທີ່ຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມຈັບຄູ່ຮູບພາບ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຕົວເລກ ແລະ ການຫຼິ້ນເກມຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຕົວເລກທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ພິມສີ ແລະ ໂຮຍຊາຍໃສ່ຮູບພາບໄດ້ຖືກຕ້ອງ.
3. ອ່ານອອກສຽງຄຳສັບທີ່ປະສົມສະຫຼະ x̄, ຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ x່, x້ ໄດ້ຊັດເຈນ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
2. ການພິມສີດ້ວຍກ້ານກ້ວຍໃສ່ຮູບຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ ແລະ ໂຮຍຊາຍໃສ່ຮູບເຮືອນ.
3. ການອ່ານອອກສຽງຄຳສັບທີ່ປະສົມສະຫຼະ x̄: ດີ, ປີ, ນີ, ມີ, ລີ, ວີ, ອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ x່, x້: ດີ, ດີ່, ດີ້; ປີ, ປີ່, ປີ້; ນີ, ນີ່, ນີ້.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ສີນ້ຳ, ກ້ານກ້ວຍ, ຮູບຟອຍກວາດເຮືອນ, ຄຸນ້ຳ, ກະຕ່າຂີ້ເຫຍື້ອ, ຮູບເຮືອນ, ດິນຊາຍ, ກາວ, ເສື້ອກັນເປື້ອນ.
2. ມຸມອ່ານ: ບັດຄຳສັບທີ່ປະສົມສະຫຼະ x̄: ດີ, ປີ, ນີ, ມີ, ລີ, ວີ; ຄຳສັບທີ່ມີ ແລະ ບໍ່ມີວັນນະ ຍຸດ x່, x້: ດີ, ດີ່, ດີ້; ປີ, ປີ່, ປີ້; ນີ, ນີ່, ນີ້ ແລະ ກະດານສຽບ ຫຼື ຕິດ.
3. ບົດເພງ ເຮືອນສະອາດ ແລະ ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ເຮືອນສະອາດ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການພິມສີ ແລະ ໂຮຍຊາຍໃສ່ຮູບພາບ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ປະສົມສະຫຼະ x̄, ຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ x່, x້.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

# ຈຸດປະສົງສຳລັບ ອາທິດທີ 4

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດໄດ້ຖືກຕ້ອງ.
3. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
4. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງໄດ້ຖືກຕ້ອງ.
5. ສະແດງທ່າທາງຕາມການສັນຍານ ຍົກຮູບພາບໄດ້ຖືກຕ້ອງ.
6. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
7. ເວົ້າຄຳສຸພາບກັບໝູ່ເພື່ອນ.
8. ອົດທົນໃນເວລາສະແດງທ່າທາງ.
9. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກປະເພດ, ຂະໜາດ ແລະ ສີຫ້ອງຕ່າງໆໃນເຮືອນໄດ້ຖືກຕ້ອງ.
2. ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ, ຮູບພາບ, ນິທານໄດ້ຊັດເຈນ.
3. ບອກເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງນອນ, ຫ້ອງຮັບແຂກ, ຫ້ອງແຕ່ງກິນ, ຫ້ອງນ້ຳ ແລະ ຫ້ອງວິດຖ່າຍໄດ້ຖືກຕ້ອງ.
4. ອ່ານອອກສຽງຄຳທີ່ມີຕົວສະກົດ: ກ, ງ, ດ, ບ ໄດ້ຊັດເຈນ.
5. ບອກເຄື່ອງໃຊ້ທີ່ເປັນຮູບວົງມົນໄດ້ຖືກຕ້ອງ.
6. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນການພັບສີເປັນຮູບພາບຕ່າງໆ, ປັ້ນດິນເປັນຮູບຈອງ, ຕັດ-ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້, ປັ້ນດິນເປັນຮູບຖ້ວຍ ແລະ ຂັ້ນຕອນການເປົ່າສີເປັນຮູບພາບຕ່າງໆໄດ້ຖືກຕ້ອງ.
2. ພັບສີ ແລະ ເປົ່າສີເປັນເປັນຮູບພາບຕ່າງໆໄດ້ສະອາດຈົບງາມ.
3. ປັ້ນດິນເປັນຮູບຈອງ ແລະ ປັ້ນດິນເປັນຮູບຖ້ວຍໄດ້ຄ້າຍຄື.
4. ຕັດ, ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້ໄດ້ສະອາດຈົບງາມ.
5. ເຝິກໃຫ້ເດັກມີຄວາມລະມັດລະວັງໃນການພິມສີ ແລະ ເປົ່າສີ.
6. ແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.
7. ມີຄວາມອົດທົນໃນການຕັດ-ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້.
8. ແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນ ຫຼັງຕິດກັນ, ຍ່າງຄືໝີ, ແຂ່ງອັນເກັບບານຕາມ ສີກຳນົດ, ຫຼິ້ນຊາຍ ເປັນຮູບບ່ວງ, ຖ້ວຍ ແລະຈານ, ໂຍນບ້ວງໃສ່ເປົ້າໄດ້.
2. ຫຼິ້ນແບບຫຼິ້ນ ຫຼັງຕິດກັນ, ຍ່າງຄືໝີ, ແຂ່ງອັນເກັບບານຕາມສີກຳນົດ, ຫຼິ້ນຊາຍເປັນຮູບບ່ວງ, ຖ້ວຍ ແລະ ຈານ, ໂຍນບ້ວງໃສ່ເປົ້າໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
4. ເບີກບານມ່ວນຊື່ນ ໃນເລວາຫຼິ້ນ.
5. ມີຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນ.

7. ເຝິກກ້າມຊີ້ນມື ແລະ ແຂນໃຫ້ມີຄວາມແຂງແຮງ.
8. ມີຄວາມອົດທົນໃນເວລາຫຼິ້ນ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ, ຮູບພາບ ແລະ ຮູບເລຂາຄະນິດທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນໄດ້ຖືກຕ້ອງ.
3. ຕໍ່ຮູບພາບເຄື່ອງໃຊ້ໃນຫ້ອງຮັບແຂກໄດ້ຖືກຕ້ອງ.
4. ຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນໄດ້ຖືກຕ້ອງ.
5. ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງນອນ ແລະ ເຄື່ອງໃນຫ້ອງນ້ຳໄດ້ຖືກຕ້ອງ.
6. ອົດທົນໃນເວລາຫຼິ້ນເກມ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
8. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

## ກິດຈະກຳຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດຫຼິ້ນເຄື່ອງດິນຕີ, ພິມຕົວເລກອາຣັບ 0-3 ໃສ່ອ່າງດິນຊາຍ, ຕໍ່ບຼັອກເປັນຮູບເຄື່ອງໃຊ້ໃນຫ້ອງນອນ, ຕໍ່ບຼັອກເປັນຮູບເຄື່ອງໃຊ້ໃນການແຕ່ງກິນ: ຄົກ ແລະ ສາກຢ່າງມ່ວນຊື່ນ.
3. ຕັດ-ຕິດຮູບພາບໂທລະພາບ ແລະ ໂຖດອກໄມ້, ປັ້ນດິນເປັນຮູບຈອງ, ເປົ້າສີເປັນຮູບຕ່າງໆຕາມຈິນຕະນາການ ແລະ ປັ້ນດິນເປັນຮູບຖ້ວຍຕາມແບບໄດ້ຖືກຕ້ອງ.
4. ເວົ້າເປັນປະໂຫຍກສັ້ນຕາມຮູບພາບ, ອ່ານຄຳສັບຕາມຮູບພາບ: ຖ້ວຍ, ຈານ, ບ່ວງ, ຈອງ, ສ້ອມ, ໝໍ້, ຫວດ, ໝໍ້ໜຶ້ງເຂົ້າ,  ພາເຂົ້າ, ເຕົາໄຟ, ຕິບເຂົ້າ, ຂຽງ, ມີດ ແລະ ຜ້າໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດເປັນຕົວລະຄອນໃນບົດເລື່ອງຄອບຄົວກະຕ່າຍ, ອະນາໄມຫ້ອງຕ່າງໆໃນເຮືອນ, ເປັນພໍ່-ແມ່ ແລະ ລູກຊ່ວຍກັນອະນາໄມ ແລະ ເກັບມ້ຽນເຄື່ອງໃຊ້ໃນຫ້ອງຮັບແຂກຢ່າງມ່ວນຊື່ນ.
6. ຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ; ຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5; ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງນອນ; ຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ; ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງນ້ຳ.

7. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
8. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
9. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ກວາດເຮືອນ, ແຕ່ງກິນ, ອາບນ້ຳ, ນອນ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍຍະບໍລິຫານຂາ ແລະ ແຂວ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານຂາ ແລະ ແຂວ: ໝູນຫົວເຂົ່າ ແລະ ທ່າແຂວເບັດແຂວໄປເບື້ອງຊ້າຍ-ເບື້ອງຂວາ.
2. ໃຫ້ເດັກນ້ອຍຍ່າງເຢ່ງເຢ້ເປັນ 2 ແຖວຄູ່.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຂັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ຫ້ອງໃນເຮືອນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກປະເພດ, ຂະໜາດ ແລະ ສີຫ້ອງຕ່າງໆໃນເຮືອນໄດ້ຖືກຕ້ອງ.
2. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ປະເພດ, ຂະໜາດ ແລະ ສີຫ້ອງຕ່າງໆໃນເຮືອນ:
- ປະເພດຫ້ອງໃນເຮືອນ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງແຕ່ງກິນ, ຫ້ອງອາບນ້ຳ ແລະ ວິດຖ່າຍ.
- ຂະໜາດຂອງຫ້ອງ: ໃຫຍ, ນ້ອຍ, ກວ້າງ, ແຄບ.
- ສີ: ສີຂາວ, ສີຂຽວ, ສີຟ້າ.
2. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ; ບັດຄຳສັບ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງແຕ່ງກິນ, ຫ້ອງອາບນ້ຳ, ວິດຖ່າຍ; ບັດປະໂຫຍກ: ເດັກນ້ອຍນອນໃນຫ້ອງນອນ, ແມ່ປຸງແຕ່ງອາຫານຢູ່ຫ້ອງຄົວກິນ, ເດັກນ້ອຍອາບນ້ຳໃນຫ້ອງນ້ຳ, ເດັກນ້ອຍຖ່າຍໃສ່ວິດທຸກຄັ້ງ.

### III. ສື່ການຮຽນ-ການສອນ

ຮູບພາບ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງແຕ່ງກິນ, ຫ້ອງອາບນ້ຳ ແລະ ວິດຖ່າຍ, ເດັກນ້ອຍນອນໃນຫ້ອງນອນ, ແມ່ປຸງແຕ່ງອາຫານຢູ່ຫ້ອງຄົວກິນ, ເດັກນ້ອຍອາບນ້ຳໃນຫ້ອງນ້ຳ, ເດັກນ້ອຍຖ່າຍໃສ່ວິດ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການຮັກສາຄວາມສະອາດເຮືອນ.
2. ໃຫ້ເດັກນ້ອຍສັງເກດຮູບພາບຫ້ອງຕ່າງໆໃນເຮືອນ, ສົນທະນາກ່ຽວກັບປະເພດ, ຂະໜາດ ແລະ ສີຫ້ອງຕ່າງໆໃນເຮືອນ.
3. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ເວົ້າປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍເວົ້າຄືນປະເພດ, ລັກສະນະຫ້ອງຕ່າງໆໃນເຮືອນ ແລະ ເວົ້າຄຳສັບ, ປະໂຫຍກຕາມຮູບພາບຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມດຸໝັ່ນໃນການບົວລະບັດຮັກສາເຮືອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກປະເພດ, ຂະໜາດ ແລະ ສີຫ້ອງຕ່າງໆໃນເຮືອນ.
2. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພັບສີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນການພັບສີເປັນຮູບພາບຕ່າງໆໄດ້ຖືກຕ້ອງ.
2. ຢອດສີໃສ່ເຈ້ຍພັບສີເປັນຮູບພາບຕ່າງໆໄດ້ສະອາດຈົບງາມ.
3. ເຝິກໃຫ້ເດັກມີຄວາມລະມັດລະວັງໃນການພິມສີ.

### II. ເນື້ອໃນຕົ້ນຕໍ

ການພັບສີເປັນຮູບພາບຕ່າງໆຕາມຈິນຕະນາການ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ ແລະ ສີນໍ້າ.
2. ແບບຮູບທີ່ພັບສີແລ້ວ.
3. ຊາມນໍ້າ, ຜ້າເຊັດມື ແລະ ສະບູ.

### IV. ກິດຈະກຳການຮຽນ-ການສອນ

1. ແນະນຳໃຫ້ເດັກນ້ອຍເຮັດທ່າທາງບີບນວດຕາມນິ້ວມື, ຕາມອົ້ງມື ແລະ ດຶ່ງນິ້ວມືແຕ່ລະນິ້ວ.
2. ໃຫ້ເດັກນ້ອຍສັງເກດຮູບພາບຕ່າງໆທີ່ພັບສີແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການພັບສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການພັບສີເປັນຮູບພາບຕ່າງໆຕາມຈິນຕະນາການ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ການເວົ້າຄືນຂັ້ນຕອນການພັບສີເປັນຮູບພາບຕ່າງໆ
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ, ຄວາມສະອາດ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການພັບສີເປັນຮູບພາບຕ່າງໆ.
2. ຄວາມສະອາດຈົບງາມໃນການພັບສີເປັນຮູບຕ່າງໆ.
3. ຄວາມລະມັດລະວັງໃນການພັບສີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນຫຼັງຕິດກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຫຼັງຕິດກັນໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນຫຼັງຕິດກັນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ຫຼັງຕິດກັນ.

### III. ສື່ການຮຽນ-ການສອນ

1. ບົດເພງ ເຮືອນສະອາດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍລຽນແຖວ ແລະ ຢືນເປັນວົງມົນຕົບມືນັບ1-30.
2. ນາຍຄູສະເໜີແບບຫຼິ້ນ ຫຼັງຕິດກັນ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ຫຼັງຕິດກັນ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ ແລະ ມີຄວາມອົດທົນໃນເວລາຫຼິ້ນ.
6. ໃຫ້ເດັກນ້ອຍຢືນຢູ່ກັບທີ່ ແກ່ວງແຂນສະຫຼັບກັນໄປ-ມາ, ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນ ຫຼັງຕິດກັນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ຫຼັງຕິດກັນ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູ ສົນທະນາກັບເດັກນ້ອຍກ່ຽວກັບຫ້ອງຕ່າງໆໃນເຮືອນ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ..

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດມຸດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນຕົວລະຄອນໃນບົດນິທານຢ່າງມ່ວນຊື່ນ.
3. ຫຼິ້ນເກມຈັບຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ ແລະ ເກມຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5 ໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
2. ຫຼິ້ນບົດບາດສົມມຸດເປັນຕົວລະຄອນໃນບົດເລື່ອງ: ຄອບຄົວກະຕ່າຍ, ອະນາໄມຫ້ອງຕ່າງໆ ໃນເຮືອນ.
3. ການຫຼິ້ນເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ, ຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5: ຮູບຟອຍ 1 ກ້ານ, ຊວ້ານຂີ້ເຫຍື້ອ 2 ອັນ, ກະຕ່າຂີ້ເຫຍື້ອ 3 ໜ່ວຍ, ຄຸນ້ຳ 4 ໜ່ວຍ, ຜ້າຖູພື້ນ 5 ຜືນ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດມຸດ: ໜວກຕົວລະຄອນໃນບົດເລື່ອງຄອບຄົວກະຕ່າຍ, ຟອຍກວາດພື້ນ, ຟອຍປັດໃຍແມງມຸມ, ຟອຍປັດຝຸ່ນ.
2. ມຸມເກມການສຶກສາ: ແຜ່ນເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ, ຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5: ຮູບຟອຍ 1 ກ້ານ, ຊວ້ານ ຂີ້ເຫຍື້ອ 2 ອັນ, ກະຕ່າຂີ້ເຫຍື້ອ 3 ໜ່ວຍ, ຄຸນ້ຳ 4 ໜ່ວຍ, ຜ້າຖູພື້ນ 5 ຜືນ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນຕົວລະຄອນໃນບົດເລື່ອງ ແລະ ອະນາໄມ.
3. ຄວາມຖືກຕ້ອງໃນການຫຼິ້ນເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ ແລະ ເກມຈັບຄູ່ຮູບພາບເຄື່ອງໃຊ້ທຳຄວາມສະອາດເຮືອນຕາມຈຳນວນ 1-5.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດໄດ້ຖືກຕ້ອງ.
2. ເວົ້າຄຳສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ: ຊັກເຄື່ອງ, ຕາກເຄື່ອງ, ພັບເຄື່ອງ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານແຂນ ແລະ ຂາ: ທ່າຫງ່ຽງແຂນຂ້າງຊ້າຍ-ຂວາ ແລະ ທ່າຢືນຂາດຽວຍົກຂາຊ້າຍຂຶ້ນທາງໜ້າພ້ອມທັງເອົາມືຈັບໄວ້ (ຜັດປ່ຽນເບື້ອງ).
2. ໃຫ້ເດັກນ້ອຍຍ່າງຕາມທາງແຄບ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າຈ່າງຂາອອກ, ກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ.
2. ການເວົ້າຄຳສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

## ຫົວຂໍ້: ຫ້ອງນອນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງນອນໄດ້ຖືກຕ້ອງ.
2. ເວົ້າຄຳສັບ, ປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ອ່ານອອກສຽງຄຳທີ່ມີຕົວສະກົດ: ກ, ງ, ດ, ນ ໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງໃຊ້, ຄຸນປະໂຫຍດ ແລະການຮັກສາຄວາມສະອາດຫ້ອງນອນ.

- ເຄື່ອງໃຊ້: ຕຽງ, ຕູ້, ສາດ, ເສື່ອ, ຜ້າກັ້ງ, ຜ້າປູບ່ອນ, ຜ້າຫົ່ມ, ໝອນ ແລະ ມຸ້ງ.
- ຄຸນປະໂຫຍດ: ໃຊ້ໄວ້ເປັນບ່ອນນອນພັກຜ່ອນ.
- ການຮັກສາຄວາມສະອາດ: ປັດກວາດ, ເຊັດຖູບໍລິເວນຫ້ອງນອນ, ຊັກເຄື່ອງນອນໃຫ້ສະອາດ, ຕາກໃຫ້ແຫ້ງດີ ແລະ ເກັບມ້ຽນໃຫ້ເປັນລະບຽບ.

2. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ: ຫ້ອງນອນ, ຫ້ອງຮັບແຂກ, ຫ້ອງແຕ່ງກິນ, ຫ້ອງອາບນ້ຳ, ວິດຖ່າຍ; ບັດປະໂຫຍກ: ເດັກນ້ອຍນອນໃນຫ້ອງນອນ, ແມ່ປຸງແຕ່ງອາຫານຢູ່ຫ້ອງຄົວກິນ, ເດັກນ້ອຍອາບນ້ຳໃນຫ້ອງນ້ຳ, ເດັກນ້ອຍຖ່າຍ ໃສ່ວິດທຸກຄັ້ງ.
3. ການອ່ານອອກສຽງຄຳທີ່ມີຕົວສະກົດ: ກ, ງ, ດ, ນ: ຈິກ, ອິງ, ຂິດ, ຫີນ.

### III. ສື່ການຮຽນ-ການສອນ

ຮູບພາບ: ຕຽງ, ຕູ້, ສາດ, ເສື່ອ, ຜ້າກັ້ງ, ຜ້າປູບ່ອນ, ຜ້າຫົ່ມ, ໝອນ, ມຸ້ງ, ເດັກນ້ອຍປັດກວາດຫ້ອງນອນ, ເດັກນ້ອຍເຊັດຖູ ຫ້ອງນອນ, ເດັກນ້ອຍຊັກເຄື່ອງນອນ, ເດັກນ້ອຍຕາກເຄື່ອງນອນ, ເດັກນ້ອຍມ້ຽນເຄື່ອງນອນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຫ້ອງຕ່າງໆໃນເຮືອນ.
2. ໃຫ້ເດັກນ້ອຍສັງເກດຮູບພາບເຄື່ອງໃຊ້ໃນຫ້ອງນອນ, ສົນທະນາກ່ຽວກັບຊື່, ຄຸນປະໂຫຍດ, ການບົວລະບັດຮັກສາຄວາມສະອາດຫ້ອງນອນ.
3. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍອ່ານອອກສຽງຄຳທີ່ມີຕົວສະກົດ: ກ, ງ, ດ, ນ.
5. ໃຫ້ເດັກນ້ອຍເວົ້າຄືນຊື່ເຄື່ອງໃຊ້, ຄຸນປະໂຫຍດ, ການຮັກສາຄວາມສະອາດຫ້ອງນອນ, ເວົ້າຄຳສັບ ແລະ ປະໂຫຍກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມດຸໝັ່ນໃນການຮັກສາຄວາມສະອາດຫ້ອງນອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງນອນ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳທີ່ມີຕົວສະກົດ: ກ, ງ, ດ, ນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ການປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການປັ້ນດິນເປັນຮູບຈອງໄດ້ຖືກຕ້ອງ.
2. ປັ້ນດິນເປັນຮູບຈອງໄດ້ຄ້າຍຄື.
3. ແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນຮູບຈອງ.

### III. ສື່ການຮຽນ-ການສອນ

1. ດິນປັ້ນ ຫຼື ແປ້ງສຳລັບປັ້ນ.
2. ແຜ່ນຮອງປັ້ນ ແລະ ເສື້ອກັນເປື້ອນ.
3. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.

### IV. ກິດຈະກຳການຮຽນ-ການສອນ

1. ແນະນຳໃຫ້ເດັກນ້ອຍເຮັດທ່າທາງປັ້ນດິນ, ລິ້ງດິນ ແລະ ບວດດິນ.
2. ໃຫ້ເດັກນ້ອຍສັງເກດຮູບຈອງ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການປັ້ນດິນ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນຂອງການປັນດິນເປັນຮູບຈອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການປັ້ນດິນເປັນຮູບຈອງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບໃຫ້ເດັກນ້ອຍມີຄວາມສາມັກຄີ, ມີຄວາມອົດທົນ, ຮັກຄວາມສະອາດ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການປັ້ນດິນເປັນຮູບຈອງ.
2. ຄວາມຄ້າຍຄືໃນການປັ້ນດິນເປັນຮູບຈອງ.
3. ການແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ຍ່າງຄືພີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ຍ່າງຄືພີໄດ້ຖືກຕ້ອງ
2. ຫຼິ້ນແບບຫຼິ້ນ ຍ່າງຄືພີໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນ ໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ຍ່າງຄືພີ.

### III. ສື່ການຮຽນ-ການສອນ

1. ກອງ.
2. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍລຽນແຖວ, ແລ່ນຕາມຫຼັງກັນ ແລະ ຢືນສັ່ນຄໍມື, ຢ່າເຫົ້າຢູ່ກັບທີ່.
2. ນາຍຄູສະເໜີແບບຫຼິ້ນ ຍ່າງຄືພີ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ, ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ຍ່າງຄືພີ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນໃຫ້ມີຄວາມອົດທົນໃນເວລາຫຼິ້ນ ແລະ ຕັ້ງໃຈຍ່າງຄືພີໃຫ້ຖືກຕ້ອງ.
6. ໃຫ້ເດັກນ້ອຍນັ່ງລົງຢຽດຂາຊື່ ແລ້ວໃຊ້ກຳປັ້ນທຸບຂາຄ່ອຍໆ, ຫຼັງຈາກນັ້ນເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ຍ່າງຄືພີ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ຍ່າງຄືພີ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນອນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນອນໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນອນ: ຕຽງ, ມຸ້ງ, ໝອນ, ຜ້າຫົ່ມ, ສາດ, ຕູ້.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນອນ: ຕຽງ, ມຸ້ງ, ໝອນ, ຜ້າຫົ່ມ, ສາດ, ຕູ້ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ,

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູ ສົນທະນາກັບເດັກກ່ຽວກັບການຮັກສາຄວາມສະອາດຂອງຫ້ອງນອນ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ຢູ່ໃນແຜ່ນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນອນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ອົດທົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນອນ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີ ແລະ ຕໍ່ບລັອກເປັນຮູບເຄື່ອງໃຊ້ໃນຫ້ອງນອນຕາມຈິນຕະນາການຢ່າງມ່ວນຊື່ນ.
3. ຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນອນ, ເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
2. ການຫຼິ້ນເຄື່ອງດົນຕີ: ຕີກອງ, ດີດກີຕາ, ສັ່ນກະແຊັກ, ຈັບໄມໂຄຣໂຟນຮ້ອງເພງ, ຕໍ່ບລັອກເປັນ ຮູບເຄື່ອງໃຊ້ໃນຫ້ອງນອນ ຕາມຈິນຕະນາການ.
3. ການຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນອນ: ຕຽງ, ມຸ້ງ, ໝອນ, ຜ້າຫົ່ມ, ສາດ, ຕູ້; ເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ເຄື່ອງດົນຕີຈິງ ຫຼື ຈຳລອງ ກອງ, ກີຕາ, ກະແຊັກ, ໄມໂຄຣໂຟນ, ຊຸດ ໄມ້ບລັອກ ຫຼື ບລັອກປາລາສະຕິກ.
2. ມຸມເກມການສຶກສາ: ແຜ່ນເກມຈັບຄູ່ຄືທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນອນ: ຕຽງ, ມຸ້ງ, ໝອນ, ຜ້າຫົ່ມ, ສາດ, ຕູ້, ແຜ່ນເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ຮູບວົງມົນ, ສາມແຈ, ສີ່ແຈ, ຈະຕຸລັດ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ ແລະ ຕໍ່ບລັອກເປັນຮູບເຄື່ອງໃຊ້ໃນຫ້ອງນອນຕາມ ຈິນຕະນາການ.
3. ຄວາມຖືກຕ້ອງໃນການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນອນ, ຫຼິ້ນເກມຈັບຄູ່ຮູບພາບທີ່ສົມບູນກັບຮູບພາບທີ່ແຍກສ່ວນ.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ຍົກເຕົ້າດດອກໄມ້ວາງໃສ່ໂຕະ, ເປີດໂທລະພາບແລ້ວນັ່ງເບິ່ງ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານແຂນ ແລະ ຂາ: ທ່າໂຄ້ງແຂນຂວາໄປທາງຊ້າຍ, ໂຄ້ງແຂນຊ້າຍໄປທາງຂວາ, ທ່າຢືນຂາດຽວ, ຍົກຂາຂຶ້ນທາງໜ້າ, ພ້ອມທັງເອົາມືຈັບໄວ້ (ຜັດປ່ຽນກັນ).
2. ໃຫ້ເດັກນ້ອຍແລ່ນຊິກແຊັກ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍຫຼັບຕາເອົາແຂນລົງຕາມຕົນຕົວ, ເອົາຂາໄຂ່ວກັນ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກໍາວົງມົນ

## ຫົວຂໍ້: ຫ້ອງຮັບແຂກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງຮັບແຂກໄດ້ຖືກຕ້ອງ.
2. ເວົ້າຄໍາສັບ, ປະໂຫຍກຕາມເນື້ອໃນບົດຄໍາຄ່ອງ ແລະ ເລົ່າຄໍາຄ່ອງໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງຮັບແຂກ.

- ເຄື່ອງໃຊ້: ໂຕະ, ຕັ່ງ, ຕູ້ໂຊ, ເຕົ້າດອກໄມ້, ໂທລະພາບ, ຕັ່ງນອນ ຫຼື ໂຊຟາ.
- ຄຸນປະໂຫຍດ: ໃຊ້ໄວ້ເປັນບ່ອນນັ່ງຮັບແຂກໃນເວລາແຂກມາເຮືອນ ຫຼື ຄົນໃນຄອບຄົວນັ່ງລົມກັນ ແລະ ນັ່ງເບິ່ງໂທລະພາບ.
- ການຮັກສາຄວາມສະອາດ: ປັດກວາດ, ເຊັດຖູ ແລະ ຈັດວາງເຄື່ອງໃຊ້ໃຫ້ເປັນລະບຽບ.

2. ການເວົ້າຄໍາສັບ, ປະໂຫຍກ ແລະ ເລົ່າຄໍາຄ່ອງ ຫ້ອງຮັບແຂກ; ບັດຄໍາສັບ: ຫ້ອງຮັບແຂກ, ສະອາດ, ຮັກສາ, ເຊັດຖູ, ຍ້ອງຍໍ, ດຸໝັ່ນ; ບັດປະໂຫຍກ: ຫ້ອງຮັບແຂກ ເປັນຫ້ອງສະອາດ, ຂ້ອຍເຊັດຖູຫ້ອງຮັບແຂກ, ຫຼານນ້ອຍດຸໝັ່ນ, ຂ້ອຍຮັບແຂກແທນພໍ່ແມ່, ແມ່ຂອງຂ້ອຍ ຍ້ອງຍໍຊົມເຊີຍ.

### III. ສື່ການຮຽນ-ການສອນ

1. ບົດຄໍາຄ່ອງ ຫ້ອງຮັບແຂກ (ເບິ່ງປຶ້ມຄູ່ມືຄູ).
2. ຮູບພາບ: ໂຕະ, ຕັ່ງ, ຕູ້ໂຊ, ເຕົ້າດອກໄມ້, ໂທລະພາບ, ຕັ່ງນອນ ຫຼື ໂຊຟາ, ເດັກນ້ອຍປັດກວາດຫ້ອງຮັບແຂກ, ເດັກນ້ອຍເຊັດຖູຫ້ອງຮັບແຂກ, ເດັກນ້ອຍເຊັດໂຕະ ແລະ ຕັ່ງ, ປ້ານັ່ງຕັ່ງນອນເບິ່ງໂທລະພາບ, ພໍ່ ແລະ ແມ່ຂ້ອຍນັ່ງຢູ່ໂຊຟາ.

### IV. ກິດຈະກໍາການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງໃຊ້ໃນຫ້ອງນອນ.
2. ໃຫ້ເດັກນ້ອຍເວົ້າຄໍາສັບ, ປະໂຫຍກ, ເລົ່າຄໍາຄ່ອງ ແລະ ສົນທະນາຕາມເນື້ອໃນບົດຄໍາຄ່ອງ.
3. ໃຫ້ເດັກນ້ອຍສັງເກດຮູບພາບເຄື່ອງໃຊ້ໃນຫ້ອງຮັບແຂກ, ສົນທະນາກ່ຽວກັບຊື່ເຄື່ອງໃຊ້, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຫ້ອງຮັບແຂກ.
4. ໃຫ້ເດັກນ້ອຍເວົ້າຄືນຊື່ເຄື່ອງໃຊ້ໃນຫ້ອງຮັບແຂກ, ປະໂຫຍດ, ການບົວລະບັດຮັກສາ, ເວົ້າຄໍາສັບ ແລະ ປະໂຫຍກ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຮັກສາຄວາມສະອາດຫ້ອງຮັບແຂກ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງຮັບແຂກ.
2. ຄວາມຊັດເຈນໃນການເວົ້າຄໍາສັບ, ປະໂຫຍກ ແລະ ເລົ່າຄໍາຄ່ອງ.

# ກິດຈະກໍາສິລະປະສ້າງສັນ

## ຫົວຂໍ້: ຕັດ, ຕິດຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕັດ-ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້ໄດ້ຖືກຕ້ອງ.
2. ຕັດ, ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້ໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຕັດ-ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້.

### II. ເນື້ອໃນຕົ້ນຕໍ

ການຕັດ, ຕິດຮູບພາບ ໂຫລະພາບ ແລະ ໂຖດອກໄມ້.

### III. ສື່ການຮຽນ-ການສອນ

1. ມີດຕັດປາຍມົນ.
2. ກາວສໍາເລັດຮູບ ຫຼື ກາວເຂົ້າໜຽວຕົ້ມ.
3. ຮູບພາບໂຫລະພາບ ແລະ ໂຖດອກໄມ້ ແລະ ແບບຮູບພາບໂຫລະພາບ, ໂຖດອກໄມ້ທີ່ຕັດ, ຕິດແລ້ວ, ຊາມນໍ້າ, ຜ້າເຊັດມື ແລະ ສະບູ.

### IV. ກິດຈະກໍາການຮຽນ-ການສອນ

1. ແນະນໍາໃຫ້ເດັກນ້ອຍເຮັດທ່າທາງຕັດເຈ້ຍ, ຢິບ, ຢີກ, ຫຍຸມ.
2. ໃຫ້ເດັກນ້ອຍສັງເກດຮູບພາບໂຫລະພາບ, ໂຖດອກໄມ້, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຮູບພາບຕັດ-ຕິດ.
3. ນາຍຄູແນະນໍາ, ສາທິດກ່ຽວກັບວິທີ, ຂັ້ນຕອນການຕັດ-ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍແນະນໍາເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຕັດ-ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບໃຫ້ເດັກນ້ອຍມີຄວາມສາມັກຄີ, ມີຄວາມອົດທົນ, ຮັກຄວາມສະອາດ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕັດ-ຕິດຮູບພາບ ໂຫລະພາບ ແລະ ໂຖດອກໄມ້.
2. ຄວາມຄວາມຈົບງາມໃນການຕັດ, ຕິດຮູບພາບ ໂຫລະພາບ ແລະ ໂຖດອກໄມ້. .
3. ຄວາມອົດທົນໃນການຕັດ, ຕິດຮູບພາບໂຫລະພາບ ແລະ ໂຖດອກໄມ້. .

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນເກັບບານຕາມສີກຳນົດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນເກັບບານຕາມສີກຳນົດໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນເກັບບານຕາມສີກຳນົດໄດ້ຖືກຕ້ອງ.
3. ມີຄວາມຄ່ອງແຄ້ວວ່ອງໄວ ໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນເກັບບານຕາມສີກຳນົດ.

### III. ສື່ການຮຽນ-ການສອນ

1. ໝາກບານນ້ອຍສີແດງ, ເຫຼືອງ ຫຼື ບານເຮັດດ້ວຍເຈ້ຍສີແດງ, ເຫຼືອງ.
2. ກອງ ຫຼື ໝາກຫວີດ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍລຽນແຖວຕັ້ງ ແລ້ວຍ່າງແກວ່ງແຂນອ້ອມບໍລິເວນເດີ່ນ.
2. ນາຍຄູສະເໜີ ແບບຫຼິ້ນແຂ່ງຂັນ ເກັບບານຕາມສີກຳນົດ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນ ເກັບບານຕາມສີກຳນົດ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນໃຫ້ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ບໍ່ຍາດເຄື່ອງຫຼິ້ນກັນໃນການຫຼິ້ນ ແລະ ເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ເດັກນ້ອຍຢືນດີດນິ້ວມື, ຫຼັງຈາກນັ້ນໃຫ້ເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ:

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນ ເກັບບານຕາມສີກຳນົດ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນ ເກັບບານຕາມສີກຳນົດ.
3. ຄວາມຄ່ອງແຄ້ວ ແລະ ວ່ອງໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບເຄື່ອງໃຊ້ໃນຫ້ອງຮັບແຂກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບເຄື່ອງໃຊ້ໃນຫ້ອງຮັບແຂກຢ່າງຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບເຄື່ອງໃຊ້ໃນຫ້ອງຮັບແຂກ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບເຄື່ອງໃຊ້ໃນຫ້ອງຮັບແຂກ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນອນ: ຕຽງ, ມຸ້ງ, ໝອນ, ຜ້າຫົ່ມ, ສາດ, ຕູ້.
3. ບົດຄຳຄ່ອງ ຫ້ອງຮັບແຂກ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫ້ອງຮັບແຂກ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບເຄື່ອງໃຊ້ໃນຫ້ອງ ຮັບແຂກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອ ໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບເຄື່ອງໃຊ້ໃນຫ້ອງຮັບແຂກ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຕັດ, ຕິດຮູບພາບ ແລະ ປັ້ນດິນໄດ້ຖືກຕ້ອງ.
3. ຫຼິ້ນບົດບາດສົມມຸດເປັນພໍ່ ແມ່, ລູກ ແລະ ເປັນຕົວລະຄອນໃນບົດນິທານຢ່າງມ່ວນຊື່ນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ.
2. ການຕັດຕິດຮູບພາບໂທລະພາບ ແລະ ໂຖດອກໄມ້, ປັ້ນດິນເປັນຮູບຈອງ.
3. ການຫຼິ້ນບົດບາດສົມມຸດເປັນພໍ່ແມ່, ລູກຊ່ວຍກັນອະນາໄມ ແລະ ເກັບມ້ຽນເຄື່ອງໃຊ້ ໃນຫ້ອງຮັບແຂກ, ເປັນຕົວລະຄອນ ໃນບົດນິທານເລື່ອງ ຄອບຄົວກະຕ່າຍ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ມີດຕັດປາຍມົນ, ກາວສຳລັບຕິດ, ດິນປັ້ນ ຫຼື ແປ້ງສຳລັບປັ້ນ, ເສື້ອກັນເປື້ອນ, ຜ້າຮອງ, ຊາມນ້ຳ, ສະບູ, ຜ້າເຊັດມື, ຮູບພາບໂທລະພາບ ແລະ ໂຖດອກໄມ້, ຮູບຈອງທີ່ປັ້ນແລ້ວ.
2. ມຸມບົດບາດສົມມຸດ: ເຄື່ອງຈິງ ຫຼື ຈຳລອງຟອຍກວາດພື້ນ, ຟອຍປັດໃຍແມງມຸມ, ຟອຍປັດຝຸ່ນ, ຫ້ອງຮັບແຂກຈຳລອງ.
3. ບົດຄຳຄ່ອງ ຫ້ອງຮັບແຂກ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫ້ອງຮັບແຂກ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຕັດຕິດຮູບໂທລະພາບ, ໂຖດອກໄມ້, ປັ້ນດິນເປັນຮູບເຄື່ອງໃຊ້ໃນເຮືອນ.
3. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນພໍ່, ແມ່, ລູກ, ເປັນຕົວລະຄອນໃນບົດນິທານ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳລ່ອງ ຫ້ອງຮັບແຂກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ ຫ້ອງຮັບແຂກ.

### III. ສື່ການຮຽນ-ການສອນ

1. ບົດລຳລ່ອງ ຫ້ອງຮັບແຂກ.
2. ທ່າຫັດກາຍຍະບໍລິຫານຂາ ແລະ ທ້ອງ-ຫຼັງ ເບິ່ງປື້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານຂາ ແລະ ທ້ອງ-ຫຼັງ: ທ່າໂຢ່ງໂຢ້ຂາລົງ ແລະ ທ່າກົ້ມຕົວລົງທາງໜ້າ, ເງີຍຂຶ້ນ, ແອນຕົວໄປທາງຫຼັງ.
2. ໃຫ້ເດັກນ້ອຍເຕັ້ນຂາດຽວໄປທາງໜ້າ, ທາງຫຼັງຕາມສຽງເຄາະ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາຊື່ໄປທາງໜ້າເອົາມືທັງສອງເບື້ອງຄໍ່າພື້ນທາງຫຼັງ, ເງີຍໜ້າຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຫ້ອງແຕ່ງກິນ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງແຕ່ງກິນໄດ້ຖືກຕ້ອງ.
2. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ບອກເຄື່ອງໃຊ້ທີ່ເປັນຮູບວົງມົນໄດ້ຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງແຕ່ງກິນ:

- ເຄື່ອງໃຊ້: ຖ້ວຍ, ຈານ, ບ່ວງ, ຈອງ, ສ້ອມ, ໝໍ້, ຫວດ, ໝໍ້ໜຶ້ງເຂົ້າ, ພາເຂົ້າ, ເຕົາໄຟ, ຕິບເຂົ້າ, ຂຽງ, ມີດ ແລະ ຜ້າ.
- ຄຸນປະໂຫຍດ: ໃຊ້ໄວ້ເປັນບ່ອນຄົວກິນ, ບາງຄັ້ງຄາວກໍນັ່ງກິນເຂົ້າ.
- ການຮັກສາຄວາມສະອາດ: ປັດກວາດ, ເຊັດຖູ, ລ້າງ ແລະ ເກັບມ້ຽນເຄື່ອງໃຊ້ໃຫ້ຖືກບ່ອນ.

2. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ; ຖ້ວຍ, ຈານ, ບ່ວງ, ໝໍ້ໜຶ້ງ, ຕິບເຂົ້າ, ມີດ, ເຕົາໄຟ; ບັດປະໂຫຍກ: ເດັກນ້ອຍໄຂຝາຕິບເຂົ້າ, ເດັກນ້ອຍໃຊ້ບ່ວງຕັກອາຫານ, ເດັກນ້ອຍຕັກແກງໃສ່ຖ້ວຍ.
3. ຮູບເລຂາຄະນິດ ຮູບວົງມົນ.

## III. ສື່ການຮຽນ-ການສອນ

1. ຖ້ວຍ, ຈານ, ບ່ວງ, ຈອງ, ສ້ອມ, ໝໍ້.
2. ຮູບພາບ: ໝໍ້, ຫວດ, ໝໍ້ໜຶ້ງເຂົ້າ, ພາເຂົ້າ, ເຕົາໄຟ, ຕິບເຂົ້າ, ຂຽງ, ມີດ ຜ້າ, ເດັກນ້ອຍໄຂຝາຕິບເຂົ້າ, ເດັກນ້ອຍໃຊ້ບ່ວງຕັກອາຫານ, ເດັກນ້ອຍຕັກແກງໃສ່ຖ້ວຍ.

## IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງໃຊ້ໃນຫ້ອງແຕ່ງກິນທີ່ເດັກນ້ອຍເຄີຍເຫັນ.
2. ໃຫ້ເດັກນ້ອຍສັງເກດເຄື່ອງໃຊ້ໃນຫ້ອງແຕ່ງກິນ, ສົນທະນາກ່ຽວກັບຊື່, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດເຄື່ອງໃຊ້ໃນຫ້ອງແຕ່ງກິນ.
3. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍສັງເກດເຄື່ອງໃຊ້ໃນຫ້ອງແຕ່ງກິນແລ້ວບອກເຄື່ອງໃຊ້ທີ່ເປັນຮູບວົງມົນ.
5. ໃຫ້ເດັກນ້ອຍເວົ້າຄືນຊື່ເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງແຕ່ງກິນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການຮັກສາຄວາມສະອາດຫ້ອງແຕ່ງກິນ ແລະ ຄວາມສາມັກຄີ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງໃຊ້, ຄຸນປະໂຫຍດ ແລະ ການຮັກສາຄວາມສະອາດຫ້ອງແຕ່ງກິນ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
3. ຄວາມຖືກຕ້ອງໃນການບອກເຄື່ອງໃຊ້ທີ່ເປັນຮູບວົງມົນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການປັ້ນດິນເປັນຮູບຖ້ວຍໄດ້ຖືກຕ້ອງ.
2. ປັ້ນດິນເປັນຮູບຖ້ວຍໄດ້ຄ້າຍຄື.
3. ແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນຮູບຖ້ວຍ.

### III. ສື່ການຮຽນ-ການສອນ

1. ດິນປັ້ນ ຫຼື ແປ້ງສຳລັບປັ້ນ.
2. ແຜ່ນຮອງປັ້ນ.
3. ເສື້ອກັນເປື້ອນ.
4. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.

### IV. ກິດຈະກຳການຮຽນ-ການສອນ

1. ແນະນຳໃຫ້ເດັກນ້ອຍເຮັດທ່າທາງປັ້ນດິນ, ລີ້ງດິນ, ນວດດິນ.
2. ໃຫ້ເດັກນ້ອຍສັງເກດຮູບຖ້ວຍທີ່ປັ້ນແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການປັ້ນດິນ.
3. ນາຍຄູແນະນຳ, ສາທິດວິທີ ແລະ  ຂັ້ນຕອນການປັ້ນດິນເປັນຮູບຖ້ວຍ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການປັ້ນດິນເປັນຮູບຖ້ວຍ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບໃຫ້ເດັກນ້ອຍມີຄວາມສາມັກຄີ, ມີຄວາມອົດທົນ, ຮັກຄວາມສະອາດ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການປັ້ນດິນເປັນຮູບຖ້ວຍ.
2. ຄວາມຄ້າຍຄືໃນການປັ້ນຮູບຖ້ວຍ.
3. ການແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນພິມຊາຍເປັນຮູບບ່ວງ, ຖ້ວຍ ແລະ ຈານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນພິມຊາຍເປັນຮູບບ່ວງ, ຖ້ວຍ ແລະ ຈານໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມື ແລະ ແຂນ ໃຫ້ມີຄວາມແຂງແຮງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນຊາຍ: ພິມຊາຍເປັນຮູບບ່ວງ, ຖ້ວຍ ແລະ ຈານ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳສະອາດ, ໂອ, ຊາມ, ຜ້າເຊັດມື, ອ່າງດິນຊາຍ, ຊວ້ານນ້ອຍ, ແມ່ພິມຮູບຖ້ວຍ, ບ່ວງ ແລະ ຈານ
2. ໝາກຫວີດ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍລຽນແຖວ ແລະ ຍ່າງຕົບມືໄປຂ້າງຊ້າຍ3 ກ້າວ-ຂ້າງຂວາ3ກ້າວ.
2. ນາຍຄູສະເໜີການຫຼິ້ນພິມຊາຍເປັນຮູບບ່ວງ, ຖ້ວຍ, ຈານ, ສາທິດວິທີ ແລະ ຂັ້ນຕອນ ໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນ: ພິມຊາຍເປັນຮູບບ່ວງ, ຖ້ວຍ, ຈານ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ໃຫ້ມີຄວາມອົດທົນໃນເວລາຫຼິ້ນ ແລະ ຫຼິ້ນແລ້ວເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍຢືນສັ່ນແຂ່ງສັ່ນຂາ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນພິມຊາຍເປັນຮູບບ່ວງ, ຖ້ວຍ ແລະ ຈານ.
2. ຄວາມແຂງແຮງຂອງກ້າມຊີ້ນມື ແລະ ແຂນ ໃນເວລາພິມຊາຍເປັນຮູບບ່ວງ, ຖ້ວຍ ແລະ ຈານ
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແບະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນໄດ້ຖືກຕ້ອງ.
3. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ: ໂຕະ-ຕັ່ງ, ຈອກ-ຈານຮອງ, ດອກໄມ້-ເຕົ້າດອກໄມ້, ບ່ວງ-ສ້ອມ, ຖ້ວຍ-ຈານ, ຕູ້-ເສື້ອ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ: ໂຕະ-ຕັ່ງ, ຈອກ-ຈານຮອງ, ດອກໄມ້-ເຕົ້າດອກໄມ້, ບ່ວງ-ສ້ອມ, ຖ້ວຍ-ຈານ, ຕູ້-ເສື້ອ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບເຄື່ອງໃຊ້ໃນຫ້ອງຮັບແຂກ.
3. ບົດຄຳຄ່ອງ ຫ້ອງຮັບແຂກ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫ້ອງຮັບແຂກ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5, ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການໃຊ້ຄຳເວົ້າທີ່ສຸພາບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ.
3. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຕໍ່ບູ້ອກເປັນຄົກ, ສາກຕາມແບບ ແລະ ພິມຕົວເລກ 0-5 ໃສ່ອ່າງດິນຊາຍໄດ້ຖືກຕ້ອງ.
3. ເວົ້າປະໂຫຍກຕາມຮູບພາບ ແລະ ອ່ານຄຳສັບຕາມຮູບພາບໄດ້ຊັດເຈນ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມ, ເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
2. ການຕໍ່ບູ້ອກຮູບສີ່ແຈ, ທໍ່ກົມຄົກ, ສາກຕາມແບບ ແລະ ພິມຕົວເລກ 0-5 ໃສ່ອ່າງດິນຊາຍ.
3. ການເວົ້າປະໂຫຍກຕາມຮູບພາບ: ເດັກນ້ອຍໄຂຝາຕິບເຂົ້າ, ເດັກນ້ອຍໃຊ້ບ່ວງຕັກອາຫານ, ເດັກນ້ອຍຕັກແກງໃສ່ຖ້ວຍ, ເດັກນ້ອຍດັງໄຟໃສ່ໝໍ້ໜຶ້ງເຂົ້າ, ເດັກນ້ອຍເອົາເຂົ້າໃສ່ຫວດ, ເດັກນ້ອຍຈັບມີດຊອຍຊີ້ນໃສ່ຂຽງ, ອ່ານຄຳສັບຕາມຮູບພາບ: ຖ້ວຍ, ຈານ, ບ່ວງ, ຈອງ, ສ້ອມ, ໝໍ້, ຫວດ, ໝໍ້ໜຶ້ງເຂົ້າ, ພາ ເຂົ້າ, ເຕົາໄຟ, ຕິບເຂົ້າ, ຂຽງ, ມີດ ແລະ ຜ້າ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ຊຸດບູ້ອກ ຫຼື ບູ້ອກປາລາສະຕິກ, ແບບພິມຕົວເລກ 0-5 ອ່າງດິນຊາຍ.
2. ມຸມອ່ານ: ຮູບພາບເດັກນ້ອຍໄຂຝາຕິບເຂົ້າ, ເດັກນ້ອຍໃຊ້ບ່ວງຕັກອາຫານ, ເດັກນ້ອຍຕັກແກງໃສ່ຖ້ວຍ, ເດັກນ້ອຍດັງໄຟໃສ່ໝໍ້ໜຶ້ງເຂົ້າ, ເດັກນ້ອຍເອົາເຂົ້າໃສ່ຫວດ, ເດັກນ້ອຍຈັບມີດຊອຍຊີ້ນໃສ່ຂຽງ; ຮູບພາບ: ຖ້ວຍ, ຈານ, ບ່ວງ, ຈອງ, ສ້ອມ, ໝໍ້, ຫວດ, ໝໍ້ໜຶ້ງເຂົ້າ, ພາເຂົ້າ, ເຕົາໄຟ, ຕິບເຂົ້າ, ຂຽງ, ມີດ, ຜ້າ ແລະ ກະດານສຽບ ຫຼື ຕິດ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຕໍ່ບູ້ອກຕາມແບບ ແລະ ພິມຕົວເລກ 0-5 ໃສ່ອ່າງດິນຊາຍ.
3. ຄວາມຊັດເຈນໃນການເວົ້າປະໂຫຍກຕາມຮູບພາບ ແລະ ອ່ານຄຳສັບຕາມຮູບພາບ.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມການສັນຍານຍົກຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມການສັນຍານຍົກຮູບພາບໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມການສັນຍານຍົກຮູບພາບ:

- ຍົກຮູບພາບເດັກນ້ອຍສະຫົວສະແດງທ່າທາງສະຫົວ.
- ຍົກຮູບພາບແປງຖູແຂ້ວສະແດງທ່າທາງຖູແຂ້ວ.
- ຍົກຮູບພາບເດັກນ້ອຍອາບນ້ຳວສະແດງທ່າທາງອາບນ້ຳ.

### III. ສື່ການຮຽນ-ການສອນ

1. ຮູບພາບເດັກນ້ອຍສະຫົວ, ແປງຖູແຂ້ວ, ອາບນ້ຳ.
2. ທ່າຫັດກາຍຍະບໍລິຫານທ້ອງ-ຫຼັງ ແລະ ຕີນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍຍະບໍລິຫານທ້ອງ-ຫຼັງ ແລະ ຕີນ: ກົ້ມຕົວລົງທາງໜ້າ, ເງີຍຂຶ້ນ, ແອນຕົວໄປ ທາງຫຼັງ ແລະ ທ່າເຢ່ງເຢ້ຂຶ້ນລົງ.
2. ໃຫ້ເດັກນ້ອຍຍ່າງໂຢ່ງໂຢະເປັນ 2 ແຖວຄູ່.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມການສັນຍານຍົກຮູບພາບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມການສັນຍານຍົກຮູບພາບ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມການສັນຍານຍົກຮູບພາບ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຫ້ອງອາບນ້ຳ ແລະ ຫ້ອງວິດຖ່າຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງໃຊ້, ຄຸນປະໂຫຍດ, ການຮັກສາຄວາມສະອາດຫ້ອງນ້ຳ ແລະ ຫ້ອງວິດຖ່າຍໄດ້ຖືກຕ້ອງ.
2. ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດນິທານໄດ້ຊັດເຈນ.
3. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງໃຊ້, ຄຸນປະໂຫຍດ, ການຮັກສາຄວາມສະອາດຫ້ອງນ້ຳ ແລະ ຫ້ອງວິດຖ່າຍ:

- ເຄື່ອງໃຊ້: ໄຫນ້ຳ ຫຼື ອ່າງນ້ຳ, ຄຸ, ໂອ, ສະບູ, ຢາສະຜົມ, ຟອຍຖູແຂ້ວ ແລະ ຢາຖູແຂ້ວ.
- ຄຸນປະໂຫຍດ: ໃຊ້ໄວ້ເປັນບ່ອນອາບນ້ຳ, ຖ່າຍໜັກ, ຖ່າຍເບົາ.
- ການຮັກສາຄວາມສະອາດ: ເຊັດຖູ, ລ້າງໃຫ້ສະອາດ ແລະ ເກັບມ້ຽນເຄື່ອງໃຊ້ໃຫ້ຖືກບ່ອນ.

2. ການເວົ້າຄຳສັບ, ປະໂຫຍກ ແລ

ະ ຟັງນິທານເລື່ອງ ຖ່າຍໃຫ້ຖືກບ່ອນ; ບັດຄຳສັບ: ເຊັດ, ໂອ, ສະອາດ, ສະບູ, ອາຫານ, ຊະຊາຍ; ທ້າວ ຄຳພາຖ່າຍຊະຊາຍ, ບັດປະໂຫຍກ: ທ້າວ ທອງເພັດ ບອກຄຳພາຖ່າຍ ໃສ່ວິດ, ນັ່ງຖ່າຍຊື່ຮູວິດ, ທ່ານໝໍ ບອກຄຳພາໃຊ້ເຈ້ຍເຊັດກົ້ນ.

### III. ສື່ການຮຽນ-ການສອນ

1. ບົດນິທານເລື່ອງ ຖ່າຍໃຫ້ຖືກບ່ອນ (ເບິ່ງປຶ້ມຄູ່ມືຄູ).
2. ຄຸ, ໂອ, ສະບູ, ຢາສະຜົມ, ຟອຍຖູແຂ້ວ ແລະ ຢາຖູແຂ້ວ.
3. ຮູບພາບ: ໄຫນ້ຳ ຫຼື ອ່າງນ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການຮັກສາຄວາມສະອາດເຄື່ອງໃຊ້ໃນຫ້ອງແຕ່ງກິນ.
2. ໃຫ້ເດັກນ້ອຍເວົ້າຄຳສັບ, ປະໂຫຍກ, ເລົ່ານິທານ ແລະ ສົນທະນາຕາມເນື້ອໃນບົດນິທານ.
3. ໃຫ້ເດັກນ້ອຍສັງເກດເຄື່ອງໃຊ້ໃນຫ້ອງນ້ຳ, ສົນທະນາກ່ຽວກັບຊື່, ຄຸນປະໂຫຍດ, ການຮັກສາຄວາມສະອາດ ຫ້ອງນ້ຳ ແລະ ວິດຖ່າຍ.
4. ໃຫ້ເດັກນ້ອຍເວົ້າຄືນຊື່ເຄື່ອງໃຊ້ໃນຫ້ອງນ້ຳ, ເວົ້າຄຳສັບ ແລະ ປະໂຫຍກຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບມາລະຍາດໃນການຟັງນິທານ ແລະ ການຮັກສາຄວາມສະອາດຫ້ອງນ້ຳ.

### V. ການວັດ ແລະ ປະເມີນຜົນ.

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກ ເຄື່ອງໃຊ້, ຄຸນປະໂຫຍດ, ການຮັກສາຄວາມສະອາດຫ້ອງນ້ຳ ແລະ ຫ້ອງວິດ ຖ່າຍ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດນິທານ.
3. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ເປົ່າສີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນການເປົ່າສີເປັນຮູບພາບຕ່າງໆໄດ້ຖືກຕ້ອງ.
2. ເປົ່າສີເປັນຮູບພາບຕ່າງໆໄດ້ສະອາດງາມ.
3. ເຝິກໃຫ້ເດັກມີຄວາມລະມັດລະວັງໃນການເປົ່າສີ.

### II. ເນື້ອໃນຕົ້ນຕໍ

ການເປົ່າສີເປັນຮູບພາບຕ່າງໆ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ ແລະ ແບບຮູບທີ່ເປົ່າສີແລ້ວ.
2. ທໍ່ດູດ.
3. ສີນໍ້າ.

### IV. ກິດຈະກຳການຮຽນ-ການສອນ

1. ແນະນຳໃຫ້ເດັກນ້ອຍເຮັດທ່າທາງແກວ່ງມືຊ້າຍ, ຂວາ ແລະ ຫາຍໃຈເຂົ້າ, ອອກຊ້າໆ.
2. ໃຫ້ເດັກນ້ອຍສັງເກດຮູບພາບຕ່າງໆທີ່ເປົ່າສີແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການເປົ່າສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການເປົ່າສີເປັນຮູບພາບຕ່າງໆ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ຂັ້ນຕອນການເປົ່າສີເປັນຮູບພາບຕ່າງໆ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບໃຫ້ເດັກນ້ອຍມີຄວາມສາມັກຄີ, ມີຄວາມອົດທົນ, ຮັກຄວາມສະອາດ ແລະ ຊ່ວຍເຫຼືອກັນເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການເປົ່າສີເປັນຮູບພາບຕ່າງໆ.
2. ຄວາມສະອາດຈົບງາມໃນການເປົ່າສີເປັນຮູບຕ່າງໆ.
3. ຄວາມລະມັດລະວັງໃນການເປົ່າສີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງອັນໂຍນບ້ວງໃສ່ເປົ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນແຂ່ງອັນ ໂຍນບ້ວງໃສ່ເປົ້າໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງອັນໂຍນບ້ວງໃສ່ເປົ້າໄດ້ຖືກຕ້ອງ
3. ມີຄວາມອົດທົນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງອັນໂຍນບ້ວງໃສ່ເປົ້າ.

### III. ສື່ການຮຽນ-ການສອນ

1. ບ້ວງເຮັດດ້ວຍຜ້າ ຫຼື ເຮັດດ້ວຍເຈ້ຍ ແລະ ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຢືນຕົບມື ແລະ ນັບປາກເປົ່າ 1-30
2. ນາຍຄູສະເໜີແບບຫຼິ້ນແຂ່ງອັນໂຍນບ້ວງໃສ່ເປົ້າ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງອັນໂຍນບ້ວງໃສ່ເປົ້າ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນໃຫ້ມີຄວາມວ່ອງໄວໃນການຫຼິ້ນ ແລະ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ,
6. ໃຫ້ເດັກນ້ອຍນັ່ງລົງແລ້ວເອົາມືບີບຂາ, ຂຶ້ນຫາລຳຕົວ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງອັນໂຍນບ້ວງໃສ່ເປົ້າ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງອັນໂຍນບ້ວງໃສ່ເປົ້າ.
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນ້ຳໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນ້ຳ: ຢາສະຜົມ, ຢາຖູແຂ້ວ, ແປງຖູແຂ້ວ, ຄຸ, ໂອ, ສະບູ.

### III. ສື່ການຮຽນ-ການສອນ

1 ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນ້ຳ: ຢາສະຜົມ, ຢາຖູແຂ້ວ, ແປງຖູແຂ້ວ, ຄຸ, ໂອ, ສະບູ (ສຳລັບນາຍຄູ ແລະ ເດັກນ້ອຍ).

2. ແຜ່ນເກມເກົ່າ ເກມເກມຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ: ໂຕະ-ຕັ່ງ, ຈອກ-ຈານຮອງ, ດອກໄມ້-ເຕົ້າດອກໄມ້, ບ່ວງ-ສ້ອມ, ຖ້ວຍ-ຈານ, ຕູ້-ເສື້ອ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍ ກ່ຽວກັບການຮັກສາຄວາມສະອາດຫ້ອງນ້ຳ ແລະ ວິດຖ່າຍ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງນ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບເຄື່ອງໃຊ້ທີ່ຄືກັນ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ເປົ່າສີເປັນຮູບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ ແລະ ປັ້ນດິນເປັນຮູບຖ້ວຍໄດ້ຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ທີ່ໃຊ້ໃນຫ້ອງນໍ້າ, ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
2. ການເປົ່າສີເປັນຮູບຕ່າງໆຕາມຈິນຕະນາການ ແລະ ປັ້ນດິນເປັນຮູບຖ້ວຍ.
3. ການຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ທີ່ໃຊ້ໃນຫ້ອງນໍ້າ: ຢາສະຜົມ, ຢາຖູແຂ້ວ, ແປງຖູແຂ້ວ, ຄຸ, ໂອ, ສະບູ ແລະ ການຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ: ໂຕະ-ຕັ່ງ, ຈອກ-ຈານຮອງ, ດອກໄມ້-ເຕົ້າດອກໄມ້, ບ່ວງ-ສ້ອມ, ຖ້ວຍ-ຈານ, ຕູ້-ເສື້ອ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ສີນໍ້າ, ທໍ່ດູດ ຫຼື ຫຼອດໄມ້ໄຜ່, ເຈ້ຍຂາວ, ດິນປັ້ນ ຫຼື ແປ້ງສຳລັບປັ້ນ, ເສື້ອກັນເປື້ອນ, ຜ້າຮອງ, ຊາມນໍ້າ, ສະບູ, ຜ້າເຊັດມື.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ, ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງນໍ້າ: ຢາສະຜົມ, ຢາຖູແຂ້ວ, ແປງ ຖູແຂ້ວ, ຄຸ, ໂອ, ສະບູ ແລະ ເກມຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ: ໂຕະ-ຕັ່ງ, ຈອກ-ຈານຮອງ, ດອກໄມ້-ເຕົ້າດອກໄມ້, ບ່ວງ-ສ້ອມ, ຖ້ວຍ-ຈານ, ຕູ້-ເສື້ອ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການເປົ່າສີເປັນຮູບຕ່າງໆຕາມຈິນຕະນາການ ແລະ ຄວາມຖືກຕ້ອງໃນການປັ້ນດິນ.
3. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ; ຈັບຄູ່ຮູບພາບເຄື່ອງໃຊ້ທີ່ໃຊ້ຄູ່ກັນ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ເອກະສານອ້າງອີງ


## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

1. ປື້ມຄູ່ມືການຈັດກິດຈະກຳການສອນຊັ້ນອະນຸບານ ກະຊວງສຶກສາທິການ, ກົມສາມັນ ເດືອນ ມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
2. ປື້ມຫຼັກການສອນອະນຸບານ ກຸ່ມວິຊາຄູທົ່ວໄປ ສາຍສ້າງຄູອະນຸບານລະບົບ 2 ປີ, ປີທີ 1 ປີ 2008.
3. ປື້ມວິທີສອນກາຍະສຶກສາ ກຸ່ມວິທີສອນສາຍສ້າງຄູອະນຸບານລະບົບ 2 ປີ, ປີທີ 2 ປີ 2009.
4. ປື້ມແຜນຈັດປະສົບການຊັ້ນອະນຸບານ 1 ປີ, 2014 ພິມທີ່ບໍລິສັດລັດວິສາຫະກິດໂຮງພິມສຶກສາ.
5. ຄູ່ມືຄູພະລະສຶກສາ, ຫັດຖະກຳ, ສິລະປະກຳ, ສິລະປະດົນຕີຊັ້ນປະຖົມປີທີໜຶ່ງ ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

## ກິດຈະກຳວົງມົນ

6. ຄູ່ມືຄູການຈັດກິດຈະກຳການຮຽນ-ການສອນ ຊັ້ນອະນຸບານກົມສາມັນສຶກສາ ກະຊວງສຶກສາທິການ.
7. ຫຼັກການສອນເດັກກ່ອນໄວຮຽນລະບົບ 11+3 ກະຊວງສຶກສາທິການ ປີ 2008.
8. ປື້ມແຜນຈັດປະສົບການຊັ້ນອະນຸບານ 1 ປີ, 2014 ພິມທີ່ບໍລິສັດລັດວິສາຫະກິດໂຮງພິມສຶກສາ.

## ກິດຈະກຳສິລະປະສ້າງສັນ

9. ຄູ່ມືຄູກິດຈະກຳສ້າງສັນ (ສິລະປະສຶກສາ) ຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
10. ກະຊວງສຶກສາທິການ, ກົມສາມັນສຶກສາຄູ່ມືຄູກິດຈະກຳການສອນຊັ້ນອະນຸບານ ປີ 2005.
11. ກະຊວງສຶກສາທິການ, ປື້ມຫຼັກການສອນອະນຸບານ ລະບົບ 11+2 ປີ 2008 (ໜ້າ 93).

## ກິດຈະກຳການຫຼິ້ນກາງແຈ້ງ

12. ຄູ່ມືຄູ ກິດຈະກຳກາງແຈ້ງ ຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
13. ຄູ່ມືຄູ ກິດຈະກຳການສອນ ຊັ້ນອະນຸບານ ກະຊວງສຶກສາ ປີ 1990 ໜ້າທີ 102,105,106,131.
14. ປື້ມແບບຮຽນວິຊາຫຼັກການສອນເດັກກ່ອນໄວຮຽນລະບົບ 11+2 ກົມສ້າງຄູ, ກະຊວງສຶກສາທິການ ປີ 2004 (ບົດທີ 11 ກິດຈະກຳກາງແຈ້ງ).

## ກິດຈະກຳເກມການສຶກສາ

15. ປື້ມແຜ່ນຈັດປະສົບການ ຊັ້ນອະນຸບານ 1 ເຫຼັ້ມ 1, ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ) ແລະ ປື້ມແຜນຈັດປະສົບການຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
16. ປື້ມວິຊາ: ຫຼັກການສອນ 11+3 ສົກຮຽນ 2008 (ກະຊວງສຶກສາທິການ-ກົມສ້າງຄູ).

## ກິດຈະກຳການຫຼິ້ນຕາມມຸມ

17. ປື້ມວິຊາຊອກຮູ້ສະພາບແວດລ້ອມ 11+3 ປີ 2008 (ກະຊວງສຶກສາທິການ-ກົມສ້າງຄູ).
18. ປື້ມແຜນຈັດປະສົບການຊັ້ນອະນຸບານ 1 ເຫຼັ້ມ 1 ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ) ແລະ ປື້ມແຜນຈັດປະສົບການຊັ້ນອະນຸບານສຶກສາປີທີ 1, ພິມປີ 2014.
19. ປື້ມການພັດທະນາໂຮງຮຽນຄຸນນະພາບ, ຄູ່ມືຄູສອນຫ້ອງກຽມປະຖົມ (ກະຊວງສຶກສາ 2010).